Lao Second Grade (Laotian Language)

*LAO.3646.00*

WINTER 2003

# ແບບສອນອ່ານ

# ພາສາລາວ

## ຊັ້ນປະຖົມປີທີ່ ໖

# LAO SECOND GRADE

LAO. [redacted]

FOLSOM CORDOVA UNIFIED SCHOOL DISTRICT
BILINGUAL OFFICE
CORDOVA LANE SCHOOL
2460 Cordova Lane
Rancho Cordova, California 95670
(916) 635-6811

#7

# ແບບສອບອ່ານພາສາລາວ

## LAO SECOND GRADE

PUBLISHED BY :

PRAGMATICS INTERNATIONAL, INC.

IN COOPERATION WITH UNHCR.

1981

# ພຣະຣາຊອານາຈັກລາວ

## ກະຊວງສຶກສາທິການ

ເຖິງ ນັກຮຽນແລະຄຣູ

ປຶ້ມເປັນຂອງ ມີຄຸນຄາມມາກ
ເພາະເປັນຮາກ ກົກເຄົ້າວິຊາ
ຂອງຄຣູບາ ອາຈານແຕ່ງໄວ້
ໃຫ້ຄົນໃຊ້ ປໂຍດອະນັນ
ຄວນພາກັນ ພຽນເພງຮັກສາ
ຢ່າໃຫ້ຝ່ ໃຫ້ສາບໃຫ້ສູນ
ໃຫ້ເປັນມູນ ພອກມາພາຍຊ້ອຍ
ໃຫ່ຽແລະນ້ອຍ ຮຽນແລ້ວຮ່ຳເພິງແດ່ເນີ.

ວຽງຈັນ
ຄ.ສ. ໑໙໖໕

# ສາລະບານ


๑. ໂຮງຮຽນ ..................................... ໜ້າ

໑. ໂຮງຮຽນເຮົາ ..................................... ໑
໒. ການຮຽນຂອງເຮົາຢູ່ໃນໂຮງຮຽນ ..................................... ໕
໓. ຂະບວນການບຸວະຊົນຢູ່ໃນໂຮງຮຽນ ..................................... ໘
໔. ສວນຂອງໂຮງຮຽນເຮົາ ..................................... ໑໔
໕. ໂຮງຮຽນແລະສະຖານທີ່ແວດລ້ອມ ..................................... ໑໗
໖. ປະວັດຂອງໂຮງຮຽນເຮົາ ..................................... ໒໒
໗. ໂຮງຮຽນມູລປະຖົມສຶກສາແລະໂຮງຮຽນປະຖົມສຶກສາບໍ່ຄົບຊຸດ ..................................... ໒໖
໘. ນັກຮຽນດີ ..................................... ໓໐
໙. ເຮືອງເບີຍອາຄົມເວລາເລງ ..................................... ໓໔

໒. ວັດ

໑໐. ວັດບ້ານເຮົາ ..................................... ໓໗
໑໑. ການອຸປຖັມວັດແລະສາສນາ ..................................... ໔໑
໑໒. ບຸນຕາມຣະດູປີ ..................................... ໔໕
໑໓. ຄວາມສະອາດຂອງວັດ ..................................... ໔໘
໑໔. ວຽກການຂອງພຣະສົງສາມະເນນຢູ່ໃນວັດ... ໕໒

໑໕. ປວັດບ້ານເຮົາ ........ ໕໖

## ໓. ຄອບຄົວ

໑໖. ພໍ່ແມ່ແລະຄອບຄົວຂ້ອຍ ........ ໖໐
໑໗. ເຮືອນຂອງຂ້ອຍ ........ ໖໓
໑໘. ວຽກການໃນຄອບຄົວຂ້ອຍ ........ ໖໗
໑໙. ສັດທີ່ເຮົາລ້ຽງ ........ ໗໑
໒໐. ການຫາລາຍໄດ້ຂອງຄອບຄົວຂ້ອຍ ........ ໗໕
໒໑. ຍາດພີ່ນ້ອງຂອງຄອບຄົວຂ້ອຍ ........ ໗໙
໒໒. ອ້າຍກົກແລະນ້ອງ ........ ໘໓
໒໓. ອ້າຍກົກແລະນ້ອງ (ຕໍ່) ........ ໘໖
໒໔. ແມ່ເຖົ້າກ່ອມຫຼານນ້ອຍ ........ ໘໙
໒໕. ຄວາມອ້ອນວອນຂອງນົກຍາງ ........ ໙໒

## ໔. ບ້ານ

໒໖. ທີ່ຢູ່ຂອງບ້ານເຮົາແລະຊາວບ້ານ ........ ໙໖
໒໗. ເຮືອນຂອງຊາວບ້ານເຮົາ ........ ໑໐໐
໒໘. ການທຳມາຫາກິນຂອງຊາວບ້ານເຮົາ ........ ໑໐໓
໒໙. ການປົກຄອງຂອງບ້ານເຮົາ ........ ໑໐໖
໓໐. ຫົນທາງຂອງບ້ານເຮົາ ........ ໑໑໐
໓໑. ຄວາມພົວພັນກັບຊາວບ້ານອື່ນ ........ ໑໑໓
໓໒. ຄວາມງາມຂອງບ້ານເກີດ ........ ໑໑໗

## ໕. ທົ່ງນາ

໓໓. ທົ່ງນາບ້ານເຮົາ ........ ໑໒໑
໓໔. ການປູກຝັງຕ່າງໆ ........ ໑໒໕
໓໕. ສັດທີ່ຊ່ອຍແຮງເຮົາ ........ ໑໒໙
໓໖. ສັດທີ່ເປັນອັນຕະລາຍແລະບໍ່ມີປໂຍດ ........ ໑໓໒
໓໗. ການປັບປຸງການປູກຝັງ ........ ໑໓໖
໓໘. ປໂຍດຂອງພືດປູກ ........ ໑໔໐
໓໙. ສັດທີ່ຄົນລ້ຽງ ........ ໑໔໔
໔໐. ເດັກລ້ຽງຄວາຍ ........ ໑໔໗

## ໖. ປ່າດົງ

໔໑. ປ່າດົງແຄ້ມບ້ານເຮົາ ........ ໑໕໑
໔໒. ສັດປ່າຢູ່ຕາມດົງບ້ານເຮົາ ........ ໑໕໕
໔໓. ປໂຍດຂອງໄມ້ໃນປ່າບ້ານເຮົາ ........ ໑໕໘
໔໔. ແຮ່ໂລຫະແລະຫີນໃນປະເທດເຮົາ ........ ໑໖໑
໔໕. ໜອງແລະລຳນ້ຳບ້ານເຮົາ ........ ໑໖໕
໔໖. ການຫາປາຂອງຊາວບ້ານ ........ ໑໖໙
໔໗. ປ່າດົງ ພູຜາ ລຳນ້ຳໃນປະເທດເຮົາ ແລະປະເທດໃກ້ຄຽງ ........ ໑໗໓
໔໘. ດອກບົວ ........ ໑໗໗

໗. ວິຊາຊ່າງ

໔໙. ວິຊາອາຊີບເພີ່ມເຕີມໃນຄອບຄົວ ..... ໑໘໐
໕໐. ວິຊາຊ່າງສີມືຢູ່ໃນບ້ານເຮົາ ..... ໑໘໔
໕໑. ເຕົາເຜົາຖ່ານ ..... ໑໘໗
໕໒. ການເອົາໄມ້ໄຜ່ມາໃຊ້ໃຫ້ເປັນປໂຍດ ..... ໑໙໑
໕໓. ການສືບຕໍ່ວິຊາຊ່າງສີມືເດີມ ..... ໑໙໕
໕໔. ການອຸສາຫະກັມແລະວິຊາຊ່າງສີມື ພາຍໃນປະເທດ ..... ໑໙໙

໘. ຖນົນຫົນທາງ

໕໕. ການຄະມະນາຄົມທາງບົກ ..... ໒໐໓
໕໖. ການຄະມະນາຄົມທາງນ້ຳ ..... ໒໐໗
໕໗. ການຄະມະນາຄົມທາງອາກາດ ..... ໒໑໑

໙. ວິທີການຂົນສົ່ງ

໕໘. ການຂົນສົ່ງທາງບົກ ..... ໒໑໕
໕໙. ຄວາມລະມັດລະວັງໃນການເດີນຕາມຖນົນ ..... ໒໑໘
໖໐. ການຂົນສົ່ງທາງນ້ຳ ..... ໒໒໒
໖໑. ການຂົນສົ່ງທາງອາກາດ ..... ໒໒໖

໑໐. ບ້ານເມືອງຂອງໝູ່ເພື່ອນແລະພີ່ນ້ອງ

໖໒. ບ້ານຂອງເພື່ອນນັກຮຽນດ້ວຍກັນ ..... ໒໒໙






## ໑. ໂຮງຮຽນເຮົາ

ໂຮງຮຽນເຮົາຕັ້ງຢູ່ຫຼັງບ້ານ ໃກ້ຫ້ວຍແລະແຄມທົ່ງນາ. ເດີ່ນໂຮງຮຽນເຮົາກວ້າງ ແລະມີຮົ້ວອ້ອມທັງສີ່ດ້ານ. ຢູ່ຕາມເດີ່ນແລະລຽບຮົ້ວ ພວກເຮົາໄດ້ປູກຕົ້ນໄມ້ ລຽນເປັນແຖວ ເພື່ອໄວ້ເປັນຮົ່ມ. ເດີ່ນນີ້ ຍັງບໍ່ທັນຮາບພຽງດີປານໃດ ແຕ່ຄູ ເພິ່ນກໍ່ພາພວກເຮົາແປງ ໄປນຳທຸກມື້ ພ້ອມທັງເຮັດສວນດອກໄມ້ໃສ່ໜ້າໂຮງຮຽນອີກ.

ໂຮງຮຽນເຮົາມີຄູຄົນດຽວ ເພິ່ນສອນສາມຊັ້ນໂຮມກັນ. ຢູ່ຊັ້ນ ປ ໑. ມີນັກຮຽນ ໒໖ ຄົນ ຊັ້ນ ປ ໒. ມີ ໑໘ ຄົນ ຊັ້ນ ປ ໓. ມີ ໑໒ ຄົນ ໂຮມທັງໝົດ ມີນັກຮຽນ ໕໖ ຄົນ

ມີຍິງ ໒໑ ຄົນ ແລະຊາຍ ໓໔ ຄົນ. ລູກສິດໂຮງຮຽນເຮົາບໍ່ໜັ້ນຂາດໂຮງຮຽນ ເວັ້ນໄວ້ແຕ່ ເວລາເຂົາເຈົ້າເຈັບປ່ວຍ. ເມື່ອມີຜູ້ໃດຜູ້ນຶ່ງ ຂາດໂຮງຮຽນ ກໍມີພໍ່ແມ່ ແລະອ້າຍເອື້ອຍ ຫຼື ໝູ່ເພື່ອນມາຄອບ ໃຫ້ຄູຊາບ.

ລູກສິດທີ່ມາໂຮງຮຽນເຮົາ ສ່ວນຫຼາຍ ຢູ່ກັບບ້ານເຮົານັ້ນເອງ. ນອກນັ້ນກໍແມ່ນເດັກ ທີ່ມາຈາກບ້ານໃກ້ຄຽງ ພວກຢູ່ບ້ານໃກ້ຄຽງ ເຂົາເຈົ້າຫໍ່ເຂົ້າມາກິນ ຢູ່ກັບໂຮງຮຽນ ເວລາດອນທ່ຽງ. ເວລາເລີກໂຮງຮຽນຕອນແລງ ເຂົາເຈົ້າກັບເມືອບ້ານ ພ້ອມກັນເປັນໝູ່. ລາງຄົນເລີຍໄປຊອກລັດປ້ອງ ເອົາງົວແລະຄວາຍ ເມືອແລ່ງບ່ຳພ້ອມ.

ໝູ່ເຮົາມີຄວາມພໍໃຈຫຼາຍ ໃນການທີ່ເພິ່ນໄດ້ສ້າງໂຮງຮຽນຂຶ້ນ ໃຫ້ໝູ່ເຮົາໄດ້ຮ່ຳຮຽນ.

## ຄຳອະທິບາຍ:

ເຈັບປ່ວຍ = ບໍ່ຢູ່ດີມີແຮງ.
ຄອບ = ບອກໃຫ້ ຮູ້.
ແລ່ງ = ຜູກມັດສັດໄວ້ຍາມກາງຄືນ.



## ຂໍ້ໃຫຍ່ໃຈຄວາມ:

໑. ການຕົກແຕ່ງໂຮງຮຽນ ໃຫ້ມີສະພາບສວຍງາມ.
໒. ໜ້າວຽກຂອງຄູແລະນັກຮຽນ.
໓. ຄວາມສມັກມາຮຽນຂອງນັກຮຽນ.
໔. ໂຮງຮຽນເປັນບ່ອນສຶກສາ.

## ຄຳຖາມ:

ໂຮງຮຽນເຈົ້າສວຍງາມ ຍ້ອນຫຍັງ?
ເປັນຫຍັງຈຶ່ງຄວນຄອບຄູ ເວລາຂາດໂຮງຮຽນ?
ການມາໂຮງຮຽນບໍ່ຂາດ ດີຢ່າງໃດ?
ຖ້າບໍ່ມີໂຮງຮຽນ ພວກເຈົ້າຈະເປັນຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ ໃຫ້ພໍແລະຖືກ

ຕ້ອງ:

ໂຮງຮຽນເຮົາຕັ້ງຢູ່ແຄມ.............ເດີ່ນໂຮງ
ຮຽນອ້ອມດ້ວຍ..........ເຮົາປູກຕົ້ນໄມ້ເພື່ອ
ອາສັຍ________ໂຮງຮຽນເຮົາມີ________
ຄົນດຽວ. ຢູ່ໂຮງຮຽນເຮົາມີລູກສິດ________
ຄົນ.





## ໖. ການຮຽນຂອງເຮົາຢູ່ໃນໂຮງຮຽນ

ໃນອາທິດນຶ່ງ ເຮົາມາໂຮງຮຽນຫ້າມື້ ຄືວັນຈັນ ວັນອັງຄານ ວັນພຸດ ວັນພະຫັດ ແລະ ວັນສຸກ. ລາງເທື່ອ ວັນເສົາຕອນເຊົ້າ ເຮົາກໍມາໂຮງຮຽນ ເພື່ອຊຸມນຸມກ່ຽວກັບການຍຸວະຊົນ ແລະສະແດງການກິລາ ຫຼືວ່າອອກໄປຊ່ອຍເຫຼືອ ຊາວບ້ານ ທຳຄວາມສະອາດຂອງວັດ ຫຼື ບ່ອນຕ່າງໆ.

ຢູ່ໃນໂຮງຮຽນ ເມື່ອເຮົາໄດ້ສັງເກດເບິ່ງ ສິ່ງທັງປວງແລ້ວ ເຮົາກໍສາມາດອະທິບາຍ ຊີ້ແຈງສິ່ງເຫຼົ່ານັ້ນ ໃຫ້ຖືກຕ້ອງແລະແຈ່ມແຈ້ງດີ. ເຮົາທົດລອງເຝິກຫັດ ເວົ້າອ່ານ ແລະຂຽນ ຕາມຄວາມນຶກຄິດຂອງເຮົາ ເຮົາຮຽນ

ແຕ້ມແລະຮຽນເລກ ປະກອບການຮຽນຂອງເຮົາ

ເຮົາຮຽນຮັກສາຮ່າງກາຍ ເຄື່ອງກິນ ເຄື່ອງນຸ່ງ ແລະເຄື່ອງໃຊ້ ເຮົາຮຽນຮັກສາໂຮງຮຽນ ແລະບ້ານເຮືອນ ຂອງເຮົາ ໃຫ້ສະອາດ. ເຮົາຮຽນໂຄຣົບນັບຖື ແລະຮູ້ບຸນຄຸນ ພໍ່ແມ່ຄຣູບາອາຈານ ເຖົ້າແກ່ແລະອາດຍາສິດ.

ເຮົາຮຽນໃຫ້ຮູ້ຈັກ ສິ່ງແວດລ້ອມເຮົາເອງຄື ຄົນ ສັດ ຕົ້ນໄມ້ດິນ ຟ້າ ອາກາດ ເຮົາຮຽນການທຳນາຫາກິນ ການທ່ອງທ່ຽວໄປມາ ແລະຄວາມຈະເລີນກ້າວໜ້າ ຂອງຄົນໃນໂລກ.

ເຮົາຮຽນໃຫ້ຮູ້ຈັກໃຊ້ສມອງ ຄືໃຊ້ຄວາມຄິດ ແລະສະຕິປັນຍາ ເພື່ອໃຫ້ເປັນລູກທີ່ດີຂອງພໍ່ແມ່ ເປັນນັກຮຽນທີ່ດີຂອງຄຣູ ແລະເປັນພົລເມືອງທີ່ດີຂອງຊາດ.

ເຮົາຫັດໃຊ້ມືຂອງເຮົາ ເພື່ອໃຫ້ຊຳນານ ໃນການຫັຖກັມໝົດທຸກຢ່າງ ເຮົາຮຽນໃຫ້ເປັນຄົນ ສລາດຫຼັກແຫຼມ ແລະເປັນຄົນ ມຸທຸອ່ອນຫວານ ເພື່ອຈະຢູ່ຮ່ວມສຸກແລະຮ່ວມທຸກ ກັບຄົນທັງຫລາຍ.

ເຮົາຕ້ອງພຍາຍາມຮຽນ ໃຫ້ໄດ້ໝົດທຸກແນວ ໂດຍ



ການມາໂຮງຮຽນ ບໍ່ຂາດແລະທັນເວລາ.

## ຄຳອະທິບາຍ:

| | | |
|---|---|---|
| ສະແດງການກິລາ | = | ການຫຼິ້ນອອກເຫື່ອແຮງ |
| ສັງເກດ | = | ເບິ່ງແລະພິຈາຣະນາ. |
| ປະກອບ | = | ເຮັດໄປນຳກັນ. |
| ສິ່ງແວດລ້ອມ | = | ຂອງທີ່ຢູ່ອ້ອມຕົວເຮົາ. |
| ພົລເມືອງ | = | ຄົນໃນປະເທດ. |
| ມຸທຸ | = | ກິຣິຍາອ່ອນຫວານ, |
| ອາດຍາສິດ | = | ຜູ້ມີອຳນາດ. |

## ຂໍ້ໃຫຍ່ໃຈຄວາມ:

໑. ເວລາຮຽນ ຢູ່ໃນໂຮງຮຽນ.
໒. ການຮຽນຂອງເຮົາ ຢູ່ໃນໂຮງຮຽນ,
໓. ຄວາມພຍາຍາມ ໃນການຮຽນ.
໔. ການຮຽນເປັນພົລເມືອງດີ.
໕. ຜົນປໂຍດມາຈາກການດຸໝັ່ນ.

## ຄຳຖາມ:

ຢູ່ໃນໂຮງຮຽນເຈົ້າຮຽນຫຍັງແດ່?
ຄົນທີ່ເຮົາຄວນຮັກແລະນັບຖື ມີຜູ້ໃດແດ່?
ສິ່ງແວດລ້ອມເຮົາ ມີອັນໃດແດ່?
ເພື່ອໃຫ້ເປັນຄົນມີກິລິຍາອ່ອນນ້ອມ ເຈົ້າຄວນເຮັດຢ່າງໃດ?
ຄວາມດຸໝັ່ນພາໃຫ້ໄດ້ດີຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນ ໃຫ້ພໍແລະຖືກຕ້ອງ:
ອາທິດນຶ້ງເຮົາມາໂຮງຮຽນຫ້າ ..........
ເຮົາຮຽນປາກ ຮຽນອ່ານ ແລະຮຽນ ..........
ເຮົາຮັກສາຄວາມສະອາດ ຂອງຮ່າງ..........
ເຮົານັບຖືພໍ່..........ເຮົາຮຽນເປັນລູກສິດ..........





## ມ. ຂະບວນການບຸວະຊົນຢູ່ໃນໂຮງຮຽນ

ນອກຈາກການຮຽນໜັງສືແລ້ວ ຢູ່ໃນໂຮງຮຽນພວກເຮົາ ນັກຮຽນໄດ້ຈັດໃຫ້ມີ ຂະບວນຍຸວະຊົນອີກ ຂະບວນຍຸວະຊົນ ແມ່ນນັກຮຽນທັງໝົດ ຢູ່ໃນໂຮງຮຽນດຽວກັນ ເວັ້ນເສັຽແຕ່ນັກຮຽນຊັ້ນ ປ ໑. ເດັກນ້ອຍພວກນີ້ ຕ້ອງໄດ້ຝຶກຫັດເສັຽກ່ອນ ແລ້ວຈຶ່ງໄດ້ຈົດຊື່ເຂົ້າບັນຊີ ເປັນສະມາຊິກ ຍຸວະຊົນນຳໝູ່.

ການຍຸວະຊົນ ມີຈຸດປະສົງ ຢາກໃຫ້ນັກຮຽນທັງຫຼາຍ ຮູ້ຈັກຢູ່ຮ່ວມກັນ ເປັນໝວດ ເປັນໝູ່ ຮູ້ຈັກຮັບຜິດຊອບ ຕໍ່ການກະທຳຂອງຕົນ ແລະຊ່ອຍເຫຼືອ ຜູ້ອື່ນ.

ຄະນະບຸວະຊົນ ຂອງໂຮງຮຽນເຮົາ ໄດ້ມີການເລືອກຕັ້ງ ເອົາຜູ້ນຶ່ງເປັນຫົວໜ້າ ຮັບຜິດຊອບ ເຊິ່ງເອີ້ນວ່າປະທານ ແລະອີກຜູ້ນຶ່ງເປັນຮອງປະທານ. ເມື່ອເລືອກປະທານ ແລະຮອງປະທານໄດ້ແລ້ວ ຍັງມີການຄັດເລືອກເອົາຫົວໜ້າຮັບຜິດຊອບ ຕໍ່ວຽກການຕ່າງໆອີກ ຫົວໜ້າພວກນີ້ຮຽກວ່າ ຄະນະກັມມະການປົກຄອງ ແລະໄດ້ຖືກເລືອກຕັ້ງ ດ້ວຍການອອກຄະແນນສຽງ ໃນທຳນອງດຽວກັນ ກັບການຄັດເລືອກ ປະທານແລະຜູ້ຮອງ.

ວຽກຕ່າງໆ ຢູ່ໃນໂຮງຮຽນ ໄດ້ແບ່ງເປັນຫຼາຍຈຳພວກ ເພື່ອໃຫ້ພວກບຸວະຊົນ ປະຕິບັດດີ ການຮັກສາຄວາມສະອາດ ການສ້ອມແປງຂອງເລັກໆນ້ອຍໆ ການລະວັງຄວາມປອດພັຍ ຂອງໝູ່ນັກຮຽນດ້ວຍກັນ ການເຮັດສວນຜັກ ເຮັດສວນດອກໄມ້ ການລ້ຽງສັດ ແລະການຮັບຕ້ອນແຂກ ເວລາມີບຸນໂຮງຮຽນ ດັ່ງນີ້ເປັນຕົ້ນ.

ວຽກແຕ່ລະຢ່າງ ມີຫົວໜ້າຮັບຜິດຊອບ ພ້ອມດ້ວຍການຊ່ອຍເຫຼືອ ຂອງສະມາຊິກຫຼາຍຄົນ.

ເວລາທ້າຍໂມງຮຽນຕອນແລງ ພວກຫົວໜ້າໝູ່ໄດ້ປະຊຸມກັນ ເວົ້າສູ່ກັນຟັງ ກ່ຽວເຣື່ອງວຽກການ ທີ່ໄດ້



ເຮັດມາແລ້ວ ໄດ້ພົບດີຫຼື ຂັດຂ້ອງ ທີ່ຈະຄວນແກ້ໄຂຢ່າງໃດ ແລ້ວຈຶ່ງກະວຽກການໄວ້ເພື່ອປະຕິບັດໃນວັນຂ້າງໜ້າ.

ທຸກໆເທື່ອ ເມື່ອມີວຽກຈຳເປັນ ຢູ່ໃນໂຮງຮຽນ ຫຼືວຽກສ່ວນໂຮມ ທີ່ຄວນຈະປະຕິບັດ ກໍໄດ້ໂຮມກັນເຮັດໃນຕອນເຊົ້າຂອງວັນເສົາ. ຄະນະບຸວະຊົນ ຕ້ອງໄດ້ເອົາໃຈໃສ່ ປະຕິບັດໜ້າວຽກຕາມລະບຽບ ເມື່ອພາຍໜ້າໄປ ກໍຈະເປັນຜູ້ນຳທີ່ດີ ໃນວົງສັງຄົມ.

## ຄຳອະທິບາຍ:

ບຸວະຊົນ = ຊາວໜຸ່ມ.
ເຝິກຫັດ = ແອບ.
ສະມາຊິກ = ຜູ້ມີສິດສ່ວນໂຮມໃນອົງການຕ່າງໆ.
ການອອກຄະແນນສຽງ = ການເລືອກຕັ້ງດ້ວຍສຽງສ່ວນຫຼາຍ.

## ຂໍ້ໃຫຍ່ໃຈຄວາມ:

໑. ການແຕ່ງຕັ້ງຂະບວນບຸວະຊົນ.

໒. ໜ້າທີ່ແລະຄວາມຊ່ອຍເຫຼືອ ຂອງບຸວະຊົນ.
໓. ຄວາມຫວັງດີໃນການ ເປັນບຸວະຊົນ.

## ຄຳຖາມ:

ຂະບວນການບຸວະຊົນນັ້ນແມ່ນຫັຍງ?
ຂະບວນການບຸວະຊົນ ມີຈຸດປະສົງປ່າງໃດ?
ຂະບວນການບຸວະຊົນ ຈັດຕັ້ງແລະປົກຄອງກັນປ່າງໃດ?
ໜ້າວຽກຂອງບຸວະຊົນ ມີຫັຍງແດ່?
ການເປັນບຸວະຊົນນັ້ນດີປ່າງໃດ?



## ຫັດແຕ່ງເຣື້ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນບະໄວ້ໃຫ້ພໍແລະຖືກຕ້ອງ:
ປູ່ໂຮງຮຽນເຮົາ ໄດ້ຈັດໃຫ້ມີຂະບວນ........
ຂະບວນບຸວະຊົນ ມີຈຸດປະສົງປາກໃຫ້ ນັກຮຽນຮູ້ຈັກຮັບຜິດ........ບຸວະຊົນໃນໂຮງຮຽນ ເຮົາໄດ້ເລືອກຕັ້ງ ນັກຮຽນຜູ້ນຶ່ງເປັນ........ແລະຮອງ...... ວຽກການປູ່ໃນໂຮງຮຽນ ໄດ້ແບ່ງເປັນຫາບຈຳ........ປະທານ ແລະຫົວໜ້າໝູ່ ໄດ້ປະຊຸມທຸກໆ.........ທ້າຍໃນາຮຽນ.



# ໔. ສວນຂອງໂຮງຮຽນເຮົາ

ສວນຂອງໂຮງຮຽນເຮົາ ຕິດກັບເດີ່ນໂຮງຮຽນ ດ້ານແຄມຫ້ວຍ. ຄຣູເພີ່ນພາພວກເຮົາ ລ້ອມຮົ້ວສວນປ່າງດີ ເພື່ອປ້ອງກັນບໍ່ໃຫ້ ງົວ ຄວາຍ ໝູ ໝາ ແລະ ເປັດໄກ່ ເຂົ້າທຳລາຍເຄື່ອງປູກ. ດິນສວນຂອງເຮົາ ເປັນດິນດີສົມຄວນ. ດ້ານທີ່ປູ່ບ່ອນຕ່ຳ ລົງໄປຫາໃກ້ຫ້ວຍ ຍິ່ງເປັນດິນງາມດີເພາະເປັນດິນຊາຍແກມຕົມ ແລະມີຝຸ່ນຫຼາຍ.

ນັກຮຽນໝົດທຸກຄົນ ພ້ອມກັນເຮັດສວນ. ເຂົາເຈົ້າແບ່ງກັນອອກ ເປັນໝູ່ລະສາມສີ່ຄົນ ຕໍ່ໜານນຶ່ງ. ນັກຮຽນຜູ້ຂຍັນ ກໍເຮັດແຕ່ຜູ້ດຽວ ຫຼື ສອງຄົນ ຕໍ່ໜານ.ໜານ



ຜັກຂອງພວກເຮົາ ໄດ້ເຮັດລຽນກັນເປັນແຖວນ້ອຍໃຫຍ່ ແບບດຽວກັນໝົດທຸກໆໜານ.

ສ່ວນແນວຜັກ ທີ່ຈະເອົາມາປູກນັ້ນ ພວກເຮົາຕົກລົງກັນ ເອົາຕາມໃຈມັກ ສ່ວນຫຼາຍພວກເຮົາ ປູກຜັກບົ່ວ ຜັກທຽມ ແລະຜັກກາດ. ສ່ວນຜັກຫອມປ້ອມ ແລະ ຜັກຊີ ພວກເຮົາ ຫວ່ານໃສ່ແຄມໜານ. ລາງພວກປູກຜັກຫອມຫໍ່ ຜັກແພວ ຜັກຄາວທອງ ພວກຜູ້ໃຫຍ່ ມັກປູກຜັກສລັດ ກະລຳປີ ໝາກຖົ່ວຍັດ ໝາກເຫຼ່ນ ແລະ ໝາກຖົ່ວດຳ.

ການປູກຜັກ ພວກເຮົາໄດ້ຂຸດໜານ ທັບດິນໃຫ້ມຸ່ນ ຊາວຫຍ້າອອກໃຫ້ໝົດ ເອົາຂີ້ແກບ ແລະ ເທົ່າເຟືອງໃສ່ກ່ອນ ແລ້ວຈຶ່ງປູກ. ພວກເຮົາພຽນຫົດນ້ຳ ທັງເຊົ້າແລະແລງ ເມື່ອຜັກໃຫຍ່ຂຶ້ນມາ ພວກເຮົາກໍໝັ່ນຍົງດິນ ແລະ ໃສ່ຝຸ່ນ ຂີ້ເປັດແລະຂີ້ໄກ່. ພວກເຮົາພຽນຮັກສາ ບໍ່ໃຫ້ຫຍ້າເກີດ ແລະແມງໄມ້ມາກັດ.

ເມື່ອຜັກໃຫຍ່ ສຸດກຳລັງແລ້ວ ພວກເຮົາກໍຫຼົກເມືອກິນ ແລະຈຶ່ງໄວ້ເປັນແນວແດ່. ພໍ່ແມ່ຂອງພວກເຮົາກໍດີໃຈ ດ້ວຍວ່າພວກເຮົາຮູ້ຈັກປູກຜັກ.

## ຄຳອະທິບາຍ:

ປ້ອງກັນ = ຫ້າມປາມ.
ດິນດີ = ດິນ ປູກຝັງງາມ.
ຂຍັນ = ດຸໝັ່ນ.
ຕົກລົງ = ເຫັນດີນຳກັນ.
ຫວ່ານ = ໂຮຍໃສ່.
ສຸດກຳລັງ = ເຮັດເຕັມແຮງ.
ຫຼົກ = ຖອນອອກ.
ໝາກຖົ່ວຍັດ = ໝາກຖົ່ວຝັກແປຄືໝາກແປບແຕ່ນ້ອຍກວ່າ..
ຖົ່ວດໍ = ຖົ່ວປູກໄດ້ກິນງ່າຍ.

## ຂໍ້ໃຫຍ່ໃຈຄວາມ:

໑. ວິທີເຮັດສວນ.
໒. ແນວປູກຊະນິດຕ່າງໆ.
໓. ການບົວລະບັດ.
໔. ຜົນຂອງການປູກຜັກ.



## ຄຳຖາມ:

ສວນຂອງໂຮງຮຽນເຈົ້າ ເຮັດຢູ່ບ່ອນໃດ?
ແມ່ນໃຜເປັນຜູ້ເຮັດ ສວນແລະປູກຜັກ?
ຢູ່ສວນໂຮງຮຽນ ເຈົ້າປູກຜັກຫຍັງແດ່?
ການປູກຜັກ ເຈົ້າເຮັດຈັ່ງໃດ?
ເມື່ອຜັກໃຫຍ່ແລ້ວ ເຈົ້າເອົາໄປເຮັດຫຍັງ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ. ສວນຂອງໂຮງຮຽນເຮົາ ຢູ່ຕິດກັບເດີ່ນໂຮງຮຽນ ດ້ານແຄມ........ນັກຮຽນໝົດທຸກຄົນ ພ້ອມກັນປູກ........ໝາກຜັກຂອງພວກເຮົາ ລຽນກັນເປັນ......ເຮົາຫົດຜັກທັງເຊົ້າແລະ.. .......ເມື່ອຜັກໃຫຍ່ແລ້ວ ເຮົາຫຼົກເອົາໄປ....



## ໕. ໂຮງຮຽນແລະສະຖານທີ່ແວດລ້ອມ

ໂຮງຮຽນເຮົາ ປຸກພື້ນສູງປະມານ ໖ ແມັດເຄິ່ງ ແລະມີດວດສູງ ໓ ແມັດເຄິ່ງ ພື້ນປູດ້ວຍເປັນໄມ້ແຄນ ແລະແອ້ມດ້ວຍຝາໄມ້ເຮັ້ງ ເສົາແລະເຄື່ອງທັງໝົດ ເຮັດ ດ້ວຍໄມ້ແກ່ນ ແລະມຸງຝ້າ. ໂຮງຮຽນຫຼັງນີ້ ມີລະບຽງ ອ້ອມທັງສີ່ດ້ານ ສ່ວນລະບຽງດ້ານໜ້າ ແລະດ້ານຫຼັງ ນັ້ນ ມີຂັ້ນໄດແປ້ນ ເບື້ອງລະອັນ. ສ່ວນທາງດ້ານໄຕ້ ນັ້ນ ຂັ້ນເປັນຫ້ອງໄວ້ຂອງ ກ້ອງໄຕ້ລ່າງ ເປັນບ່ອນຊຸ້ນ ບັກຮຽນ ເມື່ອເວລາຝົນຕົກ ກ້ອງໄຕ້ລ່າງ ຈະຈັດໃຫ້ເປັນ ຫ້ອງຮຽນກໍ່ໄດ້ ຖ້າຫາກວ່າມີລູກສິດຫຼາຍ.



ໂຮງຮຽນເຮົານີ້ ພຽງຫ້ອງດຽວ ກວ້າງ ໗ ແມັດ ຍາວ ໙ ແມັດ ແລະມີເພດານພ້ອມ ຫ້ອງຮຽນຂອງ ເຮົາແຈ້ງດີ ເພາະມີປ່ອງຢ້ຽມຂ້າງລະສອງປ່ອງ ແລະ ປະຕູໃຫ່ຍສອງອັນ ໂຮງຮຽນເຮົາ ເປັນໂຮງຮຽນມູລປະຖົມ ສຶກສາ.

ປູ່ກາງເດີ່ນໜ້າໂຮງຮຽນ ມີເສົາທຸງ ພ້ອມທັງ ໜານດອກໄມ້ ປູ່ດ້ານຫຼັງ ມີໄຫນ້ຳສີ່ໜ່ວຍ ພ້ອມທັງ ກະບວຍ ແລະອ່າງລ້າງໜ້າ ຕັ້ງປູ່ເທິງຮ້ານ ທີ່ມຸງດ້ວຍ ຝ້າ. ຫ່າງຈາກຮ້ານນ້ຳອອກໄປ ມີເດີ່ນສຳລັບຫຼິ້ນກິລາ ແລະຫັດກາຍກັມ.

ປູ່ຂ້າງສວນຜັກ ຂອງໂຮງຮຽນມີ ນ້ຳສ້າງໜ່ວຍນຶ່ງ ແຂ່ງສ້າງໜ່ວຍນີ້ ເຮັດດ້ວຍຊີມັງ ເຊິ່ງພໍ່ບ້ານໄດ້ຂໍມາ ຈາກສາຂາ ຂອງກົມປັບປຸງໝູ່ບ້ານ ປະຈຳແຂວງ. ປູ່ ແຈເດີ່ນໂຮງຮຽນ ກ້ຳຊ້າຍ ດ້ານຕາເວັນຕົກ ເພິ່ນໄດ້ຂຸດ ວິດຊຶມໃສ່ສີ່ໜ່ວຍ ແລະຂັ້ນໃຫ້ເປັນສີ່ສ້ວມ ສອງສ້ວມ ສຳລັບຜູ້ຊາຍ ອີກສອງສ້ວມສຳລັບຜູ້ຍິງ ແຕ່ລະສ້ວມກໍ່ ມີໄຫໃສ່ນ້ຳ ເພື່ອໄວ້ລ້າງ ເວລາຖ່າຍໜັກ ຫຼືຖ່າຍເບົາ ແລ້ວ.

ປູ່ແຈເດີ່ນກ້າຂວາ ດ້ານຕາເວັນຕົກ ມີເຮືອນຄຣູຫຼັງນຶ່ງ ຄຣູແລະພວກເຮົາໄດ້ພາກັນ ກໍາກັບຄວາມສອາດ ແລະຄວາມສະງ່າງາມ ຂອງໂຮງຮຽນ ໃຫ້ດີຂຶ້ນທຸກມື້.

## ຄໍາອະທິບາຍ:

ຫັດກາຍກັນ = ຫັດແຮງ.
ຖ່າຍໜັກ = ໄປຂີ້.
ຖ່າຍເບົາ = ໄປຍ່ຽວ.
ແວດລ້ອມ = ສິ່ງ ທີ່ປຸກແປງຂຶ້ນ ປູ່ອ້ອມ ໂຮງຮຽນ.

## ຂໍ້ໃຫຍ່ໃຈຄວາມ:

໑. ຮູບພັນຂອງໂຮງຮຽນ.
໒. ສິ່ງທີ່ມີປູ່ ໃນໂຮງຮຽນ.
໓. ຄວາມສະງ່າງາມ ຂອງໂຮງຮຽນ.
໔. ການບົວຣະບັດໂຮງຮຽນ.



## ຄໍາຖາມ:

ໂຮງຮຽນເຮົາປຸກເປັນແບບໃດ?
ປູ່ໃນເດີ່ນໂຮງຮຽນ ມີສິ່ງໃດສໍາຄັນແດ່?
ໂຮງຮຽນຂອງເຮົາ ມີຮູບຊົງພິລຶກຂັ້ນ ຍ້ອນອັນໃດ?
ມື້ເຂົ້າຮຽນ ເຈົ້າໄດ້ບົວຣະບັດໂຮງຮຽນ ຢ່າງໃດແດ່?

## ຫັດແຕ່ງເລື່ອງ:

ໃຫ້ຫາຄໍາຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ:
ພື້ນໂຮງຮຽນເຮົາສູງປະມານສອງ.........
ໂຮງຮຽນເຮົາເຮັດດ້ວຍ ......... ໂຮງຮຽນເຮົາມີລະບຽງອ້ອມຫັ້ງ ...... ຫ້ອງຮຽນເຮົາມີຂັ້ນໄດຂຶ້ນດ້ານໜ້າແລະດ້ານ.......ປູ່ເດີ່ນຕໍ່ໜ້າໂຮງຮຽນເຮົາມີເສົາ.......



# ໓. ປວັດຂອງໂຮງຮຽນເຮົາ

ແຕ່ກ່ອນ ບ້ານເຮົາຍັງບໍ່ມີໂຮງຮຽນ ເວລານັ້ນ ເດັກນ້ອຍບ້ານເຮົາຫຼາຍຄົນ ໄດ້ທ່ຽວໄປຮຽນ ໂຮງຮຽນບ້ານອື່ນ. ດົນຫຼາຍປີຕໍ່ມາ ເດັກນ້ອຍບ້ານເຮົາກໍ່ມີ ຈຳນວນຫຼາຍຂຶ້ນ ດັ່ງນັ້ນ ຊາວບ້ານເຮົາ ແລະບ້ານໃກ້ຄຽງ ຈຶ່ງໄດ້ພ້ອມກັນ ຂໍຕັ້ງໂຮງຮຽນ.

ການຈັດຕັ້ງໂຮງຮຽນ ກໍໄດ້ຮັບຄວາມສະດວກທຸກຢ່າງ ເພາະຊາວບ້ານທຸກຄົນ ມີຈິດໃຈພ້ອມພຽງ ສາມັກຄີກັນ ອອກເຫື່ອແຮງແລະສະລະຊັບ. ເມື່ອປຸກໂຮງຮຽນແລ້ວ ທາງລັດຖະບານກໍຈັດ ສົ່ງຄູມາໃຫ້.



ເມື່ອເປີດໂຮງຮຽນ ຄັ້ງທຳອິດ ກໍແມ່ນຮຸ່ນອ້າຍເອື້ອຍເຂົ້າຮຽນກ່ອນ ແຕ່ວ່າເວລານັ້ນ ເດັກນ້ອຍບໍ່ສູ້ມັກໄປໂຮງຮຽນ ຄືສມັຍນີ້ ເພາະເຂົາເຈົ້າຍັງບໍ່ທັນຮູ້ຈັກ ຄຸນຄ່າຂອງການສຶກສາເທື່ອ. ປູ່ມາປີກາຍນີ້ ໂຮງຮຽນຫຼັງປຸກທຳອິດ ເລີຍຖືກລົມພາຍຸພັດ ເພພັງໄປ. ເມື່ອເປັນດັ່ງນັ້ນ ຊາວບ້ານກໍ່ຟ້າວ ປຸກຫຼັງໃໝ່ຂຶ້ນແທນ.

ຕັ້ງແຕ່ໄດ້ມີໂຮງຮຽນນີ້ມາ ຊາວບ້ານເຮົາສ່ວນຫຼາຍຮູ້ຈັກອ່ານອອກ ຂຽນໄດ້ ທັງມີຄວາມສລາດຫຼັກແຫຼມຫຼາຍກວ່າແຕ່ກ່ອນ ທຸກໆຄົນ ກໍມີຄວາມດີອົກດີໃຈ ທີ່ໄດ້ມີໂຮງຮຽນຢູ່ກັບບ້ານ.

## ຄຳອະທິບາຍ:

ປວັດ = ເຣື່ອງທີ່ເປັນມາ.
ສາມັກຄີ = ຄວາມພ້ອມພຽງ.
ສະລະຊັບ = ໃຫ້ທານເງິນຫຼືສິ່ງຂອງຕ່າງໆ.
ຮຸ່ນອ້າຍເອື້ອຍ = ສ່ຳອ້າຍເອື້ອຍ.
ສມັຍນີ້ = ດຽວນີ້ປັດຈຸບັນນີ້.
ສຶກສາ = ຮ່ຳຮຽນ

ລົມພາຍຸ = ລົມແຮງ ທີ່ທຳໃຫ້ປ້າວເຮືອນເພ
ພັງແລະຕົ້ນໄມ້ຫັກກົ່ນ.

## ຂໍ້ໃຫຍ່ໃຈຄວາມ:

໑. ການຮ່ຳຮຽນຂອງເດັກບ້ານເຮົາ ໃນສມັຍກ່ອນ
໒. ການປັບປຸງໂຮງຮຽນບ້ານເຮົາໃຫ້ດີຂື້ນ.
໓. ຄວາມດີໃຈຂອງຊາວບ້ານ ທີ່ໄດ້ມີໂຮງຮຽນ

## ຄຳຖາມ:

ແຕ່ກ່ອນ ເດັກນ້ອຍບ້ານເຮົາໄປ ຮ່ຳຮຽນຢູ່ໃສ ?
ການຈັດຕັ້ງໂຮງຮຽນ ຊາວບ້ານເຮົາໄດ້ ເສັຽສະ
ລະຢ່າງໃດ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ ໃຫ້ພໍ ແລະຖືກຕ້ອງ
ໂຮງຮຽນເຮົາມີມາຫຼາຍ ........ແລ້ວ
ນັກຮຽນທ່ຽວໄປໂຮງຮຽນບ້ານ ......ການຈັດຕັ້ງ



ໂຮງຮຽນມີຄວາມ ...... ທຸກປາງ ເມື່ອປຸກໂຮງ
ຮຽນແລ້ວ ທາງຣາຊການສົ່ງ ........ມາໃຫ້.
ຊາວບ້ານທຸກຄົນມີ ຄວາມດີໃຈຫຼາຍ ທີ່ໄດ້ມີ
........ຢູ່ກັບບ້ານ.



## ໗. ໂຮງຮຽນມູນປະຖົມສຶກສາ

### ແລະໂຮງຮຽນປະຖົມສຶກສາບໍລິບູນ

ນອກຈາກໂຮງຮຽນ ເຂດບ້ານເຮົາແລ້ວ ຫຼາຍບ້ານທີ່ຢູ່ຫ່າງອອກໄປ ກໍ່ມີໂຮງຮຽນຄືກັນ. ຕາມທີ່ເຮົາເຫັນຢູ່ນີ້ ສອງສາມບ້ານນ້ອຍທີ່ຢູ່ໃກ້ກັນ ມີໂຮງຮຽນຫຼັງນຶ່ງ ປຸກຢູ່ລະຫວ່າງກາງ. ໂຮງຮຽນຕັ້ງຢູ່ຕາມໝູ່ບ້ານ ມັກມີຄຣູຄົນດຽວສອນ ໖ ຊັ້ນຄື ຊັ້ນ ປ. ໑. ຮອດຊັ້ນ ປ. ໖. ໂຮງຮຽນຊະນິດນີ້ ເພິ່ນເອີ້ນວ່າ ໂຮງຮຽນມູລປະຖົມສຶກສາ.

ເມື່ອລູກສິດ ໃນໂຮງຮຽນ ມູລປະຖົມສຶກສາ ຮຽນສຸດຊັ້ນ ປ. ໖. ແລ້ວ. ຢາກຮຽນຕໍ່ອີກກໍ່ໄດ້ ແຕ່ຕ້ອງໄປ



ເຂົ້າຮຽນຢູ່ຊັ້ນ ປ. ໔. ທີ່ໂຮງຮຽນ ປະຖົມສຶກສາບໍລິບູນ.

ໂຮງຮຽນປະຖົມສຶກສາບໍລິບູນ ເປັນໂຮງຮຽນທີ່ມີຊັ້ນຮຽນ ແຕ່ຊັ້ນ ປ. ໑. ເຖິງຊັ້ນ ປ. ໖. ທັມມະດາໂຮງຮຽນປະຖົມສຶກສາບໍລິບູນ ມັກຈະຕັ້ງຢູ່ສູນກາງຂອງໝູ່ບ້ານ ເຊິ່ງມີໂຮງຮຽນມູລປະຖົມສຶກສາອ້ອມຢູ່ ບໍ່ຕ່ຳກວ່າ ໔-໕ ຫຼັງ ເປັນຢ່າງໜ້ອຍ ແຕ່ຢູ່ຕາມເມືອງໃຫຍ່ ໂຮງຮຽນ ປະຖົມສຶກສາບໍລິບູນ ຕັ້ງຢູ່ຕາມຄຸ້ມຕ່າງ ໆ.

ເມື່ອຮຽນສຸດຊັ້ນ ປ. ໖. ແລ້ວ ກໍ່ມີການສອບເສັງເອົາປະກາສນີຍະບັດ ປະຖົມສຶກສາບໍລິບູນ. ເວລານີ້ ເດັກນ້ອຍບ້ານເຮົາຫຼາຍຄົນ ເສັງເຂົ້າໂຮງຮຽນມັທຍົມໄດ້ແລ້ວ ເຂົາເຈົ້າໄດ້ໄປຮຽນຕໍ່ ຢູ່ໃນເມືອງໃຫຍ່.

ເມື່ອກ່າວເຖິງການຮຽນແລ້ວ ເຫັນວ່າເດັກນ້ອຍບ້ານເຮົາ ກໍ່ມີຄວາມຄຸ້ໜັບ ແລະກ້າວໜ້າຢູ່ບໍ່ໜ້ອຍເໝືອນກັນກັບເດັກນ້ອຍບ້ານອື່ນ ໆ ຫຼືໃນເມືອງ.

**ຄຳອະທິບາຍ:**

ຫ່າງອອກ = ໄກອອກໄປ.
ມູລປະຖົມສຶກສາ = ການຮຽນຂັ້ນຕົ້ນ.

ສູນກາງ = ໃຈກາງ
ຄຸ້ມ = ສ່ວນນຶ່ງຂອງບ້ານຫຼືເມືອງ.
ປະກາສນີຍະບັດ = ໃບສະແດງຄວາມຮູ້.
ໂຮງຮຽນມັທຍົມ = ໂຮງຮຽນມີການສຶກສາຂັ້ນກາງ.

## ຂໍ້ໃຫຍ່ໃຈຄວາມ:

໑. ມູນເຫດທີ່ພາໃຫ້ເປັນ ໂຮງຮຽນມູລປະຖົມສຶກສາ.
໒. ມູນເຫດທີ່ພາໃຫ້ເປັນ ໂຮງຮຽນປະຖົມສຶກສາບໍຣິບູນ.
໓. ທີ່ຊຸມນຸມຂອງໂຮງຮຽນມູລປະຖົມສຶກສາ ແລະໂຮງຮຽນປະຖົມສຶກສາບໍຣິບູນ.
໔. ຄວາມກ້າວໜ້າຂອງເດັກໃນການຮຽນ.

## ຄຳຖາມ:

ໂຮງຮຽນມູລປະຖົມສຶກສາ ມີຊັ້ນໃດແດ່ ?



ໂຮງຮຽນຊະນິດນີ້ ເຄີຍມີຢູ່ບ່ອນໃດ?
ມີການຮຽນຊັ້ນໃດເຖິງຊັ້ນໃດ ຈຶ່ງເອີ້ນວ່າໂຮງຮຽນປະຖົມສຶກສາບໍຣິບູນ ?
ໂຮງຮຽນຊະນິດນີ້ ເຄີຍມີຢູ່ຕາມຄຸ້ມໃດ ?
ນັກຮຽນດີມີການຮຽນຄືບໜ້າ ໄປຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ໃຫ້ພໍແລະຖືກຕ້ອງ:
ນອກຈາກ......ໃນເຂດບ້ານເຮົາແລ້ວ ຫຼາຍບ້ານໃຫຍ່ໆ ໃນເຂດອື່ນ ມີໂຮງຮຽນ......ບໍຣິບູນໂຮງຮຽນຊະນິດນີ້ ມີຊັ້ນຮຽນແຕ່ປ.໑.ເຖິງ.... ແລ້ວ ກໍມີການສອບເສັງເອົາ......ປະຖົມສຶກສາບໍຣິບູນ.



## ๑. ນັກຮຽນດີ

ທ້າວພັນເປັນນັກຮຽນດີ ລາວມາໂຮງຮຽນບໍ່ຂາດ ແລະທັນເວລາຢູ່ສເມີ. ລາວມີກິຣິຍາຮຽບຮ້ອຍ ມີວາຈາອ່ອນຫວານ ຕໍ່ພໍ່ແມ່ຄຣູແລະໝູ່ເພື່ອນ.

ທຸກເຊົ້າ ທ້າວພັນຕື່ນແຕ່ເດິກ ລ້າງໜ້າພັດແຂ້ວ ແລະຫວີຜົມ ລາວໜົ້ງເຂົ້າ ຕັກນ້ຳ ປ່ອຍເປັດໄກ່ຊ່ອຍແມ່ ແລະປ່ອຍງົວຄວາຍຊ່ອຍພໍ່.

ພໍ່ເຖິງຍາມໄປໂຮງຮຽນ ທ້າວພັນຟ້າວປັ້ນເຂົ້າ ນຸ່ງເຄື່ອງ ຈັບເອົາປຶ້ມ ສົ່ງແມ່ແລ້ວ ຈຶ່ງຕັ້ງໜ້າໄປໂຮງຮຽນ.



ເມື່ອຕາມທາງໄປ ຖ້າທ້າວພັນພົບ ຄຣູບາອາຈານ ຜູ້ເຖົ້າຜູ້ແກ່ ຫຼືເຈົ້ານາຍ ລາວຄຳນັບ ດ້ວຍການຍົກມືໄຫວ້.

ຢູ່ໃນຫ້ອງຮຽນ ທ້າວພັນຕັ້ງໃຈຟັງ ຄຳສອນຂອງຄຣູ. ລາວເລົ່າບົດຮຽນລ່ຽນໄຫຼດີ.

ດ້ວຍຄວາມປະພຶດ ອັນຈົບດີຂອງທ້າວພັນ ພໍ່ແມ່ ຄຣູໝູ່ເພື່ອນຈຶ່ງຮັກ ແລະດີອົກດີໃຈນຳລາວ ເມື່ອຮອດທ້າຍປີມາແລ້ວ ລາວສອບເສັງຂຶ້ນຫ້ອງໄດ້ເລື້ອຍ ໆ.

### ຄຳອະທິບາຍ:

ຮຽບຮ້ອຍ = ກິຣິຍາດີ.
ແຕ່ເດິກ = ແຕ່ເຊົ້າ.
ວາຈາ = ຄຳເວົ້າ.

### ຂໍ້ໃຫຍ່ໃຈຄວາມ:

໑. ຄວາມປະພຶດດີຂອງທ້າວພັນ ຢູ່ເຮືອນ.
໒. ຄວາມປະພຶດດີຂອງທ້າວພັນ ຢູ່ນອກເຮືອນ.

໓. ຄວາມປະພຶດດີຂອງທ້າວພັນ ຢູ່ໂຮງຮຽນ.
໔. ເຮັດດີໄດ້ຮັບຄວາມຍ້ອງຍໍ.

## ຄໍາຖາມ:

ກ່ອນມາໂຮງຮຽນ ທ້າວພັນເຮັດຫຍັງແດ່ ຢູ່ເຮືອນ ?
ເມື່ອພົບຜູ້ເຖົ້າ ຜູ້ແກ່ ເຈົ້ານາຍ ຫຼືຄຣູບາອາຈານ ທ້າວພັນ ເຮັດຢ່າງໃດ ?
ເວລາຢູ່ໃນຫ້ອງຮຽນ ທ້າວພັນເຮັດຢ່າງໃດ ?
ທ້າວພັນໄດ້ຮັບຄວາມຍ້ອງຍໍ ຈາກໃຜແດ່ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄໍາຕື່ມໃສ່ບ່ອນຍະໄວ້ນັ້ນ ໃຫ້ພໍ ແລະ ຖືກຕ້ອງ:
ທ້າວພັນເປັນ .......ດີ. ລາວບໍ່ຂາດໂຮງຮຽນ ແລະມາທັນ ......ຢູ່ ສເມີ. ທ້າວພັນຟ້າວ



ໄປໂຮງຮຽນ ໃຫ້ທັນ.......ເຂົ້າຮຽນ ຢູ່ໃນຫ້ອງຮຽນລາວຕັ້ງໃຈຟັງ ......... ຂອງຄຣູ. ຄຣູແລະພໍ່ແມ່ຂອງລາວ ມີຄວາມດີ......ແລະ ດີ........



## ລ. ເຣື່ອງເບິ່ງອາຣົມເວລາແລງ

ຍາມເມື່ອພຣະສຸຣິໂຍບ້າຍ　　ພ່ໍແລງລົງຕ່ຳ
ເຣົາແຣກໄປຍ່າງຫຼັ້ນ　　ເຂົາເບື້ອງບ່ອນຕີນ
ຈິດມ່ວນແມ້ງ　　ສນຸກຍິ່ງເຫຼືອຫຼາຍ
ເພາະເມື່ອລົມເພີຍພັດ　　ເບື້ອກເປັນຄົງຄ້ອມ
ແລ້ວຍ່າງຍ້າຍຈາກປ່າແດນເຂົາ　　ໄປເຖິງທົ່ງບ່ອນ
ມີໜອງນ້ຳ
ເຫັນໝູ່ເບື້ອງຍືນຊ້ອງ　　ຊຸມກິນຫຽ້າອ່ອນ
ແລ້ວເລົ້າລົງດື່ມນ້ຳ　　ໜອງນັ້ນຄູ່ໄດ
ຍາມເມື່ອແດດອ່ອນຕ້ອງ　　ຫຽ້າເບີກໃບຂຽວ



ຄືດູຈຽມພົມປູ　　ຕາກເຕັມແດນດ້າວ
ເຣົາອອນຊອນຊົງປຽ້ມ　　ແລດູສະນັ້ງເມື່ອຍ
ຈົນຄ່ຳລົງນັບນ້ອຍ　　ກໍເມືອບ້ານບ່ອນເດີມແທ້ແລ້ວ

ມະຫາແກ້ວ

### ຄຳອະທິບາຍ:

ພຣະສຸຣິໂຍ = ພຣະອາທິດ.
ອາຣົມ = ຄວາມຄິດຄວາມຮູ້ເມື່ອ.
ເຂົາ = ພູ
ຄົງຄ້ອມ = ໂຕຫົດເຂົ້າ.
ເບື້ອງ = ສັດປ່າມີເຂົາຄືແບ້.
ຈຽມພົມ = ແຜ່ນຜ້າຂົນສັດສຳລັບປູ.

### ຂໍ້ໃຫຽ່ໃຈຄວາມ:

໑. ຄວາມອອນຊອນ ໃນເວລາໄປດາກອາກາດ ຢູ່ຕີນພູ ເຊິ່ງມີດົງ ທົ່ງ ແລະໜອງນ້ຳ.
໒. ການໄດ້ຊົມໝູ່ສັດລົງກິນນ້ຳໜອງ ແລະ

ກິນຫຍ້າອ່ອນ.

໕. ຄວາມຮູ້ສຶກດີໃຈ ໃນການໄດ້ຊົມສິ່ງທັມມະຊາດ ກ່ອນກັບຄືນຫາບ້ານຂອງຕົນ.

## ຄຳຖາມ :

ເຈົ້າໄດ້ເຄີຍໄປຕາກອາກາດຢູ່ບ່ອນໃດແດ່ ?

ເຈົ້າໄດ້ເຫັນຫຍັງ ແລະມີຄວາມດີໃຈຢ່າງໃດກັບທີ່ນັ້ນ ?

ເມື່ອເຈົ້າກັບມາບ້ານ ໄດ້ຮູ້ສຶກດີໃຈຢ່າງໃດອີກແດ່

## ຫັດແຕ່ງເຣື່ອງ :

ຈົ່ງຫາຄຳຕື່ມໃສ່ບ່ອນຍະໄວ້ໃຫ້ພໍແລະຖືກຕ້ອງ:

ຍາມເມື່ອພຣະສຸຣິຍບ້າຍ ພໍແລງລົງ......
ມານັ້ນ.ຈິດມ່ວນເມ້ງສນຸກ...... ເຫຼືອຫຼາຍ
ເຫັນໝູ່ເບື້ອງປົນຊ້ອງ ຊຸມກິນຫຍ້າ..... ບິນ
ອອນຊອນຊົງປ່ຽມ ແລດູ...... ຈົນຄ່ຳລົງນັບ
ນ້ອຍ ຈົ່ງເມືອບ້ານບ່ອນ.........





# ໑໐. ວັດບ້ານເຮົາ

ວັດບ້ານເຮົາ ຕັ້ງຢູ່ໃນຫົວບ້ານ ດ້ານໜ້າຂອງວັດ ຕິດກັບຖນົນ ເສັ້ນລຽບແຄມທົ່ງນາ. ໃນບໍຣິເວນວັດ ມີຕົ້ນໄມ້ໃຫຍ່ຄື ຕົ້ນໂພ ຕົ້ນພ້າວ ຕົ້ນມີ້ ແລະຕົ້ນມ່ວງ. ຢູ່ລຽບຮົ້ວ ເພິ່ນປູກຕົ້ນຈຳປາ ແລະຕົ້ນຝາງ. ຕົ້ນໄມ້ທັງຫຼາຍ ງາມແລະເປັນຮົ່ມດີ.

ວັດບ້ານເຮົາ ມີຕ້າຍໄມ້ແກ່ນ ລ້ອມຮອບທັງສີ່ດ້ານ. ຢູ່ໃນເດີ່ນວັດ ມີສິມ ຫໍແຈກ ແລະກຸຕິສອງຫຼັງ. ເມື່ອເຮົາເຂົ້າໄປໃນສິມ ເຮົາເຫັນພຣະພຸທຮູບໃຫຍ່ອົງນຶ່ງ ແລະພຣະພຸທຮູບນ້ອຍຫຼາຍອົງ. ຢູ່ຕໍ່ໜ້າພຣະພຸທຮູບ

ໃຫ່ຽ ມີຮ້ານບູຊາດອກໄມ້  ແລະຮາວທຽນ.

ກຸດິເຈົ້າອະທິກາບວັດ ປຸກຢູ່ຂ້າງເບື້ອງຂວາຂອງສິມ ສ່ວນກຸດິຂອງພຣະສົງອື່ນໆ ແລະສາມະເນນນັ້ນ ປູ່ຂ້າງ ເບື້ອງຊ້າຍ. ປູ່ຄຽງຂ້າງກຸດິ ມີຫໍກອງຫຼັງນຶ່ງ ແລະປູ່ໃ ລ່າງຫໍກອງ ມີໂປງໃຫ່ຽໜ່ວຍນຶ່ງ.

ປູ່ທາງຫຼັງສິມ ມີຫໍແຈກໃຫ່ຽ ໃຊ້ເປັນບ່ອນຟັງ ເທດ ຫຼືທຳບຸນສິບກິນທານຕ່າງໆ ນອກນີ້ ຍັງເປັນ ບ່ອນສັນຈັງຫັນ ແລະເພນຂອງພຣະສົງ ແລະສາມະ ເນນອີກດ້ວຍ.

ປູ່ແຈວັດເບື້ອງຕາເວັນອອກ ມີນ້ຳສ້າງໃຫ່ຽໜ່ວຍ ນຶ່ງ.ເວລາເຊົ້າແລະເວລາແລງ ພວກຊາວບ້ານ ທັງຍິງ ແລະຊາຍ ຫຽວມາຕັກນ້ຳປູ່ບໍ່ຂາດ.

ວັດບ້ານເຮົາສະອາດແລະງາມດີ.

## ຄຳອະທິບາຍ:

ຕ້າຍ = ຮົ້ວໄມ້ແກ່ນ.

ກຸດິ = ທີ່ອາສັຍຂອງພຣະສົງ ແລະສາ ມະເນນ.



ເຈົ້າອະທິການວັດ - ເຈົ້າວັດ.

ໂປງ = ເຄື່ອງໃຫ້ສຽງດັງເຮັດດ້ວຍທ່ອນໄມ້.

ສັນ = ກິນ (ໃຊ້ສຳລັບພຣະສົງ).

## ຂໍ້ໃຫ່ຽໃຈຄວາມ:

໑. ທີ່ຕັ້ງຂອງວັດ.

໒. ຮູປພັນແລະສິ່ງແວດລ້ອມຂອງວັດ.

໓. ຄວາມງາມຂອງວັດ.

## ຄຳຖາມ:

ວັດບ້ານເຈົ້າຕັ້ງປູ່ບ່ອນໃດ ?
ໃນບໍຣິເວນວັດມີຫັຽງແດ່ ?
ປູ່ໃນສິມເຈົ້າເຫັນຫັຽງແດ່ ?
ກຸດິແລະຫໍແຈກໃຊ້ໄວ້ເຮັດຫັຽງ ?
ວັດສະອາດງາມດີບ້ອນໃຜ ?

## ຫັດແຕ່ງເລື່ອງ :

ໃຫ້ຫາຄຳຕື່ມໃສ່ບ່ອນປະໄວ້ນັ້ນໃຫ້ພໍແລະຖືກຕ້ອງ:

ວັດບ້ານເຮົາຕັ້ງຢູ່......ບ້ານ. ໃນເດີ່ນວັດມີ........ໃຫ່ຍຫຼາຍງ່າ. ຮົ້ວວັດເຮັດດ້ວຍຫຼັກໄມ້ແກ່ນທັງ......ຢູ່ໃນສິມ ເຮົາເຫັນ......ໃຫ່ຍ ແລະພຣະພຸທຮູບນ້ອຍ ພຣະສົງແລະສາມະເນນນອນ ຢູ່ເທິງ.....ເພີ່ນສັນຈັງຫັນ ແລະເພນ ຢູ່ໃນ........





## ໑໑. ການອຸປຖັມວັດແລະສາສນາ

ວັດ ເປັນບ່ອນໄຄຣົບນັບຖື ຂອງຊາວບ້ານ ແລະປວງຊົນທົ່ວໄປ. ດັ່ງນັ້ນຊາວບ້ານເຮົາ ຈຶ່ງມີຈິດໃຈເຫຼື້ອມໃສ ອຸປຖັມຄ້ຳຊູວັດຕ່ງມາ.

ແມ່ຂ້ອຍລຸກແຕ່ເດິກທຸກມື້ ເພື່ອຫຸ້ງເຂົ້າ ແລະແຕ່ງອາຫານ ເພື່ອໃຫ້ທັນຕັກບາດ ແລະຈັງຫັນ. ໃກ້ຈະທ່ຽງເພີ່ນບັງໄປເພນອີກ ການຕັກບາດຈັງຫັນ ແລະເພນນີ້ ເປັນວຽກປະຈຳວັນ ຂອງຄອບຄົວຂ້ອຍ.

ເຖິງວັນສິນ ໘ ຄ່ຳ ຫຼື ໑໔ ຄ່ຳ ເຊິ່ງເປັນວັນພຣະ

ພວກຊາວບ້ານ ໄດ້ໄປໂຮມກັນຢູ່ວັດ ເພື່ອຮັບສິນ ຕັກບາດ ແລະແຈກຈັງຫັນ ຕອນແລງມາ ກໍມີການຟັງເທດ ຢູ່ກັບວັດນັ້ນອີກ ເວລາຈຳພັນສາ ພວກເຖົ້າແກ່ຍິງຊາຍ ຍັງໄດ້ໄປຈຳສິນ ແລະຟັງເທດ ຢູ່ໃນວັດທຸກໆແລງ.

ລາງເທື່ອ ຂ້ອຍກໍໄດ້ໄປວັດ ນຳແມ່ເຖົ້າຂ້ອຍ ຂ້ອຍຖືຂັນໝາກ ກອກຢາ ແລະເຕົ້ານ້ຳ ໄປຊ່ອຍເພິ່ນ. ກ່ອນຈະຟັງທັມ ເພິ່ນໄດ້ເຄນຄຳໝາກ ກອກຢາ ເຕົ້ານ້ຳ ແລະງ້ຽງ ໃຫ້ພຣະສົງ ຫຼັງຈາກການເຄນເຄື່ອງທານຕ່າງໆແລ້ວ ເພິ່ນກໍເອົາດອກໄມ້ ແລະທູບທຽນບູຊາ ພວກຍາດໂຍມທຸກຄົນ ກໍພາກັນໄຫວ້ພຣະ ຮັບສິນແລະຟັງເທດ.

ເວລາພຣະສົງ ກຳລັງເທດຢູ່ນັ້ນ ພວກເຖົ້າແກ່ຊາຍຍິງ ກໍພາກັນນັ່ງນິ່ງ ແລະຟັງ ປາງງຽບສງົບດີ ຂ້ອຍເອງ ກໍນັ່ງນິ່ງນຳເພິ່ນ ເຮົາບໍ່ຄວນໄປຣົບກວນແລະນັ່ງແຊວຢູ່ໃນວັດເວລາເພິ່ນຟັງເທດ.



## ຄຳອະທິບາຍ:

ອຸປຖັມ - ໃຫ້ຄວາມບົວຣະບັດແກ່ຜູ້ໃດຜູ້ນຶ່ງ.
ຍາດໂຍມ - ຊາຍຍິງທີ່ໄປເຮັດບຸນເຮັດທານຢູ່ວັດ.
ເຄນ - ເອົາຂອງຖວາຍໃຫ້ເຈົ້າຫົວ.
ງຽບສງົບ - ມິດມີ້.

## ຂໍ້ໃຫຍ່ໃຈຄວາມ:

ຄວາມເຫຼື້ອມໃສຂອງຊາວບ້ານ ທີ່ມີຕໍ່ວັດ.

໑. ກິນທານໃນວັນທັມມະດາ ແລະວັນພຣະວັນສິນ.
໒. ການເຄນເຄື່ອງທານຕ່າງໆ ໃຫ້ແກ່ພຣະສົງ.
໓. ວັດເປັນສະຖານທີ່ນັບຖື ຂອງຜູ້ໃຫຍ່ແລະເດັກນ້ອຍ.

## ຄຳຖາມ:

ພໍ່ແມ່ເຈົ້າມີວຽກຫຍັງແດ່ກ່ຽວກັບວັດ ?
ເຈົ້າເຄີຍໄປວັດນຳແມ່ຂອງເຈົ້າບໍ ?
ເວລາໄປວັດເພິ່ນຫ້າງຫາຫຍັງໄປນຳແດ່ ?
ເວລາຈຳພັນສາເຖົ້າແກ່ບາງຄົນເຮັດຈັ້ງໃດ ?
ເດັກທີ່ດີຄວນປະພຶດປາງໃດຕໍ່ວັດ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ. ແລະຖືກຕ້ອງ:

ວັດເປັນບ່ອນໂຄຣົບ......ຂອງປວງຊົນທົ່ວໄປ.
ແມ່ຂ້ອຍໄປຕັກ...... ສົງ......ແລະເພນທຸກມື້. ໃນເວລາຈຳພັນສາ ເພິ່ນ.......ຢູ່ວັດທຸກແລງ. ເວລາເຈົ້າຫົວເທດ.......ແລະ.......ນັ່ງນິ່ງ ແລະຟັງໂດຍຄວາມງຽບສງົບ.





# ໑໖. ບຸນຕາມຣະດູປີ

ຊາວບ້ານເຮົາ ເຄີຍໄດ້ຮ່ວມກັນທຳບຸນ ຕາມຣະດູປີ ຢູ່ໃນວັດເລື້ອຍໆມາ. ລະຫວ່າງເດືອນຫ້າ ເພິ່ນເຮັດບຸນປີໃໝ່ ເດືອນຫົກເພັງ ແມ່ນບຸນວິສາຂະບູຊາ ແລະບຸນບັ້ງໄຟ ເດືອນແປດເພັງ ແມ່ນບຸນເຂົ້າພັນສາ ເດືອນເກົ້າດັບ ແມ່ນບຸນຫໍ່ເຂົ້າປະດັບດິນ ເດືອນສິບເພັງ ແມ່ນບຸນຫໍ່ເຂົ້າສລາກ ເດືອນສິບເອັດເພັງ ແມ່ນບຸນອອກພັນສາ. ຕັ້ງແຕ່ເດືອນສິບເອັດເພັງ ເຖິງເດືອນສິບສອງເພັງ ເປັນລະຍະຈຳກັດ ເຊິ່ງເພິ່ນເຮັດບຸນກະຖິນ. ນອກນັ້ນເດືອນສາມເພັງ ແມ່ນບຸນມາຄະບູຊາ ເຖິງເດືອນ

ສາມ ເດືອນສີ່ ເພິ່ນມັກເຮັດບຸນພຣະເວດ ບຸນທີ່ມີການຄົບງັນຫຼາຍຄືນ ແລະມີຄວາມມ່ວນຊື່ນ ກວ່າໝູ່ບຸນ ແມ່ນບຸນພຣະເວດ ຄວາມມ່ວນຊື່ນ ອັນດຶກດື້ນ ທີ່ມີຂຶ້ນ ໃນປາງບຸນນີ້ ແມ່ນການເຫົ່າກັນຫຼອນ ການລຳຕອບ ບາງເມືອງຫຼືບາງທ້ອງຖິ່ນ ຍັງມີການສາຍຊີເນມາ ລຳເລື່ອງລຳກູ່ ມວຍແລະຈູດບັ້ງໄຟດອກໄມ້ເປັນຕົ້ນ.

ການເຮັດບຸນພຣະເວດທຸກປາງ ຊາວບ້ານເຮົາ ໄດ້ເອົາດີກາໄປນິມົນ ພຣະສົງສາມະເນນ ແລະເຊີນເຖົ້າແກ່ບ່າວສາວ ມາກິນທານ ຟັງເທດແລະຄົບງັນ ຮ່ວມກັນ.

ນອກຈາກການກິນທານຟັງເທດ ແລະຄົບງັນແລ້ວນັ້ນທຳອິດ ເພິ່ນຍັງມີການບວດນາກ ແລະການຫົດພຣະສົງ ຕາມຮີດຄອງປະເພນີອີກ.

ການເຮັດບຸນທຸກໆປາງ ໄດ້ເປັນໄປຕາມຄວາມປາ-ຖນາ ຂອງຊາວບ້ານ ແລະແຂກຄົນ ທີ່ມີສັດທາເຫຼື້ອມໃສດ້ວຍກັນ.

## ຄຳອະທິບາຍ:

ວັນວິສາຂະບູຊາ - ມື້ເດືອນຫົກເພັງ ເຊິ່ງເປັນວັນເກີດ ວັນຕັສຮູ້ ແລະວັນປະຣິນິພານ ຂອງພຣະພຸທເຈົ້າ.

ວັນມາຄະບູຊາ - ມື້ເດືອນສາມເພັງ ເຊິ່ງເປັນວັນ ພຣະພຸທເຈົ້າປະຊຸມສົງແລະປົງອາຍຸສັງຂານ.

ດີກາ - ໜັງສືເຊີນຊວນມາຮ່ວມບຸນ.

ລຳຕອບ - ການລຳດ້ວຍຜູ້ຊາຍແລ້ວຜູ້ຍິງຕອບດ້ວຍຄວາມຜຍາ.



## ຂໍ້ໃຫຍ່ໃຈຄວາມ :

໑. ບຸນຕ່າງໆຕາມຣະດູປີ.
໒. ພິທີປະກອບໃນມື້ບຸນພຣະເວດ.
໓. ຄວາມມ່ວນຊື່ນເວລາເຮັດບຸນພຣະເວດ.
໔. ການມີສັດທາດ້ວຍກັນ.

## ຄຳຖາມ :

ທຸກໆປີເພິ່ນໄດ້ເຮັດບຸນຫຍັງແດ່ ?

ບຸນພຣະເວດ ກາງເວັນເພິ່ນເຮັດຫັຍງ?
ມີສິ່ງໃດແດ່ພາໃຫ້ບຸນມ່ວນຊື່ນເວລາກາງຄືນ?
ບຸນທຸກປາງລຸລ່ວງໄປໂດຍດີຍ້ອນຫັຍງ?

## ຫັດແຕ່ງເຣື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ:

ເພິ່ນເຮັດບຸນປີໃໝ່ລະຫວ່າງເດືອນ......ເດືອນຫົກເພັງເພິ່ນເຮັດບຸນ.......ພຣະສົງເຂົ້າພັນສາເມື່ອເດືອນ.......ແລະອອກ...... ເມື່ອເດືອນສິບເອັດເພັງ. ເດືອນສາມເພັງເພິ່ນເຮັດບຸນມາຄະບູຊາແລະບຸນ....... ເມື່ອເດືອນສາມເດືອນສີ່ເພິ່ນເຮັດ....... ເຊິ່ງມ່ວນຊື່ນຫລາຍ.





# ໑໓. ຄວາມສະອາດຂອງວັດ

ໃນບໍຣິເວນວັດບ້ານເຮົາ ມີຄວາມສະອາດສວຍງາມດີ ຕາມກາງເດີ່ນ ກ້ອງຮົ່ມໄມ້ ກ້ອງກຸດີ ກ້ອງຫໍແຈກ ແລະບ່ອນໃດ ເພິ່ນກໍມັ່ນຍົມັດ ປັດກວາດຢູ່ສເມີ ຖ້າເຮົາເບິ່ງ ໃຫ້ຖີ່ຖ້ວນແລ້ວ ກໍບໍ່ຕ່າງກັນ ກັບບໍຣິເວນໂຮງຮຽນບ້ານຂອງເຮົາ.

ເດີ່ນວັດບ້ານເຮົາ ສະອາດດີດັ່ງນັ້ນ ກໍເນື່ອງຈາກພຣະສົງແລະສາມະເນນ ໄດ້ເອົາໃຈໃສ່ ນິວຣະບັດປັດກວາດ ດ້ວຍຕາດຫລືບູ ທັງເຊົ້າແລະແລງ ບ່ອນໃດມີຫຍ້າຮົກເຮື້ອ ເພິ່ນພ້ອມກັນເສັຍອອກ ບ່ອນໃດເປັນໃບ

ເພິ່ນກໍແປງໃຫ້ພຽງສເມີກັນ ບາງເທື່ອພຣະສົງແລະສາ
ມະເນນ ກໍໄດ້ຂໍຄວາມຊ່ອຍເຫຼືອ ບໍາຊາວບ້ານ ໃຫ້ມາ
ຊ່ອຍວຽກການເຫຼົ່ານັ້ນ ໃນເວລາກາງຄືນ ດັ່ງນັ້ນ ເດີ່ນວັດ
ບ້ານເຮົາ ຈຶ່ງຮາບກ້ຽງດີ ເປັນໜ້າສັ່ຣະເສີນ.

ດ້ວຍຄວາມສະອາດ ທີ່ພາໃຫ້ວັດ ມີຄວາມສະງ່າ
ງາມນັ້ນເອງ ຊາວບ້ານແລະແຂກຄົນທັງຫຼາຍ ຈຶ່ງຢາ
ເຂົ້າເບິ່ງ ເຂົ້າຊົມ ແລະພຣະສົງສາມະເນນ ກໍມັກຢູ່ເປັ
ປະຈໍາ.

## ຄໍາອະທິບາຍ:

ດາດ = ດິ້ວໄມ້ໄຜ່ມັດຕິດເຂົ້າກັນເປັນຍຸກວາດ.
ສັ່ຣະເສີນ = ຍ້ອງຍໍ
ເປັນປະຈໍາ = ມີຢູ່ບໍ່ຂາດ.

## ຂໍ້ໃຫຍ່ໃຈຄວາມ:

໑. ເວີ່ງວັດບ້ານຂອງເຮົາສະອາດດີ.
໒. ພຣະສົງສາມະເນນ ແລະຊາວບ້ານ ຊ່ອຍ
ເຫຼືອກັນ ແປງເດີ່ນວັດ ໃຫ້ສະອາດ.
໓. ຄວາມສະອາດຂອງວັດ ພາໃຫ້ພຣະສົງສາ
ມະເນນ ແກວ່ນແລະແຂກຄົນຢາກຊົມ.



## ຄໍາຖາມ:

ແມ່ນໃຜເປັນຜູ້ທໍາຄວາມສອາດ ໃນເວີ່ງວັດ?
ເວລາໃດຊາວບ້ານໄດ້ມາຊ່ອຍເຫຼືອ ພຣະສົງທໍາ
ຄວາມສະອາດເດີ່ນວັດ !
ຄວາມສະອາດຂອງວັດເປັນປໂຍດຢ່າງໃດ?

## ຫັດແຕ່ງເຣື່ອງ:

ໃຫ້ຫາຄໍາຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍແລະຖືກ
ຕ້ອງ:
ບໍຣິເວນວັດແລະໂຮງຮຽນໄດ້.......ປັດກວາດຢູ່
ສເມີ. ຊາວໜຸ່ມບ້ານເຮົາ ທັງຍິງຊາຍພ້ອມກັນ
.......ວັດເວລາ.......ເດີ່ນວັດບ້ານເຮົາຈຶ່ງ...
.....ເປັນໜ້າແກວ່ນ. ວັດບ້ານເຮົາສະອາດ.....
ແຂກຄົນໝັ້ນເຂົ້າ.....ຢູ່ບໍ່ຂາດ.



# ໑໔. ວຽກການຂອງພຣະສົງ
## ສາມະເນນຢູ່ໃນວັດ

ພຣະສົງແລະສາມະເນນ ເປັນຜູ້ປະຕິບັດ ແລະເຜີຍແຜ່ວິຊາຄວາມຮູ້ ທາງສາສນາ ເພື່ອໃຫ້ຄົນທັງຫຼາຍ ປະພຶດດີ ແລະສັດຊື່.

ເຊົ້າແລະແລງ ພຣະສົງສາມະເນນ ໄດ້ໄຫວ້ພຣະສູດມົນ ພາວະນາປາດນ້ຳ ອຸທິດກຸສົນ ໄປເຖິງມະນຸດ ແລະສັດທີ່ມີຄຸນ. ເພື່ອຈະໄດ້ປະຕິບັດ ໃຫ້ຖືກຕ້ອງ ຕາມຄອງທັມ ພຣະສົງແລະສາມະເນນ ພາກັນຊອກຮ່ຳຮຽນ



ຂຽນອ່ານ ໃນຮີດຄອງ ຂອງພຣະພຸທເຈົ້າ.

ຖ້າບໍ່ດັ່ງນັ້ນ ພຣະສົງ ກໍ່ບໍ່ສາມາດ ສັ່ງສອນສິດໂຍມ ຜູ້ທີ່ຈະເຂົ້າບວດໃໝ່ ແລະບໍ່ຮູ້ຈັກຊັກຊວນ ອອກຄົນທຳບຸນໃຫ້ທານ ຕາມຮີດຄອງປະເພນີ.

ນອກຈາກວຽກດັ່ງກ່າວມາແລ້ວ ພຣະສົງແລະສາມະເນນ ຍັງໄດ້ຮັບນິມົນ ໄປທຳບຸນຕາມບ້ານເຮືອນ ໄປສົ່ງສະການຄົນຕາຍ ຫຼືໄປເທສນາຕາມວັດ ແລະຕາມບ້ານຕ່າງ ໆ.

ເມື່ອມີການສ້າງສາ ກຸຕິວິຫານ ຫຼືກິຈການຕ່າງໆ ຢູ່ໃນວັດ ພຣະສົງກໍ່ເປັນຜູ້ແນະນຳ ແລະທັງເປັນທີ່ປຶກສາຫາລື ຂອງຊາວບ້ານອີກດ້ວຍ.

## ຄຳອະທິບາຍ:

ຮີດຄອງ = ລະບຽບ ປະເພນີ.
ອຸທິດກຸສົນ = ສົ່ງບຸນໃຫ້
ນິມົນ = ເຊີນໃຫ້ໄປ.
ສົ່ງສະການ = ມ້ຽນຄົນຕາຍ.

## ຂໍ້ໃຫຍ່ໃຈຄວາມ:

໑. ພຣະສົງເປັນຜູ້ເຜີຍແຜ່ ຄຳສັ່ງສອນ ທາງສາສນາ ແກ່ຄົນທັງຫຼາຍ

໒. ໜ້າທີ່ຂອງພຣະສົງ ກ່ຽວກັບທາງວັດ ແລະທາງບ້ານ.

໓. ການນັບຖືຂອງຊາວບ້ານຕໍ່ພຣະສົງ

## ຄຳຖາມ :

ຢູ່ໃນວັດ ພຣະສົງສາມະເນນເຮັດຫຍັງແດ່?
ນອກຈາກຢູ່ໃນວັດແລ້ວເພິ່ນສັ່ງສອນໃຜອີກແດ່?
ຊາວບ້ານມີຄວາມເອື້ອເຟື້ອກັບພຣະສົງຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນປະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ :

ພຣະສົງສາມະເນນ ປະຕິບັດຕາມ.......ຂອງ



ພຣະພຸທເຈົ້າ. ເຊົ້າແລະແລງ ພຣະສົງສູດມົນຢູ່.......ເພິ່ນຊອກ....... ເພື່ອໃຫ້ເຂົ້າໃຈໃນຣີດຄອງທັມແລະ....... ສິດໃບມຜູ້ບວດໃໝ່. ພວກຊາວບ້ານພາກັນ.......ຕໍ່ພຣະສົງ.



# ໑໕. ປວັດວັດບ້ານເຮົາ

ແຕ່ກ່ອນ ບ້ານເຮົາຍັງບໍ່ທັນມີວັດ ຊາວບ້ານເຮົາ ໄດ້ໄປໂຮມກັນ ເຮັດບຸນໃຫ້ທານ ຢູ່ໃນວັດບ້ານໃກ້ຄຽງ ລາງເທື່ອ ເຮົາກໍໄດ້ໄປນິມົນເອົາພຣະສົງ ວັດບ້ານອື່ນມາ ເຮັດບຸນ ຢູ່ກັບເຮືອນເຮົາເອງ.

ການທ່ຽວໄປເຮັດບຸນ ຢູ່ໃນວັດບ້ານອື່ນ ທຳໃຫ້ຊາວບ້ານ ມີຄວາມລຳບາກຫຼາຍປະການ ພວກຜູ້ເຖົ້າ- ຜູ້ແກ່ ຢາກໄປຄ້າງຈັງຫັນ ແລະເພນກໍຍາກ ທີ່ຈະໄດ້ໄປ ຢາກ ເບິ່ງເທດ ຟັງທັມ ກໍບໍ່ໄດ້ຮັບຄວາມສະດວກ ດ້ວຍເຫດ



ນີ້ ພວກພໍ່ບ້ານແລະເຖົ້າແກ່ ຈຶ່ງໄດ້ດຳລິ ຂໍອະນຸຍາດ ສ້າງວັດຂຶ້ນ ຢູ່ກັບບ້ານຂອງເຮົາ ໃສ່ໂນນສູງບ່ອນນຶ່ງຢູ່ຕໍ່ ໜ້າບ້ານ.

ການສ້າງວັດນີ້ ຊາວບ້ານເຮົາ ໄດ້ໂຮມແຮງ ແລະ ອອກເງິນກັນ ສ້າງກຸຕິຂຶ້ນກ່ອນ ແລ້ວຈຶ່ງໄປນິມົນ ເອົາ ພຣະສົງ ຢູ່ວັດບ້ານອື່ນ ພ້ອມດ້ວຍສາມະເນນສອງຮູບ ມາຢູ່ເປັນປະຈຳ ແຕ່ນັ້ນມາ ຊາວບ້ານເຮົາ ໄດ້ເອົາລູກ ຫຼານເຂົ້າບວດ ຢູ່ໃນວັດນີ້ສເມີ ພາຍລຸນມາ ຊາວບ້ານ ຈຶ່ງໄດ້ສ້າງຫໍແຈກ ຫໍກອງ ທັງເຮັດກອງເພນ ກອງ ຫາງ ແລະຊື້ຄ້ອງ ລະຄັງ ມາທານໃຫ້ວັດ.

ປີຕໍ່ມາ ເພິ່ນໄດ້ຂຍາຍເດີນວັດ ສ້າງສິມ ຂຸດນ້ຳ ສ້າງ ແລ້ວເຮັດຕ້າຍອ້ອມບໍຣິເວນວັດ ດ້ວຍຊັບທີ່ໄດ້ມາ ຈາກສັດທາຂອງປະຊາຊົນ ໃນປາງບຸນຕ່າງໆ. ນອກຈາກ ວຽກດັ່ງກ່າວນີ້ ເພິ່ນຍັງໄດ້ປູກຕົ້ນໂພ ແລະຕົ້ນໄມ້ຕ່າງໆ ອີກ.

ເມື່ອວັດບ້ານເຮົາໄດ້ສ້າງຂຶ້ນ ຢ່າງໝັ້ນຄົງຖາວອນ ແລ້ວ ຊາວບ້ານທຸກຄົນ ມີຄວາມເບີກບານໃຈ.

## ຄຳອະທິບາຍ:

ບີມີນ = ຄ່າເງີນພຣະສົງ.
ລຳບາກ = ຍາກ.
ຂຍາຍ = ເຮັດໃຫ້ກວ້າງອອກ.
ສັດທາ = ຄວາມເຊື່ອຖື.

## ຂໍ້ໃຫ່ງໃຈຄວາມ :

໑. ຊາວບ້ານເຮົາໄດ້ສ້າງວັດຂຶ້ນຢູ່ກັບບ້ານ.
໒. ສິ່ງທີ່ສ້າງຂຶ້ນພ້ອມກັບກັບການສ້າງວັດ.
໓. ຊາວບ້ານອອກເຫື່ອແຮງ ແລະສລະຊັບໃນການສ້າງວັດ.
໔. ຄວາມດີໃຈຂອງຊາວບ້ານເວລາມີວັດແລ້ວ.

## ຄຳຖາມ:

ແຕ່ກ່ອນຊາວບ້ານເຮົາເຮັດບຸນຢູ່ໃສ ?
ເວລາຕັ້ງວັດໃໝ່ເພີ້ນເຮັດອັນໃດກ່ອນ ?



ຊາວບ້ານຮູ້ສຶກຢ່າງໃດເມື່ອໄດ້ມີວັດນີ້ແລ້ວ. ?

## ຫັດແຕ່ງເຣື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ:
ກ່ອນສິບປີຫຼັງບ້ານເຮົາຍັງບໍ່ທັນ.......ການໄປເຮັດບຸນ ຢູ່ວັດບ້ານອື່ນມີຄວາມ.....ຫຼາຍປະການ.ຊາວບ້ານເຮົາໂຮມແຮງ ແລະອອກເງິນສ້າງ.......ຂຶ້ນກ່ອນ.ປີຫຼັງຕໍ່ມາເພີ້ນໄດ້.....ແລະ.......ໃສ່ວັດໃໝ່ຂອງພວກເຮົາ.



# ໑໖. ພໍ່ແມ່ແລະຄອບຄົວຂ້ອຍ

ຄຳມ່ວງຫາກໍກັບມາແຕ່ໂຮງຮຽນ. ເວລານັ້ນ ພໍ່ຂອງລາວກໍກັບມາແຕ່ນາເໝືອນກັນ ລາວແບກໄຖ ຕາມຫຼັງຄວາຍມາ ຢູ່ທາງບ້ານ ແມ່ແລະເອື້ອຍກຳລັງແຕ່ງກິນ ເມື່ອພໍ່ແລະຄຳມ່ວງອາບນ້ຳແລ້ວ ຄາວນຶ່ງ ແມ່ແລະເອື້ອຍກໍຍົກພາເຂົ້າມາ ໝົດທັງຄອບຄົວ ກໍພາກັນນັ່ງອ້ອມພາເຂົ້າ. ຖ້ວຍແກງກໍຍັງຮ້ອນໆ ແລະອອກອາຍຢູ່ ຂອງກິນບໍ່ຫຼາຍ ມີແຕ່ແກງໜໍ່ໄມ້ສົ້ມ ປົ່ນ ປີ້ງປາ ແລະແຈ່ວ ຂອງກິນທີ່ເປັນໜ້າແຊບເທົ່ານັ້ນ ກໍບໍ່ມີ



ແຕ່ວ່າ ແກງຫາກບົວດີ ເຂົ້າກໍຍັງຮ້ອນ ຜູ້ໃດກິນກໍແຊບ.

ອີກປະການນຶ່ງ ຄານເຂົ້ານີ້ ຍິ່ງມີຄວາມແຊບ ທະວີຂຶ້ນໄປ ເພາະຄົນໃນຄອບຄົວ ທີ່ໄດ້ມາທ້ອນໂຮມກັນນັ້ນ ມີຄວາມຖືກຕ້ອງແລະຮັກແພງກັນ ບໍ່ມີສິ່ງໃດ ຈະດີໄປກວ່າຄອບຄົວ ເຊິ່ງມີຄວາມສາມັກຄີ ແລະທ້ອນໂຮມກັນ.

## ຄຳອະທິບາຍ:

ທະວີ = ຫຼາຍຂຶ້ນ.
ທ້ອນໂຮມ = ໂຮມກັນ.

## ຂໍ້ໃຫຍ່ໃຈຄວາມ:

໑. ຄຳມ່ວງມາແຕ່ໂຮງຮຽນ ພໍດີຖືກເວລາພໍ່ຂອງລາວກັບມາແຕ່ເຮັດວຽກຢູ່ນາ.
໒. ແມ່ແລະເອື້ອຍແຕ່ງກິນຢູ່ທາງບ້ານ.
໓. ຄົນໃນຄອບຄົວມີຈິດໃຈຕຸ້ມຕ່ອມ ຄອຍຖ້າອັບປະທານພ້ອມໆກັນ.

## ຄຳຖາມ:

ຄ່ຳມ່ວງກັບມາແຕ່ໂຮງຮຽນເວລາໃດ ?
ແມ່ແລະເອື້ອຍຂອງລາວ ຢູ່ທາງບ້ານແຕ່ງກິນ
ມີຫັຍງແດ່ ?
ຄອບຄົວນີ້ກິນເຂົ້າແລງບ່ອນອັນໃດ ?
ແມ່ນສິ່ງໃດພາໃຫ້ເຮົາຮູ້ວ່າຄອບຄົວນີ້ ຮັກແພງ
ແລະຫ້ອມໂຮມກັນດີ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກ
ຕ້ອງ :
ເວລາກິນແລງ ໝົດທຸກຄົນໃນຄອບຄົວຂອງ
ຂ້ອຍ ພາກັນນັ່ງ......ແລະກິນເຂົ້າກໍ......
ດີ. ອີກປະການນຶ່ງບໍ່ມີອັນໃດຈະດີເລີດກວ່າຄວາມ
.......ແລະ.......ກັນ.





# ໑໗. ເຮືອນຂອງຂ້ອຍ

ເຮືອນຫຼັງເກົ່າ ທີ່ພໍ່ເຖົ້າແລະແມ່ເຖົ້າຂ້ອຍ ໄດ້ພາກັນຢູ່ແຕ່ເດີມນັ້ນ ເພພັງໄປແລ້ວ ດັ່ງນັ້ນ ພໍ່ແມ່ຂ້ອຍຈຶ່ງໄດ້ປຸກເຮືອນໃໝ່ ທີ່ໄດ້ຢູ່ມາ ປະມານສອງປີແລ້ວ.

ເຮືອນຫຼັງນີ້ ປຸກເປັນສາມຫ້ອງ ພື້ນສູງ ມີລະບຽງອ້ອມສາມດ້ານ ມຸງດິນຂໍ ພື້ນແລະຝາເຮັດດ້ວຍແປ້ນ ລະບຽງກ້ຳຂວາ ເປັນບ່ອນອ້າຍແລະຂ້ອຍນອນ ລະບຽງກ້ຳຊ້າຍ ເປັນຫ້ອງນອນຂອງເອື້ອຍ ແລະນ້ອງນີ່ງຂ້ອຍ ສ່ວນລະບຽງທາງໜ້າ ເປັນບ່ອນຮັບແຂກ ແລະກິນເຂົ້າ ພໍ່ເຖົ້າແລະແມ່ເຖົ້າຂ້ອຍ ນອນຢູ່ສ້ວມຖັດຫ້ອງເປົ້າ ພໍ່

ແລະແມ່ຂ້ອຍ ນອນສ່ວນສຸດທ້າຍ.

ເຮືອນຂ້ອຍມີປະຕູສອງປ່ອງ ປູທາງເບື້ອງເປີງແລະເບື້ອງກອຍ ສ່ວນນອນແຕ່ລະຫ້ອງ ມີປ່ອງບ້ຽມອັນນຶ່ງ ຂັ້ນໄດມີສອງອັນ ອັນນຶ່ງກ່າຍຂຶ້ນ ລະບຽງທາງໜ້າ ແລະອີກອັນນຶ່ງ ກ່າຍຂຶ້ນຊານທ່ອງ ຕິດກັບເຮືອນຄົວ.

ສ່ວນຄອກສັດ ແລະລົກໄກ່ ພໍ່ຂ້ອຍເຮັດໃສ່ ແປະຂ້າງເລົ້າເຂົ້າ ດ້ານນຶ່ງຂອງເລົ້າເຂົ້າ ເພິ່ນປຸກເຫີບກວມຄົກມອງ ນ້ອງນີງຂ້ອຍ ມັກປູກດອກໄມ້ ໃສ່ເດີ່ນໜ້າບ້ານ.

ເຮືອນຂ້ອຍບໍ່ໃຫຍ່ ແລະບໍ່ງາມປານໃດ ແຕ່ວ່າຂ້ອຍຫາກພໍໃຈປູ່ກຶນ ທ້ອນໂຮມກັນກັບ ຄອບຄົວຂອງຂ້ອຍ.

## ຄຳອະທິບາຍ:

ຖັດ = ແປະປູຄຽງຂ້າງ.
ເປີງ = ໜ້າຫ້ອງ.
ເບື້ອງກອຍ = ເບື້ອງມີຊານທ່ອງ.
ເຫີບ = ດູບທີ່ເກາະຈ່ອງໃສ່ສະຖານທີ່ອັນໃດອັນນຶ່ງ.



## ຂໍ້ໃຫຍ່ໃຈຄວາມ:

໑. ພໍ່ແລະແມ່ຂ້ອຍປຸກເຮືອນໃໝ່ແທນເຮືອນພໍ່ເຖົ້າ.
໒. ລັກສນະແລະສ່ວນຕ່າງໆຂອງເຮືອນ.
໓. ສະຖານທີ່ປູອ້ອມເຮືອນໃຫຍ່.
໔. ເຮືອນເປັນທີ່ອາສັຍຂອງເຮົາໃນການປູ່ກຶນ.

## ຄຳຖາມ:

ເຮືອນທີ່ພໍ່ແມ່ເຈົ້າປຸກຂຶ້ນໃໝ່ນັ້ນມີຮູບຊົງຢ່າງໃດ?
ແບ່ງເປັນຈັກຫ້ອງ ?
ມີຫ້ອງໃດແດ່?
ປູໃກ້ເຮືອນມີຫຍັງແດ່?
ດ້ວຍເຫດໃດເຈົ້າຈຶ່ງພໍໃຈປູ່ກຶນກັບຄອບຄົວຂອງເຈົ້າ !

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກ
ຕ້ອງ:
ເຮືອນຂອງຂ້ອຍປຸກເປັນ ...... ພື້ນສູງແລະມີ
ລະບຽງສາມດ້ານມຸງ....... ພື້ນ ແລະຝາເຮັ
ດ້ວຍ....... ຂ້ອຍແລະອ້າຍຂ້ອຍນອນຢູ່.....
ເບື້ອງກອນ. ຫ້ອງເປົ່າແລະລະບຽງທາງໜ້າ
ເປັນບ່ອນ.......ແລະ.......





## ໑໗. ວຽກງານໃນຄອບຄົວຂອງຂ້ອຍ

ຄົນໃນຄອບຄົວຂອງຂ້ອຍ ມີວຽກງານປະຈຳວັນ ຢູ່ ໝົດທຸກຄົນ. ພໍ່ເຖົ້າແລະແມ່ເຖົ້າ ເຖິງວ່າເພິ່ນອາຍຸແກ່ ຫຼາຍແລ້ວ ເພິ່ນກໍຍັງເຮັດວຽກໄດ້ຢູ່ ຕາມເຫື່ອແຮງຂອງ ເພິ່ນ ສ່ວນຫຼາຍເພິ່ນເອົ້າບ່ຳວຽກງານ ທຳບຸນສິນກິນ ທານ ເພິ່ນໄປຕັກບາດ ຈັ້ງຫັນ ເພນ ຟັງເທດ ຟັງ ທັມ ຊ່ອຍທຳບຸນຂອງຊາວບ້ານ ແລະບຸນວັດ. ເວລາຄ່ຳ ມາ ລາງເທື່ອ ແມ່ເຖົ້າຂອງຂ້ອຍ ກໍເຂັ່ນຝ້າຍ ພໍ່ເຖົ້າ ຂອງຂ້ອຍກໍຈັກຕອກ ສັບເຊືອກ ຫຼືສານແຫ ສານມອງ

ແລະກະດຸ້ງ.

ສ່ວນພໍ່ແມ່ຂອງຂ້ອຍ ເຮັດວຽກໜັກຢູ່ນາ ຢູ່ສວນ ຢູ່ບ້ານ ແລະຢູ່ເຮືອນ. ລາງເທື່ອ ເພິ່ນພາກັນເຂົ້າໄປປ່ ຫາຫຼົວ ຫາຟືນ ແລະຕັດໄມ້ມາໄວ້ໃຊ້ ນອກຈາກນັ້ນ ເພິ່ນຍັງໄດ້ໄປຫາປາ ມາລ້ຽງຄອບຄົວ ທຸກສິ່ງທີ່ຄອບຄ ຕ້ອງການ ຢູ່ກິນ ນຸ່ງຫົ່ມ ແລະໃຊ້ຈ່າຍ ທັງໝົດນີ້ ແມ່ນພໍ່ແມ່ຂອງຂ້ອຍ ຊ່ອຍກັນຄິດ ແລະຫາມາທັງນັ້ນ

ເພື່ອບັນເທົາຄວາມອິດເມື່ອຍ ຂອງພໍ່ແມ່ຂ້ອຍ ອ້າ ເອື້ອຍແລະຂ້ອຍເອງ ກໍໄດ້ຊ່ອຍວຽກຂອງເພິ່ນ ຢູ່ທຸກ ເວລາ ບາງເທື່ອ ອ້າຍຂ້ອຍໄດ້ຊ່ອຍພໍ່ ຖາງນາ ໄຖນາ ແລະເຮັດວຽກອື່ນໆ ເອື້ອຍຂ້ອຍຊ່ອຍແມ່ເຮັດວຽກເຮືອນ ໜຶ້ງເຂົ້າ ໄປຕລາດ ຕັກນໍ້າ ແລະຄົວກິນ.

ເມື່ອເລີກໂຮງຮຽນແລ້ວ ຂ້ອຍແລະນ້ອງ ກໍຟ້າວ ເມືອຊ່ອຍວຽກການ ຂອງພໍ່ແມ່ ແລະອ້າຍເອື້ອຍ ຄືວ່າ ຂ້ອຍກໍາກັບ ນໍາງົວຄວາຍ ແລະເກືອເປັດ ເກືອໄກ່ ນ້ອ ຂ້ອຍຊ່ອຍກໍາກັບພາເຂົ້າ ລ້າງຖ້ວຍຊາມ ແລະປັດກວາດ ປ້າວເຮືອນ.

ເພື່ອໃຫ້ໄດ້ຢູ່ສຸກສະບາຍ ທຸກຄົນໃນຄອບຄົວ ຕ້ອງ



ພ້ອມກັບດຸໝັ່ນ ຕໍ່ວຽກການທຸກຢ່າງ.

## ຄໍາອະທິບາຍ:

ປະຈໍາວັນ = ທຸກມື້.
ບັນເທົາ = ເຮັດໃຫ້ເບົາບາງລົງ.
ກໍາກັບ = ເອົາໃຈໃສ່ຕໍ່ໜ້າທີ່ວຽກການ.
ດຸໝັ່ນ = ບໍ່ຄ້ານຕໍ່ວຽກການ.

## ຄໍາຖາມ:

ພໍ່ເຖົ້າແລະແມ່ເຖົ້າຂອງເຈົ້າຊ່ອຍວຽກຫຍັງໃຫ້ຄອບຄົວແດ່?

ວຽກການສ່ວນໃຫຍ່ຂອງພໍ່ແມ່ເຈົ້າມີອັນໃດແດ່?

ເອື້ອຍແລະອ້າຍຂອງເຈົ້າ ຊ່ອຍວຽກບ້ານການເຮືອນຢ່າງໃດແດ່?

ເຈົ້າແລະນ້ອງຂອງເຈົ້າໄດ້ເຮັດຫຍັງຊ່ອຍພໍ່ແມ່ແດ່?

## ຫັດແຕ່ງເລື່ອງ :

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍແລະຖືກຕ້ອງ:

ເວລາກາງຄືນແມ່ເຖົ້າຂ້ອຍ.......ພໍ່ເຖົ້າຂ້ອຍ ....... ແລະສາວ ....... ພໍ່ແມ່ຂ້ອຍເຮັດວຽກ......ປູ່ນາຢູ່......ແລະປູ່......ອ້າຍຂ້ອຍຊ່ອຍວຽກຂອງ ....... ແລະເອື້ອຍຂ້ອຍຊ່ອຍວຽກຂອງ.......ຂ້ອຍແລະ.......ກໍໄດ້ຊ່ອຍວຽກພໍ່ແມ່ແລະ......ຄືກັນ.





## ໑໙. ສັດທີ່ເຮົາລ້ຽງ

ຊາວບ້ານເຮົາສ່ວນຫຼາຍ ເຮັດໄຮ່ ເຮັດນາ ແລະເຮັດສວນ ດັ່ງນັ້ນ ທຸກຄອບຄົວຈຶ່ງໄດ້ລ້ຽງສັດ ໄວ້ຊ່ອຍແຮງ ສັດທີ່ເຮົາລ້ຽງໄວ້ໃຊ້ມີ ງົວແລະຄວາຍ ໝູແລະເປັດໄກ່ລ້ຽງໄວ້ ເປັນອາຫານ ໝາລ້ຽງໄວ້ເຝົ້າເຮືອນ ແມວລ້ຽງໄວ້ກິນໜູ.

ຄອບຄົວຂ້ອຍ ມີຄວາຍເຖິກສອງໂຕ ຄວາຍແມ່ໂຕນຶ່ງ ມີລູກຕິດ ແລະງົວເຖິກ ອີກຄູ່ນຶ່ງ ຄວາຍສຳລັບແກ່ຖາດແລະໄຖ ລາງເທື່ອ ພໍ່ຂ້ອຍເອົາໄປລາກໄມ້ທ່ອນ

ອອກມາຈາກປ່າ ງົວຄູ່ນັ້ນໃຊ້ຈຳເພາະ ແຕ່ແກ່ກວຽນ ແລະໜ້ອຍເທື່ອທີ່ສຸດ ຈະໄດ້ໃຊ້ແກ່ຕາດຊ່ອຍຄວາຍ.

ປູ່ຕາມເດີ່ນບ້ານ ແມ່ຂ້ອຍໄດ້ລ້ຽງໄກ່ຜູ້ ແລະໄກ່ເ ປະມານ໕໐ ໂຕ ເປັດ ໑໕ ໂຕແລະຫ່ານອີກສອງຄູ່ ຢູ່ໃນຄອ ເພິ່ນລ້ຽງໝູເຖິກສອງໂຕ ໝູແມ່ໂຕນຶ່ງ ກັບລູກຫົກໂຕ.

ເພື່ອຮັກສາເຮືອນ ຂ້ອຍໄດ້ລ້ຽງໝາເຖິກໄວ້ໂຕນຶ່ງ ໝາຂອງຂ້ອຍເຫົ່າດີເຕັມທີ ມັນຮູ້ຈັກເຈົ້າຂອງເຮືອນ ໝົດທຸກຄົນ ເມື່ອເຫັນໃທເຮືອນ ເຂົ້າບ້ານມາ ມັນແລ່ ມາຕ້ອນ ດ້ວຍຄວາມດີໃຈ ທັງໂກວຫົວແລະແກວ່ງຫາ

ແຕ່ກ່ອນ ປູ່ເຮືອນຂ້ອຍ ມີໜູຫຼາຍ ມັນກັດເຄື່ອງ ນຸ່ງ ແຜ່ນແພແລະເສື່ອສາດ. ແມ່ຂ້ອຍທົນບໍ່ໄດ້ ຈຶ່ງໄດ້ ເອົາແມວມາລ້ຽງ. ແຕ່ນັ້ນມາ ໜູປູ່ເຮືອນຂ້ອຍເລີຍງຽບ ຫາຍໄປ ແຕ່ວ່າຕ້ອງໄດ້ລະວັງມ້ຽນມັດ ຊີ້ນປາອາຫານ ໄວ້ໃຫ້ດີ ບໍ່ດັ່ງນັ້ນ ແມວບັກຄ່ຳຈະໄປລັກກິນໝົດ.

ເຮົາຕ້ອງຮັກສັດທີ່ເຮົາລ້ຽງ ໂດຍໃຫ້ເຂົາໄດ້ກິນອີ່ມ ແລ້ວໃຊ້ວຽກເຂົາ ແຕ່ພໍດີພໍງາມ.



## ຄຳອະທິບາຍ:

ຄວາຍເຖິກ = ຄວາຍຜູ້.
ລູກດົກ = ມີລູກມາບ່ຳ.
ລາກໄມ້ = ແກ່ໄມ້.
ທົນບໍ່ໄດ້ = ອົດບໍ່ໄດ້.
ງຽບ = ມິດບໍ່ມີສຽງ.

## ຄຳຖາມ:

ຊາວບ້ານເຈົ້າລ້ຽງສັດແນວໃດໄວ້ຊ່ອຍເຮັດວຽກ ?
ປູ່ເຮືອນເຈົ້າມີງົວແລະຄວາຍຈັກໂຕ ?
ສັດຈຳພວກນີ້ແຕ່ລະປ່າງມີປໂຍດອັນໃດ ?
ຕາມເດີ່ນບ້ານໃທເຮືອນເຈົ້າໄດ້ລ້ຽງຫຍັງແດ່ ?
ໝາແລະແມວລ້ຽງໄວ້ເຮັດຫຍັງ ?
ເຮົາຄວນຖນອມສັດປ່າງໃດ ?

## ຫັດແຕ່ງເຣື່ອງ:

ໃຫ້ຫາຄຳຕື້ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ:

ຊາວບ້ານເຮົາເຮັດໄຮ່ເຮັດນາແລະເຮັດ....... ຄວາຍລ້ຽງໄວ້ແກ່.......ແລະ.......ງົວໃຊ້ແກ່..... ໝູແລະ......ໄກ່ລ້ຽງໄວ້ເປັນ.....ໝາເຝົ້າ........ ເວລາກາງຄືນ. ແມວຫາກິນ......ຢູ່ເຫິງຄວນເຮືອນ.





## ໑໐. ການຫາລາຍໄດ້ຂອງຄອບຄົວຂ້ອຍ

ທຸກໆຄົນໃນຄອບຄົວຂ້ອຍ ໄດ້ຊ່ອຍກັນເຮັດເຄື່ອງຂາຍ ເພື່ອຫາລາຍໄດ້ປະຈຳວັນ.

ພໍ່ເຖົ້າຂ້ອຍ ສານຕິບເຂົ້າ ເຮັດກະຊ້າ ກະຕ່າແບບຕ່າງໆ ເພິ່ນເຮັດຫາ ເຫຼັ້ນ ອັກ ຄອນອັກ ແລະພົມ ໄວ້ຂາຍ ລາງເທື່ອ ເພິ່ນເສັນປານ ສານແຫ ສານມອງ ຫຼືກະຕັ້ງ ແມ່ເຖົ້າຂ້ອຍຫຍິບໃບເຕີຍ ແລະໃບຄຸ້ມ ເພື່ອຫໍກະບອງ.

ແມ່ແລະເອື້ອຍເອົາໃຈໃສ່ ໃນການຕຳຫູກ ເພິ່ນຕຳ

ແພຝ້າຍ ແພ ໄໝ ແລະຜ້ານຸ່ງ. ເພິ່ນເຮັດໃຫ້ ຕາມຄວາມຕ້ອງການ ຂອງຜູ້ສັ່ງຊື້. ນອກນັ້ນ ເພິ່ນຍັງຕ່ຳສິ້ນໄໝ ສິ້ນຝ້າຍ ແພອີໂປ້ ຜ້າສະໄຫຼ້ງ ໄວ້ໃຊ້ໃນຄອບຄົວ.

ໃນອະດູແລ້ງ ພໍ່ແລະອ້າຍ ໄດ້ພາກັນເຂົ້າປ່າ ຟັນຟືນຂາຍ ໃຫ້ເຕົາຖ່ານ ແລະເຕົາດິນຈີ່. ລາງປີ ເພິ່ນຕັ້ງຕໍ່ແຕ່ຕັດໄມ້ທ່ອນ ຂາຍໃຫ້ໂຮງເລື່ອຍ ຫຼື ບໍ່ດັ່ງນັ້ນ ເພິ່ນກໍຟັນເສົາ ໄວ້ຂາຍໃຫ້ພວກເຮັດເຮືອນ.

ແມ່ແລະເອື້ອຍຂອງຂ້ອຍ ທ່ຽວໄປຕລາດໃນເມືອງເກືອບທຸກມື້ ເພິ່ນໄປຂາຍຜັກ ໝາກເຜັດ ໝາກເຂືອ ໄຂ່ ປາ, ຫຼື ,ບາງເທື່ອ ກໍໄປຂາຍສິ້ນ ຜ້າສະໄຫຼ້ງ ຜ້າອີໂປ້. ເມື່ອໄດ້ເງິນແລ້ວ ເພິ່ນຊື້ຂອງທີ່ເຮົາບໍ່ມີ ແລະເຮັດບໍ່ໄດ້ ຢູ່ໃນຄອບຄົວ ມາກິນແລະມາໃຊ້.

ບາງຄັ້ງບາງຄາວ ພໍ່ຂ້ອຍໄດ້ພາແມ່ຂ້ອຍ ໄປຂາຍຂອງໃນເມືອງ ທຸກຄັ້ງໃດ ທີ່ເພິ່ນໄປນຳກັນ ຕ້ອງມີຂອງຂາຍເຕັມກວຽນ ເພິ່ນໄປຂາຍເຂົ້າສານ ປາແດກ ກະບອງ ໝູ ແລະເປັດໄກ່ ລາງເທື່ອ ກໍແມ່ນໄປຂາຍເຄື່ອງປູກ ເຊັ່ນກ້ວຍ ອ້ອຍ ໝາກອຶ ໝາກໂຕ່ນ ມັນດ້າງ ມັນເຜົາ ແລະເຄື່ອງອື່ນໆ ອີກ.



ຄອບຄົວຂ້ອຍ ບໍ່ມີຄວາມຂາດເຂີນ ໃນການຢູ່ກິນ ແລະນຸ່ງຫົ່ມ ດ້ວຍວ່າໝົດທຸກຄົນ ໄດ້ພ້ອມພຽງກັນເອົາໃຈໃສ່ ເຮັດວຽກເຮັດການ.

## ຄຳອະທິບາຍ:

ເລັນປ່ານ = ບິດປ່ານໃຫ້ເປັນເສັ້ນ.
ເປັນປະຈຳ = ເຮັດຢູ່ເລື້ອຍໆ.
ຫາລາຍໄດ້ = ຫາເງິນ.
ບາງຄັ້ງ ບາງຄາວ = ນານຈຶ່ງມີເທື່ອນຶ່ງ.

## ຂໍ້ໃຫຍ່ໃຈຄວາມ:

໑. ການຫາລາຍໄດ້ແຕ່ລະຄົນໃນຄອບຄົວຂ້ອຍ.
໒. ການພ້ອມພຽງຂອງຄົນໃນຄອບຄົວ ພາໃຫ້ມີຄວາມສະດວກໃນການຫາລາຍໄດ້.

## ຄຳຖາມ:

ພໍ່ເຖົ້າແລະແມ່ເຖົ້າເຈົ້າເພິ່ນເຮັດຫັງງຂາຍ ?
ແມ່ແລະເອື້ອຍເຈົ້າຕຳສົບ ແລະແຜ່ນແພ
ເພື່ອປໃບດອັນໃດ ?
ພໍ່ແລະອ້າຍເຈົ້າຫາເງິນໄດ້ປ່າງໃດ ?
ແມ່ແລະເອື້ອຍເຈົ້າໄປຕລາດເກືອບທຸກມື້ ເພື່ອ
ຂາຍຫັງງ ?
ພໍ່ເຈົ້າໄປຕລາດເພື່ອຂາຍຫັງງແດ່ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກ
ຕ້ອງ :
ຄົນໃນຄອບຄົວຂ້ອຍ ........ ເຮັດເຄື່ອງຂາຍ
ພໍ່ເຖົ້າຂ້ອຍຈັກດອກສານ .....ເລັບປ່ານແລ້ວ
ສານ ....ແມ່ເຖົ້າທໍ່...ຂາຍ. ແມ່ແລະເອື້ອຍ
ຂ້ອຍເຮັດ .... ເພິ່ນຕຳ .... ແລະ....ແມ່
ແລະເອື້ອຍຂ້ອຍໄປ .... ທີ່.... ເກືອບທຸກມື້.





# ໒໑. ຍາດພີ່ນ້ອງຂອງຄອບຄົວຂ້ອຍ

ຄອບຄົວຂ້ອຍ ມີຍາດພີ່ນ້ອງປູ່ຫຼາຍຄົນ ລາງ
ພວກ ກໍ່ປູ່ກັບບ້ານດຽວກັນ ນອກນີ້ ຍັງມີອີກ ຫຼາຍ ຄົນ
ປູ່ບ້ານອື່ນ.

ພໍ່ເຖົ້າແລະແມ່ເຖົ້າຂ້ອຍ ມີລູກ ໕ ຄົນ ຍິງສອງ
ແລະຊາຍສາມ ແມ່ຂ້ອຍເປັນລູກສາວກົກ ຖັດລົງໄປ
ແມ່ນບ້າບ່າວສີ ບ້າສາວແສງ ບ້າບ່າວຈັນ ແລະບ້າ
ບ່າວເພັງ ພວກບ້າບ່າວ ແລະບ້າສາວ ໄດ້ເອົາເມັຽເອົາ
ເອົາຜົວ ເປັນປ້າວເປັນເຮືອນໝົດແລ້ວ ຍັງແຕ່ບ້າບ່າວ

ເພັງ ທີ່ບວດເປັນພຣະ ໄປຮຽນຢູ່ວຽງຈັນ.

ສ່ວນປູ່ແລະຍ່າຂ້ອຍ ມີລູກສີ່ຄົນ ແຕ່ເພິ່ນບໍ່ໄດ້ຢູ່ ບ້ານດຽວກັນກັບຂ້ອຍ ເພິ່ນຢູ່ເມືອງມະຫາໄຊ ແຂວງ ຄຳມ່ວນ. ອ້າຍພໍ່ຂ້ອຍມີຊື່ວ່າລຸງສິງ ນ້ອງສາວຜູ້ຖັດເພິ່ນ ແມ່ນອາອຳພອນ ແລະນ້ອງຊາຍຫຼ້າ ຊື່ວ່າອາວສອນ

ລຸງສິງ ລາວໄປທ່ຽວຄ້າຂາຍ ເລີຍໄດ້ເມັຽ ຢູ່ທີ່ ປາກຊັນ ແຂວງບໍຣິຄັນ ແລ້ວກໍຕັ້ງບ້ານເຮືອນ ຢູ່ທີ່ນັ້ນ ພໍ່ຂ້ອຍໄດ້ບວດເປັນພຣະສົງ ຢູ່ກັບບ້ານເພິ່ນເອງ ແລ້ວ ສິກມາເອົາເມັຽ ຢູ່ບ້ານເຮົານີ້ ອາອຳພອນ ໄດ້ຜົວຢູ່ກັບ ບ້ານ ແທນເຮືອນປູ່ຍ່າຢູ່ ສ່ວນອາວສອນ ເປັນຂ້າຣາຊ ການ ໄປໄດ້ເມັຽ ຢູ່ຫຼວງພຣະບາງ.

ນອກຈາກພວກພີ່ນ້ອງ ທີ່ໄດ້ກ່າວມາແລ້ວນີ້ ຄອບ ຄົວຂ້ອຍຍັງມີຍາຕິພີ່ນ້ອງ ທາງຝ່າຍພໍ່ ແລະຝ່າຍ ແມ່ ອີກຫຼວງຫຼາຍ ພວກພໍ່ຕາ ແມ່ນາຍ ແລະ ພວກເປັນສາຍເລືອດ ອັນດຽວກັນ ມາແຕ່ປູ່ ຍ່າ ຕາ ນາຍ ບາງມີຫຼາຍ ແຈກຢາຍຢູ່ທົ່ວທຸກແຫ່ງ ໃນປະ ເທດລາວ ຍາຕິພີ່ນ້ອງ ເຊື້ອສາຍດຽວກັນກັບຂ້ອຍ ໄດ້ ແຈກຢາຍ ຢູ່ຫ່າງໄກກັນກໍຈິງ ແຕ່ຫາກສາມັກຄີ ຮັກ ແພງສືບທາວຫາກັນ ແລະຊ່ອຍເຫຼືອ ກັນສເມີ.



## ຄຳອະທິບາຍ:

ນ້າບ່າວ = ນ້ອງຊາຍແມ່.
ນ້າສາວ = ນ້ອງສາວແມ່.
ລຸງ = ອ້າຍພໍ່ຫຼືອ້າຍແມ່.
ອາວ = ນ້ອງຊາຍພໍ່.
ອາ = ນ້ອງສາວພໍ່.
ພໍ່ຕາ = ນ້ອງຊາຍແມ່ເຖົ້າ.
ແມ່ນາຍ = ນ້ອງສາວແມ່ເຖົ້າ.
ຍາຕິພີ່ນ້ອງ = ພີ່ນ້ອງເຊື້ອສາຍດຽວກັນ

## ຂໍ້ໃຫຍ່ໃຈຄວາມ:

໑. ເຊື້ອສາຍຂອງຄອບຄົວ.
໒. ພີ່ນ້ອງຝ່າຍແມ່.
໓. ພີ່ນ້ອງຝ່າຍພໍ່.
໔. ຄວາມພົວພັນຂອງຄອບຄົວ.

## <u>ຄຳຖາມ:</u>

ເຈົ້າມີຍາດພີ່ນ້ອງຫຼາຍບໍ ?
ຄົນພວກນີ້ເພິ່ນປູ່ໃສແດ່ ?
ພໍ່ເຈົ້າມີນ້ອງອ້າຍນຳກັນຈັກຄົນ ແລະເຈົ້າເອີ້ນ
ເພິ່ນວ່າຈັ່ງໃດ?
ທາງຝ່າຍແມ່ເດມີຈັກຄົນ ?
ນອກຈາກນ້ອງອ້າຍຂອງພໍ່ຫຼື ແມ່ຂອງເຈົ້າແລ້
ຍາດພີ່ນ້ອງຂອງຄອບຄົວເຈົ້າມີໃຜອີກແດ່ !

## <u>ຫັດແຕ່ງເລື່ອງ :</u>

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍແລະຖືກ
ຕ້ອງ:
ຄອບຄົວຂ້ອຍມີ....ຫຼາຍຄົນ. ພໍ່ຂ້ອຍມີນ້ອງ
ອ້າຍນຳກັນ....ຄົນ ອ້າຍພໍ່ຫຼື ແມ່ຂ້ອຍເອີ້
ວ່າ..... ເອື້ອຍພໍ່ເອື້ອຍແມ່ຫຼື ເມັຽຂອງລຸງ
ເອີ້ນວ່າ ..... ແລະ .... ນ້ອງຊາຍແລະນ້ອງ
ສາວຂອງພໍ່ເອີ້ນວ່າ ...... ແລະ ...





## ໑໖. ອ້າຍກົກແລະນ້ອງ

ຄົນຜູ້ເປັນອ້າຍເອື້ອຍ ເກີດກ່ອນກົກເຂົາ
ແລ້ວເລົ່າມີຊາຍຍິງ ນ້ອງຕິບຕາມເລື້ອຍ
ນັບເນື້ອງເປັນອ້າຍນ້ອງ ພໍ່ແມ່ດຽວຮ່ວມ
ຄວນທີ່ນ້ອງເກີດຫຼ້າ ຢຳອ້າຍຢູ່ສເມີ.
ເພາະເພື່ອອ້າຍກົກນີ້ ໂດຍດັ່ງພໍ່ແມ່
ເວລາພໍ່ແມ່ໜີ ບໍ່ປູ່ບຳເບນໂກ້
ອ້າຍກົກເປັນຄົນສົ່ງ ຊອມເຮົາຊູ່ບາດຢ່າງ
ທັງເຊັດລ້າງ ຕົວນ້ອງທີ່ໝັ່ນໝອງ.

| | |
|---|---|
| ແລ້ວບ່ງພ້າ | ພັດປ່ງນຂັດສີ |
| ໂດຍບໍ່ມີຄວາມອິນ | ຂີດງດສັງສົນນີ້ |
| ຄວນທີ່ເຮົາແນວນ້ອງ | ນັບຖື ເໝືອນພໍ່ແມ່ |
| ຢ່າໂກດກ້າ | ແຂງເຂັ້ມຕໍ່ພີ່ຊາຍແທ້ເນີ |
| | ມະຫາແກ້ວ. |

## ຄຳອະທິບາຍ:

ຄົນສິ່ງ = ຜູ້ເບິ່ງ ຜູ້ຊ່ອຍ.
ຂັດສີ = ຮຸກ ລ້າງ.
ຄວາມອິນ = ຄວາມອັດໃຈ.
ໂກດກ້າ = ຮ້າຍ ດ່າ ປ້ອຍ.

## ຂໍໃຫ່ງໃຈຄວາມ:

໑. ການເປັນອ້າຍເອື້ອຍນ້ອງຮ່ວມກັນ.
໒. ການດູແລຂອງອ້າຍເອື້ອຍຕໍ່ນ້ອງ.
໓. ຄວາມປະພຶດດີຂອງນ້ອງຕໍ່ອ້າຍເອື້ອຍ.



## ຄຳຖາມ:

ອ້າຍແລະເອື້ອຍແມ່ນຜູ້ປ່າງໃດ?
ຜູ້ເປັນນ້ອງຄວນເຮັດປ່າງໃດ ຕໍ່ຜູ້ເປັນອ້າຍແລະເອື້ອຍ!
ອ້າຍແລະເອື້ອຍກົກປ່ງນເໝືອນໃຜ?
ເວລາບໍ່ມີພໍ່ແມ່ ອ້າຍແລະເອື້ອຍຄວນທຳປ່າງໃດຕໍ່ພວກນ້ອງ?
ນ້ອງຕ້ອງຕອບແທນບຸນຄຸນອ້າຍແລະ ເອື້ອຍປ່າງໃດ?

## ຫັດແຕ່ງເລື່ອງ:

ຈົ່ງຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ:
ຄົນຜູ້ເປັນ... , ເກີດກ່ອນກົກເຮົາແລ້ວເລົ່າມີຊາຍຍິງ .....ຕາມເລື່ອນນັບເນື່ອງເປັນ.....
ພໍ່ດງວຮ່ວມຄວນທີ່ນ້ອງ .... ປ່າອ້າຍປູ່ສເມີ.
ອ້າຍກົກເປັນຄົນ .... ເຮົາຊູ່ບາດປ່າງທັງ ເຊັດລ້າງຕົວນ້ອງທີ່.....



## ໒໓. ອ້າຍກິກແລະນ້ອງ (ຕໍ່)

ຍາມເມື່ອນ້ອງນັ່ງໄຫ້    ແອ່ວອອກສິນລະວິນ
ອ້າຍກິກອຸ້ມເອົາໄປ    ຊອກສແວງຫາຫຼິ້ນ
ຫັງທີ່ແລດູນ້ອງ    ລະວັງຄອຍຄິບອື້ນ
ບໍ່ໃຫ້ມາຂົ່ມຫ້າມ    ເຫັງນ້ອງສິ່ງບໍ່ດີ.
ລາງເທື່ອເຮົາດ່າປ້ອຍ    ຕີບຕ່ອຍຫມົດແຮງ
ອ້າຍກິກລາວກໍ່ມີຄວາມອົດ    ບໍ່ຈົ່ມຈາຈັກໜ້ອຍ
ເຊົ້າແລະບ່ຳ    ລາວກໍ່ຕ່າວຕ່ຳຕັກ
ເວລາແລງງາຍຊ້ຳ    ໜັ້ງປຸບປັບນ້ອງ



ອ້າຍກິກມີຄຸນລົ້ນ    ສເມີພຽງພໍ່ແມ່
ຄວນທີ່ນ້ອງຜູ້ຫຼ້າ    ຢຳອ້າຍປູ່ສເມີແທ້ແລ້ວ!
ນະຫາແກ້ວ.

## ຄຳອະທິບາຍ:

ສິນລະວິນ = ວຸ້ນວາຍ.
ສແວງ = ຊອກຫາ.
ເກີດຫຼ້າ = ເກີດລຸນຫຼັງ.
ຢຳ = ນັບຖື.

## ຂໍ້ໃຫ່ຍໃຈຄວາມ:

໑. ອ້າຍເອື້ອຍເອົາໃຈແລະຮັກສານ້ອງ.
໒. ການ ຖນອມ ຂອງອ້າຍເອື້ອຍມີຕໍ່ນ້ອງ.
໓. ນ້ອງຄວນຢຳເກງອ້າຍເອື້ອຍ.

## ຄຳຖາມ:

ເມື່ອນ້ອງໄຫ້ແອ່ວອ້າຍກົກຄວນເຮັດຢ່າງໃດ ?
ເວລານ້ອງດ່າປ້ອຍຕີບຕີ ອ້າຍກົກຄວນມີນ້ຳໃຈ
ຢ່າງໃດ ?
ເປັນຫຍັງອ້າຍກົກຈຶ່ງມີບຸນຄຸນເໝືອນພໍ່ແມ່ ?
ນ້ອງຄວນເຮັດຢ່າງໃດຕໍ່ອ້າຍ ?

## ຫັດແຕ່ງເລື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍ ແລະຖືກ
ຕ້ອງ:
ຍາມເມື່ອນ້ອງ....ແອ່ວ ອອດ.....ອ້າຍກົກ
.... ເອົາໄປຊອກ....ຫາ.... ລາງເທື່ອ
ເຮົາ...ຕີບຕ່ອຍ.... ລາວກໍ່... ບໍ່ຈົ່ມຈາຈັກ
ໜ້ອຍ. ອ້າຍກົກນີ້.... ສເມີພຽງ... ຄວນທີ່
....ເກີດຫຼາ ...ປູ່ສເມີ.





## ໑໔. ແມ່ເຖົ້າກ່ອມຫຼານນ້ອຍ

ປູ່ແຈເຮືອນຫຼັງນຶ່ງ ພໍເວລາງຽບສງັດດີ ທັງແດດກໍກ້າ ແລະຫາລົມຈະພັດກໍບໍ່ມີ ໄດ້ຍິນແຕ່ສຽງແມ່ເຖົ້າກ່ອມຫຼານນ້ອຍຢູ່ໃນເປວ່າ:

ນອນສາເປີຄຳສິງເຮີຍ ປາຊູ່ໄຫ້ຫຼັບຕາແມ່ຊິກ່ອມ ຄັບວ່າເຂົ້າຫາກສຸກອ່ອນແລ້ວ ອວນເຈົ້າຈຶ່ງຄ່ອຍກິນ ແມ່ຈັກພາໄປຫຼິ້ນ ໃຫ້ສະບາຍໃຈຈັກໜ່ອຍ ນອນສາແມ່ເປີ!

ເດັກໄດ້ຍິນສຽງກ່ອມ ກໍເລີຍຫຼັບ ແລະແມ່ເຖົ້າກໍເລີຍຫຼັບເຊື່ອນໄປເໝືອນກັນ ເມື່ອແມ່ເຖົ້າຊວາດຕື່ນ ກໍເລີຍກ່ອມອີກວ່າ

ນອນສາເປີຄໍາສິງເຮີຍ! ແມ່ເຈົ້າເມື່ອຍບົກແດ່ງບໍ່ຊາ ແມ່ເຈົ້າເມື່ອຍບົກຂາບໍ່ຂື້ນ ມີແຕ່ທໍາພຽນສ້າງການນາທຸກເຊົ້າຄໍ່າ ຄຶດປາກໄດ້ເຂົ້າ ມາລ້ຽງເຈົ້າໃຫ້ໃຫຍ່ສູງ ທັງທີ່ຮ້ອງແຈ້ວໆ ນານນົກສະກຸນາ ມັນຈັກມາພາງານ ໃຫ້ເຂົ້ານາເສັ້ງສຽງ.

ມະຫາແກ້ວ.

## ຄໍາອະທິບາຍ:

ກ່ອມ = ເຮັດໃຫ້ນອນຫຼັບ.
ງຽບສງັດ = ມິດ ບໍ່ມີສຽງ
ສະກຸນາ = ນົກ.

## ຂໍ້ໃຫຍ່ໃຈຄວາມ :

໑. ແມ່ເຖົ້າເຍົ້າຫຼານນອນ.



໒. ຄວາມກ່ອມຂອງແມ່ເຖົ້າຊີ້ໃຫ້ເຫັນວ່າ ພໍ່ແມ່ມີຄວາມລໍາບາກໃນການເຮັດວຽກ.

## ຄໍາຖາມ :

ແມ່ເຖົ້າກ່ອມຫຼານນ້ອຍຢູ່ໃສ ?
ເປັນຫຍັງເດັກນ້ອຍຈຶ່ງປາກນອນໃນເວລານັ້ນ ?
ແມ່ເຖົ້າກ່ອມຫຼານນ້ອຍວ່າປ່າງໃດ ?
ເປັນດ້ວຍເຫດໃດເດັກນ້ອຍຈຶ່ງຫຼັບໄປ ?

## ຫັດແຕ່ງເລື່ອງ :

ໃຫ້ຫາຄໍາຕື່ມໃສ່ບ່ອນຍະໄວ້ນັ້ນໃຫ້ພໍແລະຖືກຕ້ອງ:

ປູ່.... ຫຼັງນຶ່ງພໍເວລາ..... ແດດກໍ... ແລະ ຫາ.... ຈະພັກກໍບໍ່ມີ. ໄດ້ຍິນແຕ່... ແມ່ເຖົ້າ.... ຫຼານນ້ອຍຢູ່ໃນ....ວ່າ: ນອນສາເປີ ...ເຮີຍ! ຢ່າຊູ່ໃຫ້... ແມ່ຊີ.... ຄັນວ່າເຂົ້າຫາກ..... ອອນເຈົ້າຈຶ່ງຄ່ອຍ.....



# ໑໕. ຄວາມອ້ອນວອນຂອງນົກຍາງ

ບ້າງມີນົກຍາງເບື້ອນ  ສແວງເຊີຍຊອກເຫື່ຽອ
ເລີຍເລົ່າໄປຖືກແຮ້ວ  ພານຫ້າງຮອບໜອງ
ພານກໍບົບກີໄກ້  ຍາງຂາວຂົນປອດ
ຖືຖືບເມືອຮອດບ້ານ  ເຮືອນຫ້ອງແຫ່ງຕົນ
ແລ້ວເລົ່າສັ່ງຈ້ອຍ ໆ  ຈານາດນາງເມັຽ
ເຈົ້າຈົ່ງຄົວແກງນົກ  ດ້ວຍນ້ຳເສາະໃສ່ລ້ອນ
ເພາະເມື່ອນົກຍາງໄກ້ ຈັກມອດມໍ່ຣະບັງ
ມັນສັ່ງເສັຽຄຳກັກ  ອ້ອນວອນວຽນຕ້ານ



ວ່າຊີ້ນມັນຂາວແທ້  ທັງຂົນກໍປອດໄປ່ງ
ບໍ່ມີບ່ອນເປື້ອນ  ໃສກ້ຽງປູ່ສເມີ
ຜິດແຕ່ມັນຖືກແຮ້ວ  ເຮົາໃສ່ແຄມໜອງນັ້ນ ແລ້ວ
ເຈົ້າບໍ່ຄວນເຮັດເຮີ  ໃຫ້ມັນມີເປື້ອນ
ໃຫ້ເຈົ້າເອົາໃຈເອື້ອ  ອີຕົນມັນແດ່
ເພາະມັນໄດ້ກ່າວອ້ອນ ວອນຂ້ອຍດັ່ງຈານັ້ນແລ້ວ.

ມະຫາແກ້ວ

## ຄຳອະທິບາຍ:

ສແວງ = ຊອກຫາ
ແຮ້ວ = ເຄື່ອງຫ້າງເອົາສັດປ່າ ມີຄັນແລະ ບ້ວງຍັກ.
ມໍ່ຣະບັງ = ຕາຍ.
ອ້ອນວອນວຽນຕ້ານ = ຮ້ອງຂໍຫຼາຍເທື່ອ.
ປອດໄປ່ງ = ສະອາດ ສົດໃສ
ເອົາໃຈເອື້ອ= ເອົາໃຈໃສ່.

## ຂໍ້ໃຫ່ຍໃຈຄວາມ:

໑. ຄວາມມໍຣະນັງຂອງນົກຍາງນ້ອນຄວາມພາດພັ້ງ.
໒. ຈຸດປະສົງໃນຄວາມອ້ອນວອນຂອງນົກຍາງ.
໓. ຄວາມເຫັນຊອບອັນເປັນທັມຂອງນາຍພານ

## ສຸພາສິດ:

ເຮົາຕ້ອງເປັນຄົນຂາວສະອາດ ແລະຊື່ສັດສຸຈລິດເທົ່າວັນຕາຍ.

## ຄຳຖາມ:

ນົກຍາງໄປຕິດແຮ້ວຢູ່ບ່ອນໃດ ?
ເປັນຫຍັງມັນຈຶ່ງໄປຕິດແຮ້ວຢູ່ບ່ອນນັ້ນ ?
ມັນສັ່ງນາຍພານວ່າຈັ່ງໃດ ?



ນາຍພານໄດ້ທຳຕາມຄຳສັ່ງຂອງນົກຍາງບໍ່ ?
ຄວາມປະສົງນົກຣຽນນີ້ດີມີຢ່າງໃດ ?
ເຮົາຄວນສະແດງຕົວເປັນຄົນສັດຊື່ຈົນເທົ່າວັນຕາຍບໍ່ ?

## ຫັດແຕ່ງເຣື່ອງ:

ໃຫ້ຫາຄຳຕື່ມໃສ່ບ່ອນຂະໄວ້ນັ້ນໃຫ້ພໍ ແລະຖືກຕ້ອງ :

ນົກຍາງໄປສແວງຫາ.... ເລີຍຕິດ.... ພານຫ້າງຮອບໜອງ. ພານບືນກໍໄດ້.... ຂາວອົນປອດດີຄືນເມື່ອຮອດບ້ານ.... ຫ້ອງແຫ່ງຕົນ. ພານສັ່ງເມັຍໃຫ້ຄົວ.... ນົກດ້ວຍ... ເສາະໃສ.



# ໑໖. ທີ່ຢູ່ຂອງບ້ານເຮົາແລະຊາວບ້ານ

ບ້ານເຮົາເປັນບ້ານປ່າຂາດົງ ຢູ່ຫ່າງໄກຈາກເມືອງແລະຖນົນໃຫຍ່ ບ້ານນີ້ຕັ້ງຢູ່ຕີນດົງ ແຄມທົ່ງນາ ແລະໃກ້ໜອງໃຫຍ່.

ບ້ານເຮົາແບ່ງເປັນສອງຄຸ້ມ ຄືຄຸ້ມໃຕ້ແລະຄຸ້ມເໜືອ. ຢູ່ລະຫວ່າງກາງສອງຄຸ້ມນີ້ ມີວັດຕັ້ງຢູ່ ແຕ່ລະຄຸ້ມ ມີທາງຮ່ອມສອງເສັ້ນ ຕັດບ່າໄປຕາມທາງຍາວ



ຂອງບ້ານລ່ອງຫາກັນ. ມີທາງຮ່ອມຫຼາຍເສັ້ນ ຕັດຈາກດົງ ຜ່າບ້ານຊອດອອກທົ່ງ.

ບ້ານເຮົາມີລວງຍາວ ປະມານສີ່ຮ້ອຍແມັດ ແລະລວງກວ້າງສອງຮ້ອຍແມັດ. ໃນບ້ານເຮົາມີ ເຮືອນສີ່ສິບສອງຫລັງ ເຮືອນທັງຫຼາຍ ປຸກປາຍໄປຕາມແຄມທົ່ງ ເຮືອນບາງຫຼັງ ປຸກຢູ່ຕາມກົກນາ ແລະຢູ່ນຳສວນ ຫ່າງໄກຈາກໝູ່ແດ່ເລັກນ້ອຍ.

ໃນບ້ານເຮົາ ມີປະຊາຊົນ ຍິງຊາຍນ້ອຍໃຫຍ່ ປະມານສອງຮ້ອຍສາມສິບຄົນ ສ່ວນມາກ ເຂົາເຈົ້າເປັນພໍ່ນາ ແລະຊາວສວນ ເມື່ອແລ້ວວຽກນາ ແລະສວນ ຊາວບ້ານບາງຈຳພວກ ກໍພາກັນເຂົ້າປ່າ ຫາຟັນໄມ້ ຕັດຟືນຂາຍ ເວລາຫວ່າງວຽກ ເຂົາເຈົ້າໝັ້ນພາກັນລົງໜອງຫາປາ ດ້ວຍວິທີຕ່າງໆ ເພື່ອມາກິນແລະຂາຍ.

ການເຮັດນາ ແລະການຫາປາ ເປັນອາຊີບສ່ວນໃຫຍ່ ຂອງຊາວບ້ານເຮົາ.

ບ້ານເຮົາອຸດົມສົມບູນ ໄປດ້ວຍເຂົ້າປາອາຫານ ຍ້ອນຄວາມຂຍັນຂັນແຂງ ຂອງຊາວບ້ານ.

## ຄຳອະທິບາຍ:

ປະຊາຊົນ = ຄົນຊາວບ້ານ.
ບ້ານປ່າຂາດົງ = ບ້ານຢູ່ແຄມດົງ.
ຄຸ້ມ = ສ່ວນນຶ່ງຂອງບ້ານ.
ອາຊີບ = ການທຳມາຫາກິນ.

## ຂໍ້ໃຫຍ່ໃຈຄວາມ:

໑. ບໍລິເວນຕັ້ງບ້ານເຮົາ.
໒. ແຜນຜັງຂອງບ້ານ.
໓. ຊີວິດການເປັນຢູ່ອັນອຸດົມຂອງຊາວບ້ານເຮົາ



## ຄຳຖາມ:

ບ້ານເຈົ້າຕັ້ງຢູ່ບ່ອນໃດ?
ແບ່ງເປັນຈັກຄຸ້ມ?
ມີທາງຮ່ອມຫຼາຍເສັ້ນບໍ?
ບ້ານເຈົ້າຍາວແລະກວ້າງປະມານຈັກແມັດ?
ມີເຮືອນຈັກຫຼັງ!
ຊາວບ້ານເຈົ້າ ທຳມາຫາກິນຢ່າງໃດເປັນສ່ວນໃຫຍ່!
ດ້ວຍເຫດໃດ ບ້ານເຈົ້າຈຶ່ງອຸດົມສົມບູນ!

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປະໂຫຍກ:
ບ້ານ ທົ່ງນາ ໜອງປາ ແບ່ງ ປາຍ ໃຫຍ່.



# ໑໗. ເຮືອນຂອງຊາວບ້ານເຮົາ

ເຮືອນຊານຂອງຊາວບ້ານເຮົາ ບໍ່ມີສະພາບ ເໝືອນ
ກັນທຸກຫຼັງ. ເຮືອນບາງຫຼັງ ໄດ້ປຸກດ້ວຍໄມ້ເລື່ອຍ ຝາ
ແອ້ມດ້ວຍແປ້ນ ມຸງດ້ວຍດິນຂໍ ດ້ວຍແປ້ນເກັດ ຫຼື ສັງ
ກະສີ. ເຮືອນຈຳພວກນີ້ ມັກປຸກເປັນເຮືອນແຝດ ຫຼື ແບບ
ຫຼັງດຽວມີເຊັ່ງ ທັງມີເຮືອນຄົວ ແລະຊານຂວາງປູອີກ
ບາງຫຼັງກໍປຸກດ້ວຍ ໄມ້ນອກດູອກລົມ ມຸງດ້ວຍ
ຫຍ້າ ປາແອ້ມດ້ວຍແຕະໄມ້ເຮັ້ ພື້ນຟາກ ເຮືອນຊະ
ນິດນີ້ເປັນເຮືອນປ້າວ ມີເຊັ່ງອອກອີກດ້ານນຶ່ງ ທາງກອບ



ກໍມີຄະບຽງ ແລະຊານທ່ອງ ອອກໄປຫາເຮືອນຄົວ
ແລະຊານບ່ອນເຊີບ້ຳ.

ນອກຈາກນີ້ ຍັງມີເຮືອນດູບ ປຸກດ້ວຍເສົາທັບ
ເປືອກ ຫຼື ເສົາໄມ້ໄຜ່ ມຸງດ້ວຍຫຍ້າຈ່າມ ແລະຝາແອ້ມ
ດ້ວຍແຫຼບຕອງ ເຮືອນຊະນິດນີ້ ທາງໃນມີຮ້ານຕ່ຳ ປູ
ດ້ວຍຟາກໄມ້ໄຜ່ ເພື່ອສຳລັບນອນ ປູ່ທາງນອກ ຍັງມີ
ເງີນຄົວກິນອີກ. ເຮືອນດູບນີ້ສ່ວນຫຼາຍ ດິນມັກຈະປຸກປູ່
ຊົ່ວຄາວ ເພື່ອລໍ່ຖ້າປຸກຫຼັງໃໝ່.

ຊາວບ້ານເຮົາທຸກຄົນ ປຸກເລົ້າເຂົ້າ ເຮັດຄອກຄວາຍ
ຄອກໝູ ຫຼື ຄອກມ້າ ແລະເລົ້າໄກ່ ໄວ້ຕ່າງຫາກ ປູ່
ອ້ອມເຮືອນ ທັງນີ້ກໍເພື່ອຮັກສາຄວາມສະອາດ ດາມ
ຫຼັກສຸຂາພິບານ.

ເຮືອນຂອງຊາວລາວເຮົາ ເຖິງຈະປຸກແບບໃດກໍ
ດາມ ມັກຈະເຮັດພື້ນສູງ ເພາະເຫັນວ່າ ອາກາດລ່ອງ
ໄດ້ດີ ແລະປາສຈາກຄວາມຊຸ່ມອື່ນ.

## ຄຳອະທິບາຍ:

ສະພາບ - ລັກສນະແລະຄວາມແ ປ.

ເຮືອນເຊັງ = ເຮືອນຫຼັງດຽວມີຣະບຽງເບື້ອງໜ້າ
ເຮືອນປ້າວ = ເຮືອນໄມ້ເຄື່ອງກົມ.
ເຮືອນດູບ = ເຮືອນຊົ່ວຄາວພື້ນຊູດິນ.

## ຂໍ້ໃຫຍ່ໃຈຄວາມ:

໑. ສະພາບເຮືອນຂອງຊາວບ້ານເຮົາ.
໒. ການລ້ຽງສັດປະຈຳຄອບຄົວ.
໓. ການປະຕິບັດຄວາມສະອາດຢູ່ອ້ອມເຮືອນ.

## ຄຳຖາມ:

ເຮືອນບ້ານເຈົ້າປຸກແບບຕ່າງກັນຢ່າງໃດ?
ເພິ່ນໃຊ້ຫຍັງມຸງເຮືອນ?
ຢູ່ວົງບ້ານອ້ອມເຮືອນເຈົ້າມີຫຍັງແດ່?
ເປັນຫຍັງຊາວລາວເຮົາຈຶ່ງປຸກເຮືອນສູງ?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ເຮືອນ ຊານ ຈັກຕອກ ສະພາບ ຊົ່ວຄາວ.





# ໑໗. ການທຳມາຫາກິນຂອງຊາວບ້ານເຮົາ

ຊາວບ້ານເຮົາ ເປັນຊາວສວນ ຊາວນາ ອາສັຍຢູ່ກັບນຳນາ ນຳໜອງປາ ແລະປ່າໄມ້. ເມື່ອເຖິງຣະດູຝົນມາຮອດແລ້ວ ຊາວບ້ານເຮົາ ກໍຫ້າງເອົາ ຄາດ ໄຖ ແລະງົວຄວາຍ ອອກໄປປະຈຳຢູ່ນຳນາ ແລະນອນຢູ່ໃນຖຽງນ້ອຍ ພວກຜູ້ຊາຍ ພາກັນໄຖແລະຄາດ ທັງຕົກກ້າພ້ອມ. ພວກຜູ້ຍິງຢູ່ບ້ານ ກໍພາກັນຕຳເຂົ້າຖິງນາ ເມື່ອກ້າແກ່ພໍດຳແລ້ວ ເຂົາເຈົ້າຈຶ່ງຄ່ອຍອອກໄປຫຼົກກ້າ ແລະດຳນາ. ການດຳນາ ໂດຍມາກແມ່ນຜູ້ຍິງ ສ່ວນຜູ້ຊາຍ

ກໍຕ້ອງຊ່ອຍກັນ ເພື່ອປົດໄຖ ແລະຄາດແລ້ວ.

ເວລາດຳນາແລ້ວ ກໍພາກັນກັບດ່າວມາບ້ານ ເພື່ອກ່າ ກັບວຽກເຮືອນແລະຮົ້ວສວນ ຈົນກວ່າຈະໄດ້ກ່ຽວເຂົ້າ ເມື່ອເອົາເຂົ້າຂຶ້ນເລົ້າແລ້ວ ກໍບັງກ່າກັບບ່າການເຮັດສວນອີກ.

ເມື່ອວຽກການສ່ວນໃຫ່ຍນີ້ ຫາກສິ້ນສຸດລົງແລ້ວ ຈິ່ງພ້ອມກັນອ່ວາຍໜ້າເຂົ້າຫາວຽກປ່າງອື່ນຖີ່ ການຫາເງິນຄຳ ການຕັດຟືນ ປ່ຳໄມ້ທ່ອນ ຫາບິງເນື້ອ ແລະຫາປາ

ພວກທີ່ບໍ່ໄດ້ເຮັດໄຮ່ເຮັດນາ ກໍຫາກິນ ດ້ວຍການຊ່າງສີມືດີ ເປັນຊ່າງໄມ້ ຊ່າງຕີເຫຼັກ ຫຼືເປັນພໍ່ຄ້າ ຊື້ເລັກຂາຍນ້ອຍ ຢູ່ບ່ານບ້ານ ແຕ່ວ່າ ຄົນຈຳພວກນີ້ບໍ່ມີຫຼາຍໃນບ້ານເຮົາ ໂຮມຄວາມແລ້ວ ຊາວບ້ານເຮົາ ມີງານທຳໝົດທຸກຄົນ.

## ຄຳອະທິບາຍ:

ຫ້າງ = ແຕ່ງເອົາເຂົ້າຂອງ.
ຖຽງ = ເຮືອນນ້ອຍປຸກໄວ້ນາ.
ເຂົ້າຖົງນາ = ເຂົ້າຫ້າງໄປກິນປູ່ນາ.
ດ່າວ = ກັບຄືນ.



## ຂໍໃຫ່ຽໃຈຄວາມ:

໑. ການທຳນາຫາກິນສ່ວນ ໃຫ່ຽຂອງຊາວບ້ານເຮົາ.
໒. ອາຊີບຕ່າງ ໆ ຂອງຊາວບ້ານ.
໓. ຊາວບ້ານເຮົາ ພຍາຍາມທຳງານໝົດທຸກຄົນ

## ຄຳຖາມ :

ເມື່ອເຖິງຣະດູຝົນມາຮອດແລ້ວຊາວບ້ານເຈົ້າໄປໃສ?
ເຂົາເຈົ້າເອົາຫັຽງໄປນຳ?
ເຂົາເຈົ້າເຮັດຫັຽງປູ່ນາ?
ຜູ້ຍິງປູ່ບ້ານເຂົາເຈົ້າເຮັດຫັຽງ?
ໃຜເປັນຜູ້ດຳນາແລະກ່ຽວເຂົ້າ?
ເມື່ອເຮັດສວນເຮັດນາແລ້ວ ວຽກຂອງຊາວບ້ານມີຫັຽງອີກແດ່?

## ຫັດແຕ່ງເຣື່ອງ :

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ໄຖ ຄາດ ກ່ຽວເຂົ້າ ຫາປາ ຫຼາຍ.



# ໑໙. ການປົກຄອງຂອງບ້ານເຮົາ

ຢູ່ບ້ານເຮົາ ເພິ່ນໄດ້ເລືອກຕັ້ງ ເອົາຣາສດອນຜູ້ນຶ່ງ ໃຫ້ເປັນນາຍບ້ານ ເພື່ອປົກຄອງ ຊາວບ້ານດ້ວຍກັນ.

ນາຍບ້ານ ເປັນຜູ້ຮັບຜິດຊອບ ຈັດແຈ່ງວຽກການ ຕາມຄໍາສັ່ງຂອງຕາແສງ. ນາຍບ້ານ ປົກຄອງລູກບ້ານ ຕາມຣະບຽບກົດໝາຍ ຂອງບ້ານເມືອງ ເພິ່ນເປັນຜູ້ ບອກສອນ ໂອບໂລມຣາສດອນ ໃຫ້ຕັ້ງຢູ່ໃນສິລທັມ ແລະ ໃຫ້ຖືກຕ້ອງ ສາມັກຄີກັນ.

ໜ້າທີ່ອັນສໍາຄັນ ຂອງນາຍບ້ານຄື ການຈົດສໍາມະ



ໂນຄົວ ອອກໃບຢັ້ງຢືນຕ່າງໆ ຄື ຢັ້ງຢືນການເກີດ ການ ຕາຍ ການແຕ່ງດອງ ດັ່ງນີ້ເປັນຕົ້ນ ນອກຈາກນີ້ ເພິ່ນ ຍັງເບິ່ງແຍງ ຄວາມສຸກທຸກ ແລະຄວາມຢູ່ເຢັນເປັນ ສຸກ ຂອງຣາສດອນ ແລ້ວລາຍງານເຫດການ ທີ່ເກີດ ຂຶ້ນຢູ່ໃນບ້ານເຊັ່ນ ພຍາດຕິດຕໍ່ ຂອງຄົນແລະສັດ ການ ລັກ ການປຸ້ນເປັນຕົ້ນ ເພື່ອໃຫ້ຕາແສງ ແລະເຈົ້າເມືອງ ຊາບເປັນລໍາດັບ.

ເມື່ອມີການສ້າງສາ ສາທາຣະນະປໂຍດ ໃສ່ບ້ານ ຄື ການຕັດຫົນທາງ ສ້າງຂົວ ຂຸດນໍ້າສ້າງ ປຸກສາລາ ສ້າງໂຮງຮຽນ ໂຮງໝໍ ແລະວັດ ກໍແມ່ນນາຍບ້ານ ເປັນຜູ້ອວນເຮັດ. ເມື່ອມີການທໍາບຸນບ້ານ ຫຼືຈັດການ ປ້ອງກັນຜູ້ຮ້າຍ ແລະຂະໂມຍ ກໍແມ່ນນາຍບ້ານເປັນຜູ້ ກໍາກັບ.

ຕາມທີ່ໄດ້ກ່າວມານີ້ ວຽກການຂອງນາຍບ້ານ ກໍມີ ຫຼາຍຢູ່ ແຕ່ເພິ່ນຫາກພໍໃຈເຮັດ ເພາະເຫັນແກ່ປໂຍດ ສ່ວນໂຮມຂອງບ້ານ ສະນັ້ນ ເຮົາຜູ້ເປັນລູກບ້ານຄວນນັບ ຖືນາຍບ້ານຂອງເຮົາ.

## ຄຳອະທິບາຍ:

ຮັບຜິດຊອບ = ຮັບປະກັນຄວາມຜິດຖືກ.
ໂອບໂລມ = ເວົ້າໃຫ້ຖືກຕ້ອງກັນ.
ສຳມະໂນຄົວ = ບັນຊີລາຍຊື່ແຕ່ລະຄອບຄົວ.
ສາທາລະນະປໂຍດ = ປໂຍດຂອງສ່ວນໂຮມ.
ອອນເຮັດ = ພາເຮັດພາທຳ.

## ຂໍ້ໃຫຍ່ໃຈຄວາມ :

໑. ການແຕ່ງຕັ້ງນາຍບ້ານ.
໒. ການຮັບຜິດຊອບຂອງນາຍບ້ານ.
໓. ໜ້າທີ່ຂອງນາຍບ້ານຕໍ່ລູກບ້ານ ແລະຕໍ່ ຣາຊການປົກຄອງ.
໔. ບຸນຄຸນຂອງນາຍບ້ານ.



## ຄຳຖາມ:

ຜູ້ມີຄວາມດີປ່າງໃດ ຈຶ່ງຄວນເລືອກຕັ້ງເອົາເປັນ ນາຍບ້ານ?
ນາຍບ້ານມີໜ້າທີ່ກ່ຽວຂ້ອງປ່າງໃດກັບຕາແສງ ແລະເຈົ້າເມືອງ ?
ໜ້າທີ່ອັນສຳຄັນຂອງນາຍບ້ານມີຫັງງແດ່?
ນາຍບ້ານມີວຽກຫຼາຍແລະດ້ວຍເຫດໃດ ເພິ່ນ ຈຶ່ງດີໃຈເຮັດ?
ເຮົາຜູ້ເປັນລູກບ້ານຄວນປະພຶດປ່າງໃດ ຕໍ່ນາຍ ບ້ານ?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ນາຍບ້ານ ຣາສດອນ ໂອບໂລມ ສາມັກຄີ.



# ໑໐. ຫົນທາງຂອງບ້ານເຮົາ

ບ້ານເຮົາບໍ່ມີຖນົນຫົນທາງ ອັນກວ້າງໃຫຍ່ແລະຊື່ ເໝືອນທາງໃນເມືອງ. ບ້ານເຮົາມີທາງຫຼາຍເສັ້ນ ແຕ່ ຫາກເປັນທາງນ້ອຍ ແລະຄົດລ້ຽວ. ທາງເສັ້ນໃຫຍ່ ແລະ ກວ້າງ ກວ່າໝູ່ແດ່ນັ້ນຄື ທາງບ່າບ້ານເຮົາໄປ ຕໍ່ໃສ່ ບ້ານອື່ນ ແລ້ວເຂົ້າຫາທາງໃນເມືອງ.

ເມື່ອຝົນຕົກມາ ທາງຮ່ອມບ້ານເຮົາ ຈະທຽວໄປ ມາຫາກັນກໍ່ລຳບາກ ເພາະມີນ້ຳຫັ້ງ ແລະເປັນຕົມ. ເມື່ອເຖິງຣະດູແລ້ງ ມັກມີຂີ້ຝຸ່ນ ແລະເປັນຂຸມ ທັງເປັນ ຂີ້ຕະໂຫຼກ.



ໄດ້ສອງສາມປີມານີ້ ຊາວບ້ານເຮົາໄດ້ ໂຮມແຮງ ກັນດັດແປງ ທາງຮ່ອມໄດ້ຫຼາຍເສັ້ນ. ແລ້ວເພີ່ນພາກັນ ຍ້າຍຮົ້ວບ້ານ ເພື່ອໃຫ້ຫົນທາງກວ້າງອອກ. ບ່ອນໃດຕ່ຳ ເພີ່ນຂຸດບ່ອນໂນນມາຖົມໃສ່ພ້ອມທັງກ່ອນລ່ ໃຫ້ນ້ຳໄຫຼໄດ້.

ເມື່ອໝົດຣະດູຝົນ ຣົດຍົນກໍ່ແລ່ນຜ່ານ ບ້ານເຮົາ ໄປໄດ້ສະດວກ ພວກເພື່ອນບ້ານໃກ້ຄຽງ ຫຼື ພວກແມ່ຄ້າ ທີ່ຢູ່ໃນເມືອງ ກໍ່ໝັ່ນຂີ່ຣົດໃຫຍ່ ອອກໄປທ່ຽວຊື້ຂອງ ມາ ຂາຍບໍ່ຂາດ ນັບວ່າການທຽວທາງ ສະດວກຂຶ້ນນຳທຸກປີ.

## ຄຳອະທິບາຍ:

ລຳບາກ = ຍາກ.
ໂຮມແຮງ = ຊ່ອຍກັນ.
ກ່ອນລ່ = ຂຸດຮ່ອງໃຫ້ນ້ຳໄຫຼ.
ສະດວກ = ສະບາຍ.
ຂີ້ຕະໂຫຼກ = ດິນຕົມທີ່ແຫ້ງແລະເປັນ ຫຼຸບເປັນໂນນ.

## ຂໍ້ໃຫຍ່ໃຈຄວາມ:

໑. ສະພາບຫົນທາງຂອງບ້ານເຮົາ.

໖. ການຄັດແປງຫົນທາງ.
໗. ຄວາມສະດວກແລະກ້າວໜ້າຂອງການທ່ອງທ່ຽວ.

## ຄຳຖາມ:

ທາງບ້ານເຈົ້າກວ້າງແລະຊື່ເໝືອນທາງໃນເມືອງບໍ່?
ທາງຮ່ອມບ້ານເຈົ້າສ່ວນຫຼາຍເປັນຢ່າງໃດ?
ເມື່ອຝົນຕົກມາທ່ຽວໄດ້ສະດວກບໍ່?
ແມ່ນໃຜຄັດແປງຫົນທາງຢູ່ໃນບ້ານເຈົ້າ?
ເພິ່ນພາກັນເຮັດຈັ່ງໃດ?
ດຽວນີ້ມີລົດໃຫຍ່ທ່ຽວໄປຮອດບ້ານເຈົ້າບໍ່?
ລົດພວກນັ້ນທ່ຽວໄປເຮັດຫຍັງ?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປະໂຫຍກ:
ຫົນທາງ ລຳບາກ ໂຮມແຮງ ຄັດແປງ





# ໗໑. ຄວາມພົວພັນກັບຊາວບ້ານອື່ນ

ຊາວບ້ານເຮົາ ທຳການຕິດຕໍ່ ກັບຊາວບ້ານອື່ນຢູ່ເລື້ອຍໆ. ໃນລະດູແລ້ງ ເຮົາທ່ຽວໄປມາຫາກັນ ຕາມຖະໜົນຫົນທາງ ທີ່ລັດທາງ ແລະລັດດົງ. ໃນລະດູຝົນ ເມື່ອມີນ້ຳແຄ່ງຖ້ວມທາງ ກໍຕ້ອງທ່ຽວຫາກັນດ້ວຍເຮືອ ຫຼື ແພ.

ການທີ່ຊາວບ້ານເຮົາ ກັບຊາວບ້ານອື່ນ ໄດ້ທ່ຽວໄປມາຫາກັນນັ້ນ ມີຄວາມຈຳເປັນຫຼາຍຢ່າງ ສ່ວນມາກເຮົາທ່ຽວຫາກັນ ຍ້ອນການທຳມາຫາກິນ ເພາະບ້ານນັ້ນມີເຂົ້າປາອາຫານຫຼາຍ ບ້ານນັ້ນກໍທ່ຽວໄປຊື້ ຫຼື ແລກ

ປ່ຽນມາປູ່ມາກິນ ແຕ່ລະບ້ານ ກໍມີຄວາມອຸດົມ ແລະ ຂາດແຄນຕ່າງກັນ.

ຂໍ້ສໍາຄັນ ອີກປະການນຶ່ງກໍຄື ຊາວບ້ານເຮົາ ແລະ ບ້ານໃກ້ຄຽງຫຼາຍຄອບຄົວ ເປັນສາຍຍາດ ຮ່ວມໄລຫິດກັນມາ ແຕ່ເຊັ່ນປູ່ຍ່າຕາຍາຍ. ທຸກມື້ນີ້ ພວກເຮົາຍັງສືບຕໍ່ ຄວາມສໍາພັນ ໃນການສົມອິດ ປີລະຫຼາຍຄູ່.

ການທີ່ມີຍາດພີ່ນ້ອງ ແຈກຢາຍຢູ່ຫຼາຍແຫ່ງນັ້ນ ເມື່ອເກີດເຈັບປ່ວຍ ກໍຕ້ອງໄດ້ໄປເບິ່ງແຍງ ແລະປິ່ນປົວກັນ ເມື່ອມີວຽກການສໍາຄັນຄື ປຸກປ້ານແປງເຮືອນ ຫຼື ທໍາບຸນໃຫ້ທານ ກໍຕ້ອງໄດ້ຊຸດຊ່ອຍກັນຢູ່ສເມີ.

ຄວາມພົວພັນ ລະຫວ່າງຊາວບ້ານເຮົາ ກັບຊາວບ້ານອື່ນ ພາໃຫ້ໄດ້ຮັບຄວາມສະດວກສະບາຍ ແລະມີຄວາມສາມັກຄີກັນຍິ່ງຂຶ້ນ.

## ຄໍາອະທິບາຍ:

ພົວພັນ = ກ່ຽວຂ້ອງສໍາພັນ.
ໄລຫິດ = ເລືອດ.



ອຸດົມ = ມາກມາຍ
ສົມອິດ = ເອົາຜົວເອົາເມັຽ.
ສາມັກຄີ = ຄວາມພ້ອມພຽງ.

## ຂໍ້ໃຫ່ຽໃຈຄວາມ:

໑. ການໄປມາຫາສູ່ລະຫວ່າງບ້ານເຮົາກັບບ້ານອື່ນ.
໒. ສາຍເຫດທີ່ພາໃຫ້ມີຄວາມພົວພັນກັບຊາວບ້ານອື່ນ.
໓. ຜົນປໂຍດໃນການພົວພັນກັບຊາວບ້ານອື່ນ.

## ຄໍາຖາມ:

ຊາວບ້ານເຈົ້າກັບຊາວບ້ານໃກ້ຄຽງ ມີການພົວພັນກັນບໍ່!

ເພີ່ນທຳການພົວພັນກັນດ້ວຍວິທີໃດ?
ຍ້ອນສາຍເຫດອັນໃດພວກຊາວບ້ານ ຈຶ່ງຕ້ອ
ທ່ອງທ່ຽວຫາກັນ!
ເຈົ້າມີຍາດພີ່ນ້ອງຢູ່ຕາມບ້ານໃກ້ຄຽງບໍ່?
ເວລາໃດພີ່ນ້ອງຈຶ່ງມາຢາມເຈົ້າ ແລະພວກເຈົ້
ເອງຈຶ່ງໄປຢາມເພິ່ນ?
ການພົວພັນກັບຊາວບ້ານອື່ນໄດ້ຮັບຜົນຢ່າງໃດ

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ
ພົວພັນ ໃກ້ຄຽງ ຍາດພີ່ນ້ອງ ທ່ອງທ່ຽວ
ສາມັກຄີ.





## ໓໔. ຄວາມພົວພັນກັບຊາວບ້ານອື່ນ.

| | |
|---|---|
| ບັງມີຄົນພາກບ້ານ | ບ່ອນເກີດຂອງຕົນ |
| ໄປຢູ່ແດນດິນແຂວງ | ອື່ນເນີນນານລ້າ |
| ຫາຍຂວບເດືອນດົນໄດ້ | ສາມປີເປັນເຂດ |
| ຈຶ່ງໄດ້ລາບ່ອນບ້ານ | ເມືອງພົ້ນພາກຄືນ. |
| ໃກ້ຮອດບ້ານ | ພວກເຜົ່າພົງສາ |
| ພາກັນມາໂຮມຮັບ | ຄູ່ຄົບຄອງປ້ຽມ |
| ລາງຄົນກົ້ມ | ປະນົມມືນົບນອບ |
| ເວົ້າຍົ້ມແຍ້ມ | ຖາມຂໍ້ຂ່າວຄາວ |

ເຈົ້າບຸ່ງປອງໄປໜ້າ ເຫັນສັງສນຸກແດ່
ເຊີນຂ່າວໃຫ້ ພໍຮູ້ຮ່ອມນຳ.
ເອົາຕອບຕ້ານ ປະເທດເພິ່ນງາມຫຼາຍ
ເປັນທີ່ສະບາຍບານ ສິ່ງໃດກໍມີພ້ອມ
ແຕ່ບໍ່ອອນຊອນເທົ່າ ຫຽມປານບ້ານເກີດເຮົາ
ພີ້
ເພາະເພື່ອໄກ້ຮອດບ້ານ ໃຈມ່ວນມີສນຸກ
ດ້ວຍໄດ້ເຫັນຂອງຝັງ ປູກປຸນແປງໄວ້
ໃບດຶ່ນແຖວແຄມຮົ້ວ ເຮືອນຕຶບອ້ອມຮອບ
ເປັນຕົ້ນມີ້ມ່ວງພ້າວ ກໍໄຜ່ສັບສົນ
ພຸພາງກົກ ກ້ວຍລຳໄຍດ້ວຍ
ບົ້ງອອນຊອນເຫຼືອ ລົ້ນ ເກີນໄປປະເທດຕ່າງ
ຄວາມອອນຊອນ ເຫຼືອ ຊິເວົ້າໃຫ້ສັງ
ສຸດຊ້ອຍ ສົບບໍ່ເປັນເຈົ້າເອີຍ.

ມະຫາແກ້ວ



## ຄຳອະທິບາຍ:

ພາກບ້ານ = ໜີອອກຈາກບ້ານ.
ພິງສາ = ພີ່ນ້ອງ.
ປະນົມມື = ຍໍມືນົບ.
ຂ່າວໃຫ້ = ບອກໃຫ້ຮູ້.
ອອນຊອນ = ຊື່ນໃຈ.
ສນຸກ = ມ່ວນຊື່ນ.
ສັບສົນ = ຫຍຸ້ງປົນກັນ.

## ຂໍ້ໃຫຍ່ໃຈຄວາມ:

໑. ຄວາມຫ່ວງໃຍພາໃຫ້ກັບຄືນບ້ານ.
໒. ຄວາມຊື່ນຊົມນິນດີຂອງຍາດພີ່ນ້ອງ

ທີ່ມາຕ້ອນຮັບ.

໓. ພາບສະແດງຄວາມຮູ້ສຶກ ຂອງຜູ້ຄິດເຖິງ ບ້ານເກີດເມືອງນອນ.

## ຄຳຖາມ:

ຄົນຜູ້ນັ້ນໄປຢູ່ແຂວງອື່ນນານປານໃດ?
ເວລາຮອດບ້ານມີໃຜມາຮັບລາວແດ່?
ລາວເວົ້າສູ່ຍາດພີ່ນ້ອງຟັງວ່າຈັ່ງໃດ?
ບ້ານເກີດຂອງເຈົ້າຢູ່ໃສ?
ບ້ານເກີດຂອງເຈົ້າມີຫຍັງງາມແດ່?

## ຫັດແຕ່ງເຣື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ບ້ານເກີດ ຕົ້ນກ້ອຍ ຍິ້ມແຍ້ມ ຮັບຕ້ອນ.





# ໓໓. ທົ່ງນາຂອງບ້ານເຮົາ.

ຊາວບ້ານເຮົາ ສ່ວນຫຼາຍເຮັດນາ ຢູ່ຕາມທົ່ງຕີນບ້ານ. ບາງຄອບຄົວ ມີນາຢູ່ທົ່ງອື່ນ ເຊິ່ງຢູ່ຫ່າງໄກຈາກບ້ານເຮົາ ທົ່ງນາບ້ານເຮົາ ແຜ່ອອກໄປຕາມຊາຍໜອງ ຕໍ່ໃສ່ທົ່ງບ້ານໃກ້ຄຽງ ເມື່ອເຮົາຢູ່ໜ້າບ້ານ ຫຼຽວໄປທາງໃຕ້ ທາງເໜືອ ແລະທາງຕາເວັນອອກ ເຫັນທົ່ງກວ້າງໃຫຍ່ ມີໝູ່ບ້ານປາຍຢູ່ຫ່າງໆກັນ.

ທົ່ງນາຂອງບ້ານເຮົາຮາບພຽງ ແລະເປັນດິນດີ

ແຕ່ວ່າມັກມີນ້ຳຖ້ວມ. ປີໃດຝົນຕົກຫຼາຍ ເຂົ້ານາໜອງ ບໍ່ສູ້ໄດ້ເກັບກ່ຽວ ເວັ້ນເສັຽແຕ່ພວກທີ່ປູກເຂົ້າລອຍ ຖ້າຟ້າແລ້ງ ກໍເຕັມທີ່ທາງນາໂຄກ ປີໃດຝົນຕົກສມ່ຳສເມີ ຊາວນາລຸ່ມແລະນາເທິງ ກໍພ້ອມກັນດີໃຈ ເພາະໄດ້ເກັບກ່ຽວ ຢ່າງເຕັມເມັດເຕັມໜ່ວຍ.

ເພື່ອປ້ອງກັນນ້ຳຖ້ວມ ນາຊາວບ້ານເຮົາ ໄດ້ພ້ອມກັນຂຸດຮ່ອງປ້ານຄູແລະເຮັດປະຕູນ້ຳ. ພວກເຈົ້າຂອງນາໄພນ ພາກັນເຮັດຝາຍທົດນ້ຳດ້ວຍ ແລ້ວຂຸດເໝືອງມາໃສ່ນາ. ຝາຍແລະເໝືອງນີ້ ຍັງເປັນປໂຍດ ແກ່ພວກເຮັດນາແຊງ ໃນຍະດູແລ້ງອີກດ້ວຍ ແຕ່ວ່າ ການເຮັດນາແຊງນີ້ ສ່ວນມາກ ໄດ້ເຮັດປູຕາມໜອງແລະບຶງ

ເພື່ອຈະໃຫ້ນາມີນ້ຳ ແຊ່ປູສເມີກັນທົ່ວທຸກບ່ອນ ພວກຊາວນາ ພ້ອມກັນປ້ານຄັນນາ ແບ່ງເປັນຫຼາຍໄຮ່ ເພື່ອປາກໃຫ້ນາງາມ ຊາວນາໄດ້ແກ່ ຝຸ່ນຂີ້ງົວຂີ້ຄວາຍ ໄປຢາຍໃສ່ໄຮ່ນາໄວ້ ແຕ່ເວລາຍາມແລ້ງ.

ດ້ວຍຄວາມເອົາໃຈໃສ່ ຂອງຊາວນາທັງຫຼາຍ ທຸກຂວບປີ ເຂົ້າໃນທົ່ງນາພວກເຮົາ ຈຶ່ງງາມແລະໄດ້ຜົນດີ.



## ຄຳອະທິບາຍ:

ທົ່ງຕີນບ້ານ = ທົ່ງແຄມບ້ານ.
ຊານໜອງ = ແຄມໜອງ.
ນາໄພນ = ນາປູ່ບ່ອນສູງ.
ເຕັມເມັດເຕັມໜ່ວຍ = ໄດ້ຢ່າງພໍໃຈ.
ເໝືອງ = ຮ່ອງນ້ຳນາ
ຝາຍ = ຄັນຄູທົດນ້ຳ

## ຂໍ້ໃຫຍ່ໃຈຄວາມ :

໑. ບໍລິເວນທົ່ງນາຂອງເຮົາ.
໒. ສະພາບທົ່ງນາ
໓. ການດັດແປງທີ່ດິນ.

໔. ນາເປັນຊັບສິນເບື້ອງຕົ້ນຂອງບ້ານເຮົາ.

## ຄໍາຖາມ:

ທົ່ງນາບ້ານເຈົ້າຢູ່ໃສ?
ທົ່ງນາບ້ານເຈົ້າກວ້າງບໍ?
ທົ່ງນາບ້ານເຈົ້າປູກເຂົ້າງາມບໍ?
ເພື່ອປ້ອງກັນນ້ຳຖ້ວມຊາວນາເຮັດຢ່າງໃດ?
ເປັນຫຍັງເພິ່ນຈຶ່ງປ້ານຄັນນາເປັນຫຼາຍໄຮ່ ?
ເພື່ອຢາກໃຫ້ເຂົ້າງາມເພິ່ນຕ້ອງເອົາຫຍັງໃສ່ນາ ?

## ຫັດແຕ່ງເຣື່ອງ:

ໃຫ້ເອົາຄໍາຕໍ່ໄປນີ້ແຕ່ງເປັນຄໍາລະປໂຍກ
ທົ່ງນາ ຊານໜອງ ກວ້າງ ປ້ອງກັນ.





## ໖໔. ການປູກຝັງຕ່າງໆ.

ນອກຈາກການປູກເຂົ້າແລ້ວ ຊາວບ້ານເຮົາ ບັງພາກັນປູກໝາກໄມ້ ຫຼືເຮັດສວນຜັກ. ບາງບ່ອນ ໃນປະເທດລາວເຮົາ ເພິ່ນເຮັດສວນປູກຕົ້ນໄມ້ແບບອື່ນດີ ສວນກາເຟ ສວນຊາ ສວນປ່ານ ສວນງິ້ວ ແລະສວນຢາງປີດ.

ຕາມທັມມະດາ ຢູ່ຕາມໄຮ່ຕາມສວນ ເພິ່ນປູກຕົ້ນກ້ວຍ ຕົ້ນມີ້ ຕົ້ນມ່ວງ ຕົ້ນພ້າວ ຕົ້ນໝາກ ຕົ້ນພູ ແລະຕົ້ນຢາງ. ຢູ່ຕາມແຄມຂອງ ແລະແຄມງື່ມ ເຮົາເຫັນ

ສວນພ້າວ ສວນໝາກ ແລະສວນກ້ວຍ ເປັນແຖວໄປ ປ່າງບືດຍາວ ທັງເປັນທີ່ງາມຕາດ້ວຍ. ໃນຣະດູແລ້ງ ປູ່ ຕາມເກືອຝັ່ງ ຕາມດອນ ຫຼືຕາມຫາດຊາຍ ເພິ່ນປູກ ປາດູດ ປ່າງຫຼວງຫຼາຍ ເກາະກ່າຍກັບສວນມອນ.

ປູ່ຕາມດົງແຄມທົ່ງບ້ານເຮົານີ້ ມີສວນອ້ອຍປູ່ຫຼາຍ ບ່ອນ. ການເຮັດສວນອ້ອຍ ທະວີຂື້ນຫຼາຍ ໃນປະເທດ ເຮົາ. ເພິ່ນອີ່ວລຳອ້ອຍ ເອົານ້ຳຂອງມັນກິນ ຫຼືຂຽວໃຫ້ ເປັນກ້ອນ ຂາຍກໍໄດ້ ຍັງມີຫຼາຍຄອບຄົວອີກ ພາກັນ ເຮັດໄຮ່ເຂົ້າ ປູກສາລີ ໝາກແຕງ ໝາກໂມ ໝາກອຶ ແລະໝາກໂຕ່ນ ບາງທີເພິ່ນເຮັດໄຮ່ຝ້າຍ ປູກທັງໝາກ ເຜັດ ແລະໝາກເຂືອ.

ການປູກຝັງ ທີ່ຊາວບ້ານເຮົາ ລະບໍ່ໄດ້ຈັກປີນັ້ນ ແມ່ນການປູກຜັກ. ສວນຜັກຂອງເຮົາ ເຮັດປູ່ນຳໄຮ່ນາ ໃກ້ແຄມໜອງ ພວກເຮົາປູກຜັກບົ່ວ ຜັກຫອມ ຜັກກາດ ຜັກຫອມ ໝາກຖົ່ວດຳ ແລະຖົ່ວຍັດ. ລາງຄົນປູກຜັກ ສລັດ ກະລຳປີ ແລະຜັກກາດຫໍ່

ການປູກໝາກໄມ້ ແລະຜັກ ມີປໂຍດຫຼາຍ ເພາະ ໄດ້ກິນ ແລະໄດ້ຂາຍ.



## ຄຳອະທິບາຍ:

ຕົ້ນມອນ = ຕົ້ນໄມ້ທີ່ເຮົາເອົາໃບ ໄວ້ລ້ຽງ ມ້ອນ.
ເກືອຝັ່ງ = ດິນເບີນແຄມນ້ຳ.
ທະວີ = ຫຼາຍຂຶ້ນ.
ຖົ່ວດຳ = ໝາກຖົ່ວປູກຍາມແລ້ງ ແລະໄດ້ ກິນໄວ.

## ຂໍ້ໃຫຍ່ໃຈຄວາມ:

໑. ສວນປະເພດຕ່າງໆ
໒. ພືນປູກຕ່າງໆ.
໓. ປໂຍດຂອງການປູກຕົ້ນໝາກໄມ້ ແລະຜັກ.

## ຄຳຖາມ:

ນອກຈາກການປູກເຂົ້າແລ້ວ ຊາວບ້ານເຈົ້າເຮັດ

ສວນຫຍັງແດ່?
ຢູ່ປະເທດເຮົາເພິ່ນປູກກາເຟແລະຊາຢູ່ໃສ?
ຢູ່ຕາມບ້ານເຮົານີ້ເພິ່ນປູກຕົ້ນໝາກໄມ້ຫຍັງ ແດ່?
ຢູ່ຕາມແຄມງື່ມແລະນ້ຳຂອງມີສວນຫຍັງແດ່?
ຢູ່ຕາມດົງບ້ານເຮົານີ້ເພິ່ນເຮັດສວນຫຼື ເຮັດໄຮ່ປູກ
ຫຍັງແດ່?
ຊາວບ້ານເຈົ້າເຮັດສວນຜັກຢູ່ໃສ?
ເຂົາເຈົ້າປູກຜັກຫຍັງແດ່?
ເພິ່ນປູກຕົ້ນໝາກໄມ້ແລະຜັກເພື່ອປໂຍດອັນໃດ?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ສວນຜັກ ສວນອ້ອຍ ປູກສາລີ ປໂຍດ.





## ໓໕. ສັດທີ່ຊ່ອຍແຮງເຮົາ.

ການເຮັດນາແລະເຮັດສວນ ເປັນວຽກໜັກໜາ ພໍ່ແມ່ຂອງເຮົາຈຶ່ງຈຳເປັນ ໄດ້ລ້ຽງສັດໄວ້ຊ່ອຍແຮງ ສັດທີ່ໄດ້ໃຊ້ວຽກຫຼາຍ ແມ່ນງົວແລະຄວາຍ.

ເພື່ອຈະຂົນເຂົ້າ ແລະແກ່ຂອງໜັກ ພວກເຮົາເຄີຍໃຊ້ງົວ ແລະກວຽນ. ເມື່ອບໍ່ມີທາງກວຽນ ,ເຮົາຈະໃຊ້ງົວ ຕ່າງເຄື່ອງຂອງກໍໄດ້ ຄວາຍນັ້ນ ໃຊ້ແກ່ໄຖ ແກ່ຄາດ ແລະລາງເທື່ອ ກໍໃຊ້ລາກທ່ອນໄມ້.

ງົວແລະຄວາຍ ເປັນປໂຍດສຳລັບຊາວນາ ແລ
ຊາວບ້ານ ມ້າແລະລໍໃຊ້ໄວ້ຂີ່ ແລະຕ່າງຂອງ ຊ້າງ
ຂີ່ ແລະລາກທ່ອນໄມ້. ຖ້າບໍ່ມີສັດຈຳພວກນີ້ ຊ່ອຍແຮ
ເຮົາກໍຈະໄດ້ຮັບຄວາມລຳບາກ ສັດເຫຼົ່ານີ້ຍັງໃຫ້ບ້ານ
ຊີ້ນ ໜັງ ເຂົາ ງາ ແລະກະດູກ ແກ່ເຮົາອີກດ້ວຍ ເມື
ສັດຕາຍຮ່າ ຕ້ອງຈັດການຝັງ ເພື່ອຫຼີກເວັ້ນພຍາດ
ຕໍ່ ດັ່ງນັ້ນ ເຮົາຕ້ອງມີຄວາມອີດູຕົນສັດ ໂດຍຄິດວ່າ ມ
ກໍມີຊີວິດຈິດໃຈ ຮູ້ອິດເມື່ອຍ ຮູ້ເຈັບ ຮູ້ຕາຍ ຄືກັບກ
ເຮົາ ເຮົາຕ້ອງບົວຣະບັດມັນ ໃຫ້ໄດ້ກິນອີ່ມ ແລະໃຫ
ພັກຜ່ອນ ຕາມສົມຄວນ ເມື່ອມັນເຈັບ ກໍຕ້ອງປິ່ນປ
ດ້ວຍຄວາມເອົາໃຈ.

## ຄຳອະທິບາຍ:

ລາກໄມ້ = ແກ່ໄມ້.
ພັກຜ່ອນ = ເຊົາເມື່ອຍ.
ຕາຍຮ່າ = ຕາຍໄວດ້ວຍພຍາດຕິດຕໍ່.



## ຂໍ້ໃຫຍ່ໃຈຄວາມ:

໑. ຈຳພວກສັດທີ່ລ້ຽງໄວ້ຊ່ອຍແຮງ.
໒. ການບົວຣະບັດສັດ.
໓. ຜົນປໂຍດທີ່ໄດ້ຈາກສັດ.

## ຄຳຖາມ:

ສັດທີ່ຊ່ອຍແຮງເຮົານັ້ນມີໃດໃດແດ່?
ເຮົາຕ້ອງປະພຶດຢ່າງໃດຕໍ່ສັດຈຳພວກນີ້?
ເມື່ອມັນຕາຍແລ້ວເຮົາໄດ້ຫຍັງນຳມັນອີກແດ່?
ເປັນຫຍັງເຮົາຈຶ່ງຕ້ອງຝັງສັດຕາຍຮ່າ?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ວຽກ ປໂຍດ ຊ່ອຍ ເຈັບ.



# ໓໕. ສັດທີ່ເປັນອັນຕະຣາຍແລະບໍ່ມີປໂຍ

ແຕ່ກ່ອນ ປູ່ຕາມດົງແດນບ້ານເຮົານີ້ ພໍ່ແມ່ຂອງ ເຮົາ ເລົ່າໃຫ້ຟັງວ່າ ມີສັດປ່າເປັນຈຳນວນມາກ ພວກ ທີ່ທຳຮ້າຍ ແກ່ຊີວິດຂອງຄົນມີ ເສືອໂຄ່ງ ເສືອເຫຼືອງ ໝີແລະເໝືອຍ ພວກທີ່ຣົບກວນ ເຄື່ອງປູກຂອງຝັງມີ ໝູປ່າ ເໝັ້ນ ລີງ ກວາງ ຟານ ຊ້າງ...

ໃນປັດຈຸບັນ ສັດເຫຼົ່ານີ້ ເກືອບຈະສູນຫາຍ ໄປ ໝົດແລ້ວ ຍ້ອນການລ່າເນື້ອ ແລະການຖາງປ່າ. ສ່ວນ



ທີ່ຍັງເຫຼືອ ກໍ່ຍ່າຍໄປຢູ່ປ່າ ເລິກດົງໜາ ຕາມຮ່ອມພູ ຜາ ບ່ອນຫ່າງໄກຈາກບ້ານຄົນ. ຢູ່ຕາມປ່າຍັງມີ ງູສາ ຣະພິດ ຄື ງູເຫົ່າ ງູຈົງອາງ ງູເຜົ້າກະບາ ສັດຈຳ ພວກນີ້ ເມື່ອເດັກນ້ອຍເຫັນແລ້ວ ບໍ່ຄວນເຂົ້າໄປໃກ້.

ປູ່ອ້ອມໂຕເຮົານີ້ ຍັງມີສັດນ້ອຍໆ ຫຼາຍຊະນິດທີ່ ມີປໂຍດຄື ໝັດ ເມັນ ຣິ້ນ ຍຸງ ແລະແມງວັນເປັນຕົ້ນ ໝັດ ພາໃຫ້ເຮົາຕິດ ພຍາດກາລະໂຣກ. ຍຸງນຳເອົາພຍາດ ໄຂ້ປ່າບາສູ່ເຮົາ. ແມງວັນມັກຈັບແຕ່ບ່ອນເປື້ອນເປິ ເມື່ອ ມາຕອມອາຫານ ກໍ່ໄດ້ນຳເອົາພຍາດມາໃສ່ເຮົາ.

ເຮົາຕ້ອງປາບປາມສັດ ທີ່ເປັນອັນຕະຣາຍ ແກ່ ຊີວິດຂອງຄົນແລະສັດ.

**ຄຳອະທິບາຍ:**

ຣົບກວນ = ທຳຄວາມຫຍຸ້ງຍາກແລະເສັຽຫາຍ.

ລ່າເນື້ອ = ໄລ່ເອົາສັດປ່າ.
ງູສາອະພິດ = ງູມີພິດຮ້າຍແຮງ.
ປາບປາມ = ເຮັດໃຫ້ສູນຫາຍ.

## ຂໍ້ໃຫຍ່ໃຈຄວາມ:

໑. ຈຳພວກສັດປ່າທີ່ທຳອັນຕະລາຍ ແກ່ຄົນ ແລະເຄື່ອງປູກ.
໒. ຈຳພວກສັດອັປໂຍດທີ່ຢູ່ອ້ອມໂຕເຮົາ.
໓. ຕ້ອງປາບສັດທີ່ເປັນອັນຕະລາຍແກ່ຄົນ ແລະສັດ.

## ຄຳຖາມ:

ຢູ່ຕາມດົງບ້ານເຈົ້າມີສັດປ່າແນວໃດແດ່?



ສັດຈຳພວກໃດມັກທຳຮ້າຍໃຫ້ແກ່ຄົນແລະ ເຄື່ອງປູກ?
ສັດດັ່ງກ່າວນີ້ຍັງມີຫຼາຍເໝືອນແຕ່ກ່ອນບໍ່?
ສັດທີ່ນຳພຍາດມາໃສ່ເຮົາມີໂຕໃດແດ່?
ທຳຢ່າງໃດຈຶ່ງຈະປາບປາມສັດທີ່ເປັນອັນຕະລາຍ ແກ່ຊີວິດຂອງເຮົາໄດ້?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ອັນຕະລາຍ ເສືອ ພ່າຍໜີ ຮ້າຍ.



# ໖໙. ການປັບປຸງການປູກຝັງ.

ແຕ່ກ່ອນ ການເຮັດນາເຮັດສວນ ຍູທ່າງໄດ້ເລືອກ
ພື້ນທີ່ ຕາມໃຈມັກ ສະນັ້ນຜົນເກັບກ່ຽວ ຈຶ່ງໄດ້ພໍກຸ້ມກິ

ມາບັດນີ້ ພົລເມືອງໄດ້ເພີ່ມ ຈຳນວນ ຂຶ້ນຫຼາຍ
ກວ່າເກົ່າ. ນາແລະສວນ ບໍ່ພໍກັບເຮັດ ວ່າແຕ່ມີໜອງ
ນ້ຳ ວັງປາ ແລະດົງດອນ ປູ່ບ່ອນໃດ ກໍພາກັນສັບຊ່າວ
ເຮັດນາເຮັດສວນເກືອບໝົດ. ດິນຈະງາມ ຫຼືບໍ່ງາມກໍ
ໄດ້ເລືອກ ແຕ່ປານນັ້ນ ຜົນເກັບກ່ຽວກໍຍັງບໍ່ກຸ້ມກິນ ອີ



ປະການນຶ່ງ ດິນທີ່ເຄີຍຈົບງາມມາແຕ່ກ່ອນ ກໍເລີຍຈືດ
ຈາງໄປ ຍ້ອນຂາດຝຸ່ນທັມມະຊາດ ແລະບໍ່ມີການປັບປຸງ.

ເພື່ອຈະໃຫ້ນາ ແລະສວນຂອງເຮົາໄດ້ຜົນດີ ຕ້ອງ
ປັບປຸງທີ່ດິນ. ດິນບ່ອນໃດບໍ່ດີ ຕ້ອງຫາຝຸ່ນມາຕື່ມໃສ່
ບ່ອນໃດຂາດເຂີນນ້ຳ ຕ້ອງເປັ່ງນ້ຳເຂົ້າມາໃສ່. ຖ້າວ່າ
ແມ່ນບ່ອນຕ່ຳ ກໍຕ້ອງຫາທາງເປັ່ງນ້ຳອອກ.

ເພື່ອຊ່ອຍເຫຼືອຣາສດອນ ປັບປຸງການປູກຝັງ
ທາງຣັຖບານ ໄດ້ສົ່ງເຈົ້າໜ້າທີ່ຜແນກປູກຝັງ ໄປຊ່ອຍ
ແນະນຳເຂົາເຈົ້າ ພ້ອມທັງແຈກປາຍເຄື່ອງມື ເຄື່ອງ
ປູກ ສ້າງຝາຍ ແລະເໝືອງ. ການຊ່ອຍເຫຼືອດັ່ງກ່າວ
ນີ້ ໄດ້ມີຂຶ້ນປູ່ທົ່ວທຸກແຂວງ. ທີ່ນະຄອນວຽງຈັນ ຣັຖ
ບານໄດ້ຈັດຕັ້ງ ສູນກາງອາຫານ ແລະກະເສດຂຶ້ນ ດ້ວຍ
ຄວາມຊ່ອຍເຫຼືອ ຂອງອົງການໂລກ ໂດຍມີຈຸດປະສົງ
ຈະສົ່ງເສີມການປູກຝັງ ແລະອາຫານການກິນໃຫ້ດີຂຶ້ນ.

ດ້ວຍເຫດນີ້ ຜົນທີ່ໄດ້ມາຈາກການປູກຝັງ ຈຶ່ງມີ
ຫຼາຍພໍສົມຄວນ ຈົນໄດ້ນຳອອກຂາຍ ຕາມທ້ອງຕລາດ-

ແຕ່ເຖິງປານນັ້ນ ກໍຍັງບໍ່ພຽງພໍ ກັບຄວາມຕ້ອງການຂອງພົລເມືອງ ໃນປັດຈຸບັນນີ້ ເມື່ອເປັນດັ່ງນີ້ ເຮົາຄວນຂຍາຍການປູກຝັງ ໃຫ້ທະວີຂຶ້ນ.

## ຄຳອະທິບາຍ:

ບູທ່າງ = ເຮັດໄດ້ຕາມໃຈ.
ເຄື່ອງມື = ເຄື່ອງໃຊ້ເຮັດວຽກ.
ສັບຊ່າວ = ຂຸດກັບດິນ.
ກຸ້ມກິນ = ພໍກິນ.
ດິນຈືດຈາງ = ດິນຂາດເຊື້ອຝຸ່ນ.
ຝາຍ = ຄູປ້ານນ້ຳ.
ທະວີຂຶ້ນ = ຫລາຍກວ່າເກົ່າ.

## ຂໍ້ໃຫຍ່ໃຈຄວາມ:

໑. ສະພາບການເຮັດນາເຮັດສວນ ແຕ່ເກົ່າກ່ອນ



໒. ປະຊາຊົນຄວນປັບປຸງແກ້ໄຂດ້ວຍວິທີຕ່າງໆ
໓. ລັດຖບານໄດ້ຊ່ອຍເຫລືອ ອາສດອນ.
໔. ໂຄງການທີ່ລັດຖບານໄດ້ປະຕິບັດແລະຈະດຳເນີນໄປໃນອະນາຄົດ.

## ຄຳຖາມ:

ການເຮັດນາເຮັດສວນແຕ່ກ່ອນເປັນຢ່າງໃດ?
ຊາວນາຊາວສວນຄວນເຮັດຢ່າງໃດ?
ອົງການອາຫານແລະກະເສດມີປໂຍດຫຍັງໃຫ້ແກ່ເຮົາແດ່?

## ຫັດແຕ່ງເລື່ອງ:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ເໝືອງ ງານ ເລືອກ ສັບຊ່າວ.



# ໓໗. ປໂຍດຂອງຜົນປູກ.

ຊາວບ້ານເຮົາ ເຮັດນາແລະສວນ ຜົນທີ່ເພິ່ນເກັບ
ກ່ຽວໄດ້ ສ່ວນມາກ ກໍນຳເອົາມາລ້ຽງຄອບຄົວ ຖ້າເຫັນ
ວ່າອັນໃດ ຈະເຫຼືອກິນເຫຼືອໃຊ້ ເພິ່ນກໍໄດ້ແບ່ງອອກ
ໄປຂາຍ.

ທຸກມື້ນີ້ ເຂົ້າໄດ້ຂາຍດີເຕັມທີ ເຮົາຈະຂາຍເຂົ້າ
ເປືອກກໍງ່າຍ ມີພໍ່ຄ້າເຂົ້າ ເອົາກວຽນຫຼືຣົດ ມາຫາຊື້
ຢູ່ກັບບ້ານເຮົາພື້ເລື້ອຍໆ ຖ້າປາກຂາຍເຂົ້າສານ ຍິ່ງໄດ້



ລາຄາດີ ແຕ່ຕ້ອງໃຊ້ເວລາຕຳຫຼືສີເສັຽກ່ອນ.

ໝາກໄມ້ ຜັກ ແລະເຄື່ອງປູກຕ່າງໆ ຢູ່ໃນສວນ ຈະຂາຍຢູ່ກັບບ້ານກໍໄດ້ ແຕ່ສ່ວນມາກ ຊາວບ້ານເຮົາ ມັກນຳເອົາເຄື່ອງປູກເຫຼົ່ານີ້ ໄປຂາຍຕາມຕລາດໃນເມືອງ ເພາະໄດ້ລາຄາດີ.

ໃນຄອບຄົວຂ້ອຍ ແມ່ຫຼືເອື້ອຍອ້າຍ ໄດ້ປ່ຽນກັນໄປຕລາດ ເກືອບທຸກມື້ ເພິ່ນໄປຂາຍຜັກບົ່ວ ຜັກທຽມ ໝາກມີ້ ໝາກມ່ວງ ໝາກເຜັດ ໝາກເຂືອ ຫົວສິງໄຄ ໃບອີຕູ່ ຕາມບານແລະຣະດູ ລາງເທື່ອ ເມື່ອມີເຄື່ອງຫຼາຍແລະໜັກຄື ໄກ່ເຂົ້າສານ ກ້ວຍ ອ້ອຍ ໝາກອຶ ໝາກໂຕ່ນ ເຜືອກ ມັນ ພໍ່ຂ້ອຍກໍໄດ້ເອົາກວຽນແກ່ ໄປສົ່ງຮອດຕລາດ.

ການປູກຝັງ ພາໃຫ້ໄດ້ຢູ່ໄດ້ກິນ ແລະສະດວກສະບາຍ ທັງນຳຄວາມເບີກບານ ມາສູ່ຊາວບ້ານອີກດ້ວຍ.

## ຄຳອະທິບາຍ:

ຜົນປູກ = ສິ່ງທີ່ໄດ້ມາຈາກການປູກ.

ລາຄາດີ = ຂາຍໄດ້ແພງ.

## ຂໍ້ໃຫຍ່ໃຈຄວາມ :

໑. ຜົນປູກທີ່ໄດ້ມາຈາກການເຮັດນາແລະສວນ

໒. ການໃຊ້ແລະຈ່າຍຜົນປູກ.

໓. ການປູກຝັງເປັນຮາກຖານເສດຖະກິດອັນສຳຄັນ ຂອງປະເທດ.



## ຄຳຖາມ:

ຜົນປູກຂອງຊາວບ້ານເຈົ້າເພິ່ນໃຊ້ເຮັດຫຍັງແດ່?
ແມ່ຫຼືເອື້ອຍເຈົ້າເອົາຜົນປູກໄປຂາຍໃສ?
ເພິ່ນໄດ້ຂາຍຜົນປູກຢ່າງໃດແດ່?
ນອກຈາກກິນຫານແລ້ວເພິ່ນໃຊ້ຫຍັງຊື້ ເຄື່ອງ ໄປຕລາດ?
ການປູກຝັງຫຼາຍມີປໂຍດຢ່າງໃດແດ່?

## ຫັດແຕ່ງເລື່ອງ :

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ລ້ຽງ ເຄື່ອງປູກ ໜັກ ຜັກ ປ້ອງກັນ.



## ໗໙. ສັດທີ່ຄົນລ້ຽງ.

ຝູງໝູ່ງົວຄວາຍຊ້າງ ມ້າມິ່ງເຫຼືອ ຫຼາຍ
ເປັນສັດຂອງຄົນເຄີຍ ລ້ຽງດູຖະນອມໄວ້
ຄັນເຮົາເອົາມັນໃຊ້ ວັນຄືນບໍ່ໄດ້ຈົ່ມ
ຈົນມັນເຖົ້າແກ່ແລ້ວ ກໍ່ຍັງຮູ້ປູ່ເລົາ.
ລາງສັດໃຊ້ ຂັບຂີ່ໄປມາ
ລາງສັດເອົາແກ່ກວຽນ ຄາດໄຖເລົາເລື້ອຍ
ຕາມໃຈຕ້ອງ ປະສົງເຮົາທຸກເບື້ອງ
ວາດມັນບໍ່ຕອບຖ້ອຍ ຖຽງແກ້ເກື່ອຍເຮົາ.



ຝູງໝູ່ສັດເຫຼົ່ານັ້ນ ເດັກຊາດຊາຍຍິງ
ເອົາຫາກພໍໃຈຮັກ ຂີ້ປອງໄປລ້ຽງ
ມັນບ່ອນຍັງຟັງຖ້ອຍ ຄຳເຂົານ້ອຍໜຸ່ມ
ພັດພຽກໄປພຸ້ນພີ້ ກໍ່ອິດເບື້ອນຍ່າງຕາມແທ້ແລ້ວ.
ມະຫາແກ້ວ.

### ຄຳອະທິບາຍ:

ຖະນອມ = ບົວຣະບັດ.
ປະສົງ = ປາກໄດ້.
ແກ້ເກື່ອຍ = ຫຼີກເວັ້ນ.
ພັດພຽກ = ດຶງວາກຊ້າຍງວາກຂວາ.
ອິດເບື້ອນ = ອິດສາ.
ປູ່ເລົາ = ປູ່ເລື້ອຍໆ.

### ຄຳຖາມ:

ສັດທີ່ຄົນລ້ຽງມີໃດໃດແດ່!

ສັດເຫຼົ່ານີ້ໃຊ້ການຢ່າງໃດ?
ເປັນຫຍັງເດັກຊາຍຍິງຈຶ່ງຮັກສັດເຫຼົ່ານີ້?
ເຮົາຄວນບົວລະບັດສັດເຫຼົ່ານີ້ຢ່າງໃດ?

## <u>ຂໍ້ໃຫຍ່ໃຈຄວາມ:</u>

໑. ຄວາມອ່ອນນ້ອມຂອງສັດທີ່ຄົນລ້ຽງ.
໒. ສັດນັ້ນເຮັດວຽກການໃຫ້ເຮົາທຸກເວລາເຖິງຈະເມື່ອຍປານໃດຍັງອຸດສາເຮັດໃຫ້ເຮົາຢູ່.
໓. ການຟັງຖ້ອຍຟັງຄວາມຂອງຜູ້ໃຫຍ່ແລະເດັກນ້ອຍ.

## <u>ຫັດແຕ່ງເລື່ອງ:</u>

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:
ສັດທີ່ຄົນລ້ຽງ ອຶດທົນ ລ້ຽງເກືອ ຂີ້.





## ໔໐. ເດັກລ້ຽງຄວາຍ

ແມ່ນວ່າຂ້ອຍຜູ້ລ້ຽງ  ຄວາຍຢູ່ຕາມສເນີດົງນັ້ນ
ໃຜເຫັນກໍຄົງຄຶດວ່າ  ຜູ້ຈົນໃຈຊ້າ
ຄວາມຈິງຂ້ອຍ  ບໍ່ມີຈົນຈັກໜ່ອຍ
ເພາະວ່າຂ້ອຍຮຸ່ງຮູ້  ເຫັນທີ່ທາງສນຸກ
ຈັກເອື້ອນເອົາອັນໃດ  ເທົ່າທຽມບໍ່ມີໄດ້
ເຫດວ່າເວລາເຊົ້າ  ເປັນມາບໍ່ຄຶດຕ່າງ
ໄດ້ແຕ່ຂື້ນຂີ່ລ້ຽງ  ຄວາຍເບື້ອງບ່ອນດຽວ.

ອັນນີ້ງກຸບເກົ່າຂ້ອຍ　ອາດໃສ່ສຸບຫົວກໍດີ
ທັງທີ່ຮຽວຫນາມແຫນງ　ໄມ່ຕິນຕີຕ້ອງ
ນຶກວ່າເປັນຂອງຄ້ຳ　ຄຸບດີອັນປະເສີດ
ທັງໄດ້ຍິນນົກຮ້ອງ　ສຽງແຈ້ວຈອດຫູ
ແລ້ວໝູ່ແມງກະເບື້ອ　ຫຼາຍພວກພັນສີ
ບິນຈ່ອງຈັບຮຽວຫນາມ　ຫຍ້າຂຽວຂາວພ້ອມ
ຕາມທີ່ແດວທົ່ງກວ້າງ　ເກີນຄວາມສນຸກມາກ
ເດັກນ້ອຍຜູ້ສ່ຳຂ້ອຍ　ໃຜຊິອ້າງອາດຫຽມໄດ້

ເດ

ມະຫາແກ້ວ.

## ຄຳອະທິບາຍ:

ປະເສີດ　= ດີຫຼາຍ.
ຜູ້ລ້ຽງ　= ຜູ້ຮັກສາ.



ຜູ້ຈີນ　= ຜູ້ທຸກ.
ຮຸ່ງຮູ້　= ຄິດເຫັນ.
ຈັກເອື້ອມເອົາ = ຈັກເອົາອັນໃດ.
ພັນສີ　= ຫຼາຍສີ.
ສນຸກ　= ສະບາຍ.
ອາດຫຽມ = ປຽບໄດ້.

## ຂໍ້ໃຫ່ຍໃຈຄວາມ:

໑. ເດັກລ້ຽງຄວາຍ ມີຄວາມອອນຊອນໃນເມື່ອໄປລ້ຽງຄວາຍ.
໒. ຄວາມອອນຊອນພາໃຫ້ເດັກເບີກບານໃຈ.
໓. ເດັກລ້ຽງຄວາຍຖືວ່າການລ້ຽງຄວາຍ ມີຄວາມອອນຊອນແກ່ຊີວິດຂອງເຂົາເອງ.

## <u>ຄຳຖາມ</u> :

ເດັກຜູ້ນີ້ຄຶດວ່າຢ່າງໃດຈຶ່ງມັກລ້ຽງຄວາຍ?

ມີສິ່ງໃດພາໃຫ້ເດັກນ້ອຍລ້ຽງຄວາຍ ມີຄວາມອອ
ຊອນ?

ເດັກຜູ້ລ້ຽງຄວາຍນີ້ຄຶດວ່າກຸບຂາດ ແລະ ເສື້ອຂາດ
ເປັນຂອງປາງໃດ?

ເດັກລ້ຽງຄວາຍຄວນຮຽນໜັງສືຫຼື ບໍ່?

## <u>ຫັດແຕ່ງເລື່ອງ</u>:

ໃຫ້ເອົາຄຳຕໍ່ໄປນີ້ແຕ່ງເປັນຄຳລະປໂຍກ:

ເວລາເຊົ້າ ເກົ່າ ແມງກະເບື້ອ ສເມີ.





# ໔໑. ປ່າດົງແຄມບ້ານເຮົາ

ບ້ານເຮົາ ຕັ້ງຢູ່ຕີນດົງແຄມທົ່ງ ດົງນັ້ນໃຫຍ່ກວ້າງ ແລະຍາວປະມານ ໔ ກິໂລແມັດ. ຢູ່ອ້ອມດົງມີຫຼາຍໝູ່ບ້ານ ປາຍຢູ່ຫ່າງກັນ ໃນກາງດົງມີ ຊ່ວນ້ຳ ທົ່ງນ້ອງ ແລະໜອງປາຫຼາຍແຫ່ງ.

ແຕ່ກ່ອນດົງນີ້ ເປັນດົງໜາປ່າຕຶບ ຄົນຈະທ່ຽວໄປມາ ຫາກັນກໍຍາກ ທາງລັດຊື່ໄປຫາກັນ ມີໜ້ອຍທີ່ສຸດ

ຖ້າຈະຜ່ານໄປ ຕ້ອງມີໝູ່ເພື່ອນໄປນຳ ເພາະເຄີຍມີເສື
ແລະຊ້າງລັດທາງ ໃນດົງນີ້ ບັງມີຈີ່ເຂັບ ແມງງອດ
ແລະງູພິດຫຼາຍ. ດັ່ງນັ້ນ ເມື່ອຈະໄປຫາກັນ ຄົນທັງ
ຫຼາຍ ຕ້ອງລັດທົ່ງລັດນາ ແລະໄປຕາມຕີນປ່າ ແຕ່ຫາ
ເປັນທາງເວີ້ງ.

ເວລານີ້ມີຄົນຫຼາຍ ປ່າດົງກໍແຄບເຂົ້າ ເພາະຄົນ
ຖາງໄຮ່ ຖາງສວນ ແລະຊ່າວນາໃສ່ ຫົນທາງກໍບັບມີ
ແປນ ທັງໄປມາກໍສະດວກ ເສືອ ຊ້າງ ແລະງູພິດ ກ
ບໍ່ສູ້ມີຫຼາຍ ກວງນແລະອີດ ແລ່ນໄປມາ ໃນດົງໄດ້ສະ
ດວກ ເພື່ອແກ່ຫຼົວແກ່ພື້ນ ແລະແກ່ໄມ້ມາໃຊ້ ໄດ້ຕາ
ຄວາມຕ້ອງການ.

ຂ້ອຍເອງ ກໍໝັ່ນໄດ້ເຂົ້າດົງ ນຳແມ່ຫຼືເອື້ອຍ ເພື່
ເກັບຜັກຫາໜໍ່ໄມ້ ບາງທີ່ຂ້ອຍກໍໄປນຳພໍ່ ເພື່ອຊອກເ



ຮັງມິ້ມ ຮັງເຜີ້ງ ຮັງຕໍ່ ແລະຊອກບົງເບື້ອ ຫຼືຕໍ່ໄກ່.

ຄວນຮັກສາປ່າດົງ ທີ່ມີໄມ້ເປັນປໂຍດ ເພື່ອໄວ້ສ້າງ
ສາ ບ້ານເມືອງຂອງເຮົາ.

## ຄຳອະທິບາຍ:

ທົ່ງມ້ອງ = ທົ່ງນ້ອຍຢູ່ໃນດົງ.
ປ່າຕຶບ = ປ່າຮົກຫຼາຍ.
ເວີ້ງ = ໂງໄປໂກ.
ເບື້ອ = ສັດປ່າ.

## ຂໍ້ໃຫຍ່ໃຈຄວາມ:

໑. ສະພາບຂອງດົງບ້ານເຮົາ.

໖. ການໄປມາຫາກິນຕາມດົງບ້ານເຮົາ.

໗. ປ່າເປັນບ່ອນສຳຄັນໃນການທຳມາຫາກິນ ຂອງເຮົາ.

## ຄຳຖາມ:

ຢູ່ໃກ້ບ້ານເຈົ້າມີດົງໃຫຍ່ບໍ?
ແຕ່ກ່ອນກັບດຽວນີ້ດົງບ້ານເຈົ້າມີຄວາມແຕກຕ່າງກັນຢ່າງໃດ?
ເຮົາຄວນຮັກສາໄມ້ທີ່ເປັນປໂຍດຢູ່ໃນປ່າໃກ້ບ້ານເຮົາບໍ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ທຸກຂໍ້;





# ໔໖. ສັດປ່າຢູ່ຕາມດົງບ້ານເຮົາ.

ສັດປ່າຢູ່ຕາມດົງບ້ານເຮົາ ມີຫລາຍຈຳພວກ. ຊ້າງ ເສືອ ໝີ ເໝືອຍ ແລະງູພິດ ເຊິ່ງເປັນສັດຮ້າຍ ແລະ ກັບດານ. ສັດທີ່ບໍ່ກັບດານ ແຕ່ມັກຣົບກວນ ຮົ້ວໄຮ່ນາສວນ ຂອງເຮົານັ້ນມີ ກວາງ ຟານ ໂອງ ມັ່ງ ໝູປ່າ ເໝັ້ນ ໝູ ແລະລີງ. ສ່ວນກະຮອກ ກະຈ້ອນ ກະແຕ ກະເລັນ ຄ່າງ ບາງ ທະນີ ກໍທຳຄວາມເສັຽຫາຍ ໃຫ້

ເຄື່ອງປູກ ຂອງຝັງ ຂອງເຮົາບາງເລັກນ້ອຍ.

ສັດປ່າທັງຫຼາຍເຫຼົ່ານີ້ ລາງໂຕທຳອັນຕະລາຍ ໃຫ້ເຮົາກໍ່ຈິງ ແຕ່ສ່ວນຫຼາຍ ຫາກເປັນປໂຍດແກ່ເຮົາ.

ປັດຈຸບັນນີ້ ສັດປ່າໄດ້ສູນຫາຍໄປຫຼາຍແລ້ວ ດັ່ງນັ້ນ ເຮົາບໍ່ຄວນພິປອງ ຂ້າສັດທີ່ບໍ່ທຳຮ້າຍ ໃຫ້ແກ່ຊີວິດຂອງເຮົາ. ຖ້າເຮົາຂ້າມັນ ມັນກໍ່ຈະດັບວາຍຈິບຫາຍໝົດ ພວກເດັກທີ່ເກີດລຸນຫຼັງ ກໍ່ຈະບໍ່ໄດ້ຊົມສັດປ່າອີກ.

## ຄຳອະທິບາຍ:

ພິປອງ = ພຍາຍາມຊອກຫາຊ່ອງທາງ.

ຈິບຫາຍ = ໝົດໄປ.

ບໍ່ໄດ້ຊົມ = ບໍ່ໄດ້ເຫັນ.



## ຂໍ້ໃຫຍ່ໃຈຄວາມ:

໑. ປະເພດສັດປ່າໃນປ່າບ້ານເຮົາ.
໒. ຄວາມເສັຽຫາຍຈາກສັດປ່າ.
໓. ຄວນປ້ອງກັນສັດປ່າ.

## ຄຳຖາມ:

ສັດປ່າຢູ່ໃນດົງບ້ານເຮົາມີໂຕໃດແດ່?
ສັດປ່າທຳຄວາມເສັຽຫາຍຢ່າງໃດແດ່?
ເປັນຫັຍງເຮົາຈຶ່ງຄວນປ້ອງກັນສັດປ່າ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນັ້ນທຸກຂໍ້:



## ໔໙. ປໂຍດຂອງໄມ້ຢູ່ໃນປ່າບ້ານເຮົາ.

ຢູ່ໃນປ່າບ້ານເຮົາ ມີຕົ້ນໄມ້ໃຫຍ່ແລະນ້ອຍທຸກຊະນິດ. ຈຳພວກຕົ້ນໄມ້ໃຫຍ່ມີ ໄມ້ດູ່ ໄມ້ແຄນ ໄມ້ແດງ ໄມ້ຈິກ ໄມ້ຮັງ ໄມ້ຍາງ ແລະໄມ້ອື່ນໆ ຈົນນັບບໍ່ຖ້ວນ ໄມ້ທັງຫຼາຍເຫຼົ່ານີ້ ພວກພໍ່ແມ່ເຮົາ ໄດ້ໄປຕັດເອົາມາສ້າງເຮືອນ ສ້າງຂົວ ແລະສ້າງວັດວາອາຣາມ. ມີຊາວບ້ານຫຼາຍຄົນ ອາສັຍຫາກິນນຳການເລື່ອຍໄມ້ ຕັດເສົາເຮືອນ ແລະໄມ້ທ່ອນ. ລາງຄົນກໍຕັດຟືນຫຼາ ຫຼືເຜົາຖ່ານຂາຍ ຈົນກາຍເປັນຄົນຮັ່ງມີ.



ເຄື່ອງໃຊ້ສອຍຄື ກະຕ່າ ກະບຸງ ກະຊ້າ ກະປຸ່ມ ກະລອມ ດູ້ ໂດະ ຕັ່ງ ຖາດ ໄຖ ລອບ ໄຊເປັນຕົ້ນ ກໍແມ່ນເຮັດດ້ວຍໄມ້ ແລະຫວາຍ ທີ່ເອົາອອກມາ ຈາກປ່າທັງສິ້ນ. ຫຼົວ ແລະຟືນ ກໍເອົາມາ ຈາກປ່າເໝືອນກັນ.

ຢູ່ໃນປ່າບ້ານເຮົາ ຍັງມີເຄື່ອງຄ້ຽວ ຂອງກິນຫຼາຍຢ່າງ ຊາວບ້ານເຮົາໝັ່ນເຂົ້າປ່າ ເພື່ອເກັບຜັກ ຫາໜໍ່ໄມ້ ໜໍ່ບຸ່ນ ໜໍ່ຫວາຍ ແລະເກັບເຫັດ. ລາງຄົນກໍໄປຕັກນ້ຳມັນຍາງ ແລະຊອກເອົາໃບເຕີຍ ແລະທັງເກັບຂີ້ຂອນດອກ ມາໄວ້ທຳກະບອງ. ຢູ່ໃນປ່າບ້ານເຮົາ ຍັງມີຕົ້ນໄມ້ ໃບໄມ້ ແລະຮາກໄມ້ຫຼາຍຢ່າງ ທີ່ໃຊ້ເປັນຢາປົວພຍາດ ຂອງຄົນແລະສັດ.

ປ່າດົງເປັນປໂຍດ ແກ່ເຮົາຫຼາຍ ຊາວບ້ານຂອງເຮົາ ສ່ວນນຶ່ງອາສັຍປ່າ ແລະດົງລ້ຽງຊີວິດ.

### ຄຳອະທິບາຍ:

ນັບບໍ່ຖ້ວນ = ນັບບໍ່ໄຫວ.
ຮັ່ງ = ມີເງິນຫຼາຍ.

## ຂໍ້ໃຫຍ່ໃຈຄວາມ :

໑. ປະເພດໄມ້ຢູ່ໃນປ່າ.
໒. ການນຳເອົາໄມ້ແລະຜົນໄມ້ຕ່າງໆ ຈາກປ່າ ມາໃຊ້ແລະກິນ.
໓. ໄມ້ແລະຜົນໄມ້ຢູ່ໃນປ່າເປັນປໂຍດໃຫ້ແກ່ຊາວບ້ານ

## ຄຳຖາມ :

ຢູ່ໃນດົງບ້ານເຈົ້າມີຫຍັງແດ່?
ໄມ້ໝູ່ນັ້ນເພິ່ນເອົາໃຊ້ເຮັດຫຍັງ?
ຢູ່ໃນດົງບ້ານເຈົ້າມີຜັກແລະໝາກໄມ້ແນວໃດແດ່?
ໄມ້ແລະຜົນໄມ້ເປັນປໂຍດຢ່າງໃດໃຫ້ແກ່ຄົນ ແລະສັດ.

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ທຸກຂໍ້:





# ໔໔. ແຮ່ໂລຫະແລະຫີນໃນປະເທດເຮົາ.

ໜ້າດິນຂອງປະເທດເຮົາ ສ່ວນຫຼາຍເຕັມໄປດ້ວຍພູ ຜາ ແລະປ່າດົງ ເປັນຕົ້ນຢູ່ທາງພາກເໜືອ ຕາບ່ອນກວ້າງຂວາງຮາບພຽງ ພໍຈະເຮັດນານັ້ນ ກໍບໍ່ມີຫຼາຍ ດັ່ງນັ້ນ ພວກລາວເໜືອຈຶ່ງຈຳເປັນ ພາກັນເຮັດໄຮ່ເປັນສ່ວນມາກ.

ຕາມພູເຫຼົ່ານີ້ ເພິ່ນໄດ້ຄົ້ນພົບ ບໍ່ແຮ່ຢູ່ຫຼາຍບ່ອນ ບໍ່ເຫຼົ່ານັ້ນ ທາງຣາຊການ ຍັງບໍ່ທັນໄດ້ຂຸດຄົ້ນ ເອົາໄວ້

ແຕ່ບໍ່ກົ່ວນ້ຳປະເທບ ແລະບໍ່ໃພບຕົ້ວ ບໍ່ດັ່ງກ່າວນີ້ ປູ່
ໃກ້ເມືອງຫີນປູນແຂວງຄຳມ່ວນ ເຊິ່ງເພິ່ນໄດ້ຂຸດຄົ້ນມາ
ຫຼາຍປີແລ້ວ.

ປູ່ຕາມແຂວງຜົ້ງສາລີ ຊຳເໜືອ ຊຽງຂວາງ ບັງ
ມີບໍ່ເຫຼັກ ບໍ່ຊືນ ບໍ່ຖ່ານຫີນ ບໍ່ທອງ ແລະບໍ່ນາກ. ປ
ຕາມແຂວງຫຼວງພຣະບາງ ວຽງຈັນ ບໍລິຄັນ ສາຣະວັນ
ແລະອັດຕະປື ເພິ່ນຈວບບໍ່ຖ່ານຫີນ ບໍ່ເງິນ ບໍ່ຄຳ ແລະບ
ເກືອອີກ ບໍ່ດັ່ງກ່າວມານີ້ ອາດຈະມີແຈກປາຍປູ່ທົ່ວທຸກ
ແຂວງ ບໍ່ຫຼາຍກໍ່ໜ້ອຍ. ສ່ວນບໍ່ນ້ຳມັນກາດ ກໍ່ຄືຈະ
ມີປູ່ໃນແຂວງເຫຼົ່ານີ້ເໝືອນກັນ.

ຫີນພູມີປໂຍດ ສຳລັບໄວ້ ປູຖນົນຫົນທາງ. ບາງ
ທີ່ ເພິ່ນໄດ້ເອົາຫີນພູນີ້ ກໍ່ເສົາຂົວແລະເຮືອນ ຫີນປູນ
ມີປູ່ທຸກໆແຂວງ ເປັນຕົ້ນປູ່ແຂວງຄຳມ່ວນ ປູ່ໃນແຂວ
ນີ້ ມີເຕົາເຜົາປູນປູ່ຫຼາຍບ່ອນ ພ້ອມທັງໄດ້ລົງມື ສ້າງ
ໂຮງງານເຮັດຊີມັງ ສ່ວນຫີນອ່ອນນັ້ນມີປູ່ຕາມບາງແຂວ

ປູ່ຕາມທົ່ງນາບາງບ່ອນ ມີດິນໜຽວແກມຊາຍ ປ
ຕາມໂຄກແລະດົງ ມັກມີຫີນຮັງແຕນ ເພື່ອປາກໄດ້ຊາ



ແລະຫີນແຮ່ ຕ້ອງໄປຂົນເອົາຕາມຫາດ ໃນລຳແມ່ນ້ຳ.

ດ້ວຍດິນໜຽວ ເພິ່ນປັ້ນດິນຈີ່ ດິນຂໍ ແລະໝໍ້ໄຫ ຕ່າງໆ. ແຮ່ແລະຫີນ ເປັນຂອງມີຄ່າ ໃນເມື່ອເຮົາຂຸດຄົ້ນ ອອກມາໄດ້.

## ຄຳອະທິບາຍ:

ແຮ່ = ໂລຫະທາດຕ່າງໆ ທີ່ບໍ່ທັນຫຼໍ່ຫຼອມ.
ພົບ = ເຫັນ.
ຈວບ = ພໍ້.

## ຂໍ້ໃຫຍ່ໃຈຄວາມ:

໑. ສະພາບໜ້າດິນຂອງປະເທດເຮົາ.
໒. ຊັບໃນດິນຕາມແຂວງຕ່າງໆ.

ງ. ຄຸນຄ່າຂອງແຮ່ແລະຫີນ.

## ຄຳຖາມ :

ພື້ນທີ່ປະເທດລາວເຮົາມີພູຜາປ່າໄມ້ຫຼາຍບໍ?
ໃນປະເທດລາວມີບໍ່ຫັຍງແດ່?
ຫີນມີປໂຍດຢ່າງໃດ?
ເອົາມາຈາກໃສ?
ເພິ່ນຈົວບຫັຍງຢູ່ໃນພື້ນດິນ?
ຊາຍແລະດິນໜຽວໃຊ້ເຮັດຫັຍງ?
ດ້ວຍເຫດໃດຈຶ່ງວ່າແຮ່ແລະຫີນເປັນຂອງມີຄ່າ

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້





## ໔໕. ໜອງແລະລຳນ້ຳບ້ານເຮົາ.

ນາຂອງເຮົາ ຢູ່ແຄມບຶງອັນໃຫ່ຍກວ້າງ ແລະຍືດຍາວ ພໍ່ເຖົ້າຂ້ອຍວ່າ ຍ້ອນອາສັຍບຶງແລະລຳນ້ຳ ຊາວບ້ານເຮົາ ຈຶ່ງໄດ້ມາຕັ້ງບ້ານເຮືອນຢູ່ທີ່ນີ້ ບ່ອນທີ່ມີດິນນາມີປ່າ ແລະມີດົງດອນບ່ອນຟັນໄມ້ ດັ່ງບ້ານເຮົານີ້ ມັນຫາໄດ້ຍາກ.

ບຶງບ້ານເຮົາ ມີນ້ຳຢູ່ຕລອດປີ ໃນກາງບຶງມີວັງນ້ຳໃສ ອ້ອມວັງນ້ຳບ່ອນນີ້ ມີປ່າດອກບົວຫຼວງ ແລະປ່າຜັກຕົບ. ຍາມດອກບົວບານ ເຮົາແລເຫັນແຕ່ໄກແດງເຮື່ອ

ຢູ່ຕາມໜອງ. ຮອດຍາມນັ້ນ ອ້ອຍແລະໝູ່ເພື່ອນ ເຄີຍ
ໄດ້ຂີ່ເຮືອຫຼືແພ ໄປເກັບຜັກຕົບ ດອກບົວ ແລະໝາກ
ບົວຢູ່ເລື້ອຍໆ.

ຕາມແຄມໜອງ ລຽບຕາມຝັ່ງດ້ານໃຕ້ ມີປ່າຊາຍ
ວາມ ແລະຂີ້ສົບມີໜາແໜ້ນ ຈຶ່ງຍ່າງໄປກໍ່ບໍ່ຫຼົ່ມ ຕາມ
ປ່າຊາຍວາມ ມີປ່າຜັກບາງອື້ວແລະປ່າຜັກກູດ. ຢູ່ປາຍບາ
ຂອງໃນມັນ ຊາວບ້ານຂຸດຫຼຸມປາ ລຽນກັນເປັນແຖວ
ໃສ່ບ່ອນນ້ຳຕົ້ນ ຕາມຊາຍໜອງ.

ເວລາຝົນຕົກ ນ້ຳທົ່ງນາແລະນ້ຳປ່າດົງ ກໍໄຫຼລົງໃສ່
ໃສ່ບຶງ. ເວລານ້ຳບຶງມາກຂຶ້ນຫຼາຍ ນ້ຳໃນໜອງໄຫຼອອກ
ຕາມຮອງບໍ່ທັນ ຈຶ່ງພາໃຫ້ເກີດນ້ຳຖ້ວມຢູ່ເລື້ອຍ ດັ່ງນັ້ນ
ໃນຣະດູແລ້ງ ຊາວນາທັງຫຼາຍ ຈຶ່ງພາກັນລອງຮອງ
ແຕ່ບຶງບ້ານເຮົາ ລົງໃສ່ນ້ຳເຊ ເພື່ອໃຫ້ໄຫຼຕົກໃສ່ແມ່ນ້ຳ
ຂອງ. ນ້ຳຂອງເປັນແມ່ນ້ຳໃຫຍ່ ແລະກວ້າງທີ່ສຸດ ຢູ່
ໃນປະເທດເຮົາ ແມ່ນ້ຳຂອງນີ້ ໄຫຼລົງມາແຕ່ປະເທດຈີນ
ຜ່ານປະເທດເຮົາ ແຕ່ເໜືອຕລອດໃຕ້ ໄປຕົກໃສ່ທະເລຈີນ

ຕາມແຄມແມ່ນ້ຳຂອງ ມີໝູ່ບ້ານດົກໜາ ແລະ



ມີປ່າໄມ້ອັນສວຍງາມ ນ້ຳຂອງໃຫ້ຄວາມສະດວກ ໃນ
ການໄປມາຫາກິນ.

ບ່ອນບຶງໜອງແລະລຳນ້ຳ ບ້ານເຮົາຈຶ່ງອຸດົມສົມບູນ
ຈຶ່ງພາໃຫ້ຊາວບ້ານແກ່ອນ ແລະຮັກແພງບ້ານຂອງຕົນ
ປ່າງໜຽວແໜ້ນ.

## ຄຳອະທິບາຍ:

ນ້ຳແກ່ງ = ນ້ຳທີ່ຂຶ້ນຖ້ວມ.
ດົກໜາ = ຫຼາຍ.
ຂີ້ສົບ = ຫຍ້າເກີດເປັນແຜ່ນລອຍຢູ່ຕາມ ນ້ຳໜອງ.
ປ່າຊາຍວາມ = ປ່າຕົ້ນໄມ້ນ້ອຍຊະນິດນຶ່ງເກີດ ຢູ່ຕາມບຶງ.

## ຂໍ້ໃຫຍ່ໃຈຄວາມ:

໑. ສາຍເຫດທີ່ພາໃຫ້ມາຕັ້ງບ້ານເຮືອນ.

໒. ສະພາບຂອງບຶງໜອງແລະລຳນ້ຳຢູ່ບ້ານເຮົ
໓. ຄວາມຜູກພັນກັບບ້ານ.

## ຄຳຖາມ:

ບ້ານເຈົ້າມີບຶງບໍ?
ຢູ່ໃນບຶງນັ້ນມີຫັຍງແດ່?
ນ້ຳເຄີຍຖ້ວມບ້ານເຈົ້າບໍ?
ເພື່ອບໍ່ປາກໃຫ້ນ້ຳຖ້ວມນາຊາວນາເຮັດຢ່າງໃດ?
ຕາມຝັ່ງແມ່ນ້ຳຂອງເປັນຫັຍງ ຈຶ່ງມີບ້ານຄົນຫຼາ
ແທ້?
ເປັນຫັຍງເຈົ້າຈຶ່ງຮັກບ້ານຂອງເຈົ້າ?

## ຫັດແຕ່ງເຣື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້:





## ໔໖. ການຫາປາຂອງຊາວບ້ານ.

ຊາວບ້ານເຮົາ ຫາປາຢູ່ຕາມໜອງ ຫ້ວຍຮ່ອງຄອງບຶງ. ລາງເທື່ອ ເພິ່ນກໍໄປຫາຢູ່ຕາມລຳນ້ຳ ທີ່ຢູ່ໃກ້ຄຽງບ້ານຂອງເຮົາ.

ເວລານ້ຳລົ້ນຝັ່ງ ເພິ່ນໃສ່ເບັດປັກ ແລະເບັດຜຽກຢູ່ຕາມໜອງ ແລະຕາມໄຮ່ນາ ເວລານ້ຳແຫ້ງລົງ ເພິ່ນເຮັດຕ້ອນ ໃສ່ລອບ ແລະໄຊຢູ່ຕາມຫ້ວຍຮ່ອງ ເວລານ້ຳຂ້ອນວັງ ເພິ່ນຫາປາດ້ວຍການຕີເຜືອກ ສັກສຸ່ມ ແກ່

ດາງອວນ ກວາດນອງ ຫວ່ານແຫ ຊ້ອນເຂີງ ແລະຕຶກກະຕຸ້ງຕາມລຳນ້ຳ ເພິ່ນຕຶກໄດ່ງ ຕຶກບານ ໃສ່ຕຸ້ມ ໃສ່ຈັ່ນ ໄຫຼເຕົ້າ ໃສ່ເບັດພຽກ ກວາດນອງ ແລະຕຶກກະຕຸ້ງໃຫ່ງ.

ການຫາປາຢູ່ຕາມໜອງ ແລະຫ້ວຍຮ່ອງເພິ່ນໄດ້ ປາຄໍ່ ແລະປາດຸກ ປາເຂັງ ປາກະເດີດ ປາເຊືອມ ປາຂາວ ປາກະແຍງ ປາໜັດ ແລະປາຊີວ.

ຢູ່ຕາມລຳນ້ຳໃຫ່ງ ເພິ່ນໄດ້ປາຄ້າວ ປາເຄິງ ປາຄູນ ປາແຂ້ ປາຫວ່າ ປາເພາະ ປາປາງ ຯລຯ. ຢູ່ຕາມນ້ຳຂອງ ເພິ່ນຕຶກບານໄດ້ປາເລີມແລະປາບຶກ ເຊິ່ງເປັນປາຊະນິດໃຫ່ງກວ່າໝູ່.

ປາທີ່ຫາມາໄດ້ນັ້ນ ສ່ວນຫຼາຍ ເອົາໄວ້ລ້ຽງຄອບຄົວ ນອກນັ້ນ ເພິ່ນເອົາເຮັດປາແດກ ປາເຄັມ ປາສົ້ມ ຫຼືເຮັດປາປ້າງ ປາຕາກໄວ້ກິນດົນຫຼືຂາຍ ສ່ວນປາເປັນນັ້ນ ເພິ່ນມັກຂາຍຕາມນ້ຳໜັກ ເປັນຮ້ອຍ ເປັນຊາງ ເປັນໝື່ນ ຫຼືເປັນກິໂລ.

ປາເປັນອາຫານອັນສຳຄັນຂອງເຮົາ ເຮົາຄວນລ້ຽງ ແລະຮັກສາປາຢູ່ໃນໜອງ ແລະຢູ່ໃນສະ ໃຫ້ມີຫຼາຍຂຶ້ນ



ສເນີ. ເຮົາຄວນພຍາຍາມຫຼີກເວັ້ນ ການຈັບປາ ໃນຣະດູມັນໄຂ່ ແລະເວັ້ນຈາກການເຮັດຕ້ອນ ຫຼືໃຊ້ເຄື່ອງຫາປາ ທີ່ຜິດກົດລະບຽບທາງອາຊການ ໄດ້ຫ້າມໄວ້ນັ້ນທຸກຢ່າງ.

## ຄຳອະທິບາຍ:

ປາສົດ = ປາດິບ ປາໃໝ່ ປາບໍ່ເນົ່າ.
ເຜືອກ = ໄມ້ໄຜ່ຕົວຖັກຕິດກັນໃຫ້ເປັນແຜ່ນ ສຳລັບກັນປາບໍ່ໃຫ້ໄປມາໄດ້.
ຕີເຜືອກ = ການເຜືອກໄວ້ແລ້ວຕີນ້ຳຫຸ້ມນ້ຳເພື່ອ ໄລ່ປາໃສ່.
ດາງອວນ = ເຄື່ອງມືຫາປາຢ່າງນຶ່ງສານເປັນ ຕາຄືແຫ.
ປາເພາະ = ປາໜັງຊະນິດນຶ່ງ.
ປາບຶກ = ປາໜັງຂນາດໃຫ່ຍທີ່ສຸດຢູ່ໃນນ້ຳ ຂອງຮູບຮ່າງຄືປາຊວຍ.
ປາເລີມ = ປາໜັງຊະນິດໃຫ່ຍແຕ່ນ້ອຍກວ່າ ປາບຶກ.

## ຂໍ້ໃຫຍ່ໃຈຄວາມ:

໑. ວິທີຫາປາຂອງຊາວບ້ານເຮົາ.
໒. ປໂຍດຂອງປາທີ່ຫາມາໄດ້.
໓. ການຫວງແຫນປາບໍ່ໃຫ້ດັບ.

## ຄຳຖາມ:

ຊາວບ້ານເຈົ້າຫາປາຢູ່ບ່ອນໃດແລະດ້ວຍວິທີໃດ?
ຢູ່ຕາມໜອງ ຕາມລຳນ້ຳແລະນ້ຳຂອງມີປາ
ຫັຽງແດ່?
ປາສຳລັບໄວ້ເຮັດຫັຽງ?
ເພິ່ນເອົາປາມາເຮັດຫັຽງກິນແດ່?
ເພື່ອບໍ່ໃຫ້ປາດັບເຮົາຄວນເຮັດຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້:





# ໔໗. ປ່າດົງ ພູຜາ ລຳນ້ຳ ໃນປະເທດເຮົາ ແລະປະເທດໃກ້ຄຽງ

ປະເທດເຮົາ ແລະປະເທດໃກ້ຄຽງ ເຊັ່ນໄທ ຂເມນ ວຽດນາມ ຈີນ ແລະພະມ້າ ເປັນປະເທດ ທີ່ມີອາກາດຮ້ອນແລະຊຸ່ມອື່ນ ເພາະສະນັ້ນ ປະເທດເຫຼົ່ານີ້ ຈຶ່ງມີປ່າໄມ້ຢ່າງຫຼວງຫຼາຍ.

ປະເທດຈີນພາກໃຕ້ ທີ່ຕິດຕໍ່ກັບ ປະເທດພະມ້າ ປະເທດວຽດນາມ ແລະປະເທດເຮົານັ້ນ ມີສາຍພູຊັບ

ຊ້ອນ ຍາວລຽງໄປຕາມລຳນ້ຳຕ່າງ ໆ ສ່ວນແຄບດິນປັ່ງໃໝ່ ທີ່ຢູ່ຕາມປາກແມ່ນ້ຳໃຫຍ່ນັ້ນ ບໍ່ມີພູຫຼາຍ.

ມີຫ້ວຍຮ່ອງແລະລຳນ້ຳ ເປັນຈຳນວນຫຼວງຫຼາຍທີ່ໄຫຼອອກຈາກພູຫຼາກແຫ່ງ ແລ້ວໄຫຼໄປໂຮມກັນ ເປັນໝວດເປັນໝູ່ ຕົກໃສ່ທະເລຈີນ. ເມື່ອຣະດູຝົນ ລຳນ້ຳທັງຫຼາຍ ກໍ່ນາກຂຶ້ນ ລາງເທື່ອກໍ່ລົ້ນຝັ່ງ ຈົນພາໃຫ້ເກີດນ້ຳຖ້ວມທົ່ງ ແລະບ້ານເຮືອນ.

ຖ້າເຮົາຈະປຽບທຽບ ປະເທດໃກ້ຄຽງ ແລະປະເທດເຮົາ ໃສ່ກັບປະເທດອື່ນໆ ທີ່ໜາວແລະຮ້ອນຫຼາຍນັ້ນເຫັນວ່າມີຄວາມແຕກຕ່າງກັນຢູ່ບໍ່ໜ້ອຍ ຢູ່ໃນປະເທດຮ້ອນຕາມແຄບທະເລຊາຍ ບໍ່ມັກມີພູ ແລະຂາດເຂີນນ້ຳ ມີແຕ່ຕົ້ນຕະບອງເພັດ ເກີດບາງເລັກນ້ອຍ ສ່ວນປະເທດທີ່ໜາວຫຼາຍ ໃນຄຸ້ມນ້ຳກ້ານ ຕົ້ນໄມ້ໃຫຍ່ບໍ່ມັກເກີດແຕ່ຫາກມີຕົ້ນໄມ້ເຕັ້ຍ ແລະໄຄນ້ຳ. ພູຜາປ່າດົງ ແລະລຳນ້ຳ ເປັນຊັບທັມມະຊາດ ທີ່ເຮົາໄດ້ເພິ່ງພາອາສັຍໃນການທຳມາຫາກິນ.



## ຄຳອະທິບາຍ:

ເຕັ້ຍ = ຕ່ຳ.
ຊັບຊ້ອນ = ຊ້ອນກັນ.
ນ້ຳສາຂາ = ນ້ຳນ້ອຍທີ່ໄຫຼໄປຕົກໃສ່ນ້ຳໃຫຍ່.

## ຂໍ້ໃຫຍ່ໃຈຄວາມ :

໑. ປະເທດເພື່ອນບ້ານຂອງປະເທດເຮົາ.
໒. ຄວາມແຕກຕ່າງຂອງປະເທດໃກ້ຄຽງ ແລະ ປະເທດເຮົາ ກັບປະເທດທີ່ໜາວຫຼາຍ ແລະຮ້ອນຫຼາຍ.
໓. ຜົນປໂຍດທີ່ມາຈາກຊັບທັມມະຊາດ.

## ຄຳຖາມ :

ແມ່ນປະເທດໃດແດ່ທີ່ເປັນປະເທດເພື່ອນບ້ານຂອງເຮົາ?

ດ້ວຍເຫດໃດປະເທດໃກ້ຄຽງ ແລະປະເທດເຮົາ ຈຶ່ງມີຕົ້ນໄມ້ຫຼາຍ?

ເຂດແດນຂອງປະເທດຈີນພາກໃຕ້ ທີ່ຕິດຕໍ່ກັບປະເທດລາວ ພະມ້າ ແລະວຽດນາມ ມີພູຫຼາຍບໍ?

ແມ່ນ້ຳທັງຫຼາຍທີ່ຢູ່ປະເທດເຮົາ ແລະປະເທດໃກ້ຄຽງໄຫຼໄປໂຮມຢູ່ໃສ?

ພູຜາປ່າໄມ້ຂອງປະເທດໜາວ ແລະປະເທດຮ້ອນ ແຕກຕ່າງກັບປະເທດເຮົາຢ່າງໃດ?

ມີປະເທດໃດແດ່ທີ່ຢູ່ຕາມແຄມແມ່ນ້ຳຂອງ?

ສາຂາສຳຄັນຂອງແມ່ນ້ຳຂອງທີ່ຢູ່ໃນປະເທດລາວ ມີນ້ຳຫຍັງແດ່?

ຖ້າບໍ່ມີພູຜາປ່າໄມ້ ແລະລຳນ້ຳຄົນເຮົາຈະເປັນຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້:





# ໔໗. ດອກບົວ

ປະທຸມຊາດເຊື້ອ　　ອາສັຍເກີດກັບດິນ
ນ້ຳໜອງພົ່ງພຽງໃດ　　ດອກບົວກໍ່ຜຸດພົ້ນ
ຂ້ອຍກໍ່ພາຍເຮືອຈ້ວມ　　ຈອບໄປເກັບດອກ
ໃບໜອງດູມ່ວນແມ້ງ　　ປະສົງຊ້ອຍຊື່ນໃຈ.
ໂອ້! ໂອ! ດອກບົວເຮີຍ　　ເຈົ້າຢູ່ນ້ຳຮາກທ່ອງເຖິງດິນ
ເອົາດິນເປັນອາຫານ　　ຊູ່ວັນບໍ່ມີມົ້ວ
ສັບໃດເຈົ້າ　　ຈຶ່ງຫອມຫຼາຍເຫຼືອມາກ

ຫົວຮາກໃບອ່ອນເຈົ້າ ໝົດສັ່ງສູ່ອັນ.
ກັບທັງໝາກຂອງເຈົ້າ ອ່ອນແກ່ກໍກິນໝົດ
ເຈົ້າຫາກເກີດແຕ່ຕົມ ບ່ອນໜອງເໝັນຮ້າຍ
ແຕ່ວ່າຍັງແຊບຊ້ອຍ ເຫຼືອລົ້ນເລີດປະມານແທ້ບໍ່ມະຫາແກ້ວ.

## ຄຳອະທິບາຍ:

ປະທຸມຊາດ = ດອກບົວ
ບໍ່ມີມື້ = ສູ່ຍາມ.
ທ່ອງເຖິງ = ຢັ້ງເຖິງ.
ເລີດປະມານ = ຍິ່ງກວ່າກຳນົດ.

## ຂໍ້ໃຫຍ່ໃຈຄວາມ:

ເລື່ອງນີ້ປຽບທຽບຕົ້ນດອກບົວໃສ່ກັບຮູ້ຜູ້ດີມີສິລ



ທັມ ທີ່ປູ່ແກມພວກຫຶກໜາບໍ່ມັກສ້າງແປງ ເພິ່ນກໍຍັງມີໃຈທ່ຽງທັມຖືຄວາມດີຕາມເດີມ.

## ຄຳຖາມ:

ດອກບົວປູ່ປະເທດເຮົາມີຈັກປ່າງ?
ດອກບົວມີປະໂຍດປ່າງໃດ?
ເພິ່ນປຽບທຽບດອກບົວໃສ່ກັບຄົນປ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມປູ່ເທິງນີ້ໝົດທຸກຂໍ້:



## ໔໗. ວິຊາອາຊີບເພີ່ມເຕີມໃນຄອບຄົວ

ຊາວບ້ານເຮົາ ຍັງມີວິຊາຊ່າງອື່ນໆອີກ ຢູ່ໃນຄອບ
ຄົວ ພວກເຖົ້າແກ່ໜຸ່ມນ້ອຍ ທັງຊາຍແລະຍິງ ກໍພ້ອມ
ກັນເຮັດການໜ້າວຽກ ທີ່ມີຢູ່ໃນຄອບຄົວ.

ແມ່ເຖົ້າຂ້ອຍ ເຂັນຝ້າຍ ລັງໄໝ ແລ້ວຍ້ອມດ້ວ
ນ້ຳຄາມ ນ້ຳເຂ ແລະນ້ຳຍ້ອມອື່ນໆ ແມ່ຂ້ອຍເຮັດຫູກ
ຝ້າຍຫຼືຫູກໄໝ ເພື່ອຕ່ຳແພ ຜ້ານຸ່ງແລະສິ້ນ ທັງສ



ໃຫ້ເອື້ອຍຂ້ອຍ ເຮັດຫູກນຳດ້ວຍ.

ພໍ່ແລະພໍ່ເຖົ້າຂ້ອຍ ສັກປໍ່ ສັບເຊືອກຫຼືເລັບປ່ານ
ເພິ່ນສານກະດົ້ງ ເຂີງ ພາເຂົ້າ ຕິບເຂົ້າ ແລະສິ່ງອື່ນໆ
ອີກຫຼາຍຢ່າງ ເພິ່ນຍັງໄດ້ໄພຫຍ້າ ເຮັດຄາດ ໄຖ ແລະ
ໂຕະຕັ່ງນຳອີກ ສ່ວນອ້າຍແລະຂ້ອຍເອງ ກໍໄດ້ຊ່ອຍເພິ່ນ
ເຮັດວຽກເຫຼົ່ານັ້ນ.

ສິ່ງຂອງທີ່ພໍ່ແມ່ຂ້ອຍ ເຮັດເຫຼືອໃຊ້ນັ້ນ ໄດ້ຂາຍ
ໝົດທຸກແນວ ບາງທີ່ບໍ່ຈຳເປັນ ຈະເອົາໄປຂາຍຕລາດ
ເຮົາຈະຂາຍຢູ່ບ້ານ ຢູ່ເຮືອນກໍໄດ້ ສິ່ງຂອງເຫຼົ່ານັ້ນ ເຮັດ
ນຳກໍບໍ່ທັນ ເພາະວ່າມີພວກພໍ່ຄ້າແມ່ຄ້າ ທ່ຽວມາຊື້ຢູ່
ບໍ່ຂາດ. ລາງຄອບຄົວ ຍັງໄດ້ທໍ່ກະບອງ ຫຼືປັ້ນໝໍ້ແລະ
ໄຫຂາຍ.

ເຮົາຄວນພະຍາຍາມດັດແປງ ສີໄມ້ລາຍມືຂອງເຮົາ
ເພື່ອໃຫ້ສິ່ງຂອງ ທີ່ເຮົາກຳລັງເຮັດ ຫຼື ສິ່ງທີ່ຄິດເຮັດ
ຂຶ້ນໃໝ່ນັ້ນ ໃຫ້ໄດ້ຂາຍໃນລາຄາດີ.

## ຄຳອະທິບາຍ:

ວິຊາອາຊີບ : ວິຊາຫາກິນ.
ເລັ່ນ : ບິດເຂົ້າໃສ່ກັນໃຫ້ເປັນເສັ້ນ.
ສີໄມ້ລາຍມື : ຄວາມສາມາດທີ່ໄດ້ມາຈາກ ການເຮັດດ້ວຍມື.
ສັບເຊືອກ : ຟັ້ນເຊືອກ.

## ຂໍ້ໃຫຍ່ໃຈຄວາມ:

໑. ວິຊາອາຊີບຕ່າງໆຂອງຊາວບ້ານ.
໒. ປະໂຫຍດທີ່ໄດ້ມາຈາກວຽກການເພີ້ມເຕີມຂອງ ຊາວບ້ານ.
໓. ຄວາມຕັກເຕືອນເພື່ອດັດແປງສີໄມ້ລາຍມື ໃຫ້ດີຍິ່ງຂຶ້ນ.



## ຄຳຖາມ:

ນອກຈາກການເຮັດສວນແລະນາຊາວບ້ານເຈົ້າ ເຮັດຫຍັງອີກແດ່?
ສິ່ງທີ່ໄດ້ມາຈາກວຽກເພີ້ມເຕີມຂອງຊາວບ້ານມີ ຫຍັງແດ່?
ຄວນເຮັດປ່າງໃດສິ່ງຂອງທີ່ກຳລັງເຮັດນັ້ນຈຶ່ງຈະ ໄດ້ຂາຍລາຄາດີກວ່າເກົ່າ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນັ້ນໝົດທຸກຂໍ້:



## ໕໐ ວິຊາຊ່າງສີມືຢູ່ໃນບ້ານເຮົາ.

ຊາວບ້ານເຮົາ ມີຫຼາຍຄົນຫາກິນ ດ້ວຍວິຊາຊ່າງສີມື ທັງແລ້ງແລະຝົນ ພວກຊ່າງເຫຼົ່ານີ້ ມີຈຳນວນພໍດີ ກັບຖານະບ້ານຂອງເຮົາ. ພວກເຂົາເຈົ້າ ເປັນຊ່າງຕີເຫຼັກ, ຊ່າງໄມ້ ຊ່າງຕີເງິນ ຕີຄຳ ຊ່າງປັ້ນດິນ ຊ່າງຫຍິບເຄື່ອງ ແລະຊ່າງຕັດຜົມ.

ຊ່າງຕີເຫຼັກ ຕັ້ງເຕົາຢູ່ກັບເຮືອນ ເຂົາເຈົ້າຕີພ້າ ມີດ ຫຼົ້ວ ສຽມ ຂວານ ກ່ຽວ ແວກ......ຂົາ



ເຈົ້າສາມາດສ້ອມແປງ ເຄື່ອງໃຊ້ສອຍທີ່ຫັກເພ.

ພວກຊ່າງໄມ້ ເຮັດໂຕະ ຕັ່ງ ຕູ້ ຕຽງ ປະຕູ ປ່ອງຢ້ຽມ ແລະກວຽນ. ຢູ່ແຄມຖະໜົນທີ່ຜ່ານບ້ານເຮົາ ມີຊ່າງຕີເງິນ ຕີໃອ ຕີຂັນ ແລະເຮັດເຄື່ອງອື່ນໆ ອີກຫຼາຍຢ່າງ. ຊ່າງຕີຄຳ ເຮັດເຄື່ອງເອ້ດີ ສາຍສ້ອຍ ຕຸ້ມຫູ ແລະແຫວນ.

ພວກຊ່າງປັ້ນດິນ ຕັ້ງເຕົາຢູ່ແຄມໜອງຫົວບ້ານ ເຂົາເຈົ້າປັ້ນດິນຈີ່ແລະດິນຂໍ່ ພວກນຶ່ງປັ້ນໝໍ້ແລະໄຫ ຢູ່ໃນບ້ານ ຍັງມີຊ່າງຫຍິບເຄື່ອງ ແລະຕັດຜົມອີກ.

ການຊ່າງສີມື ເປັນວິຊາອັນມີຄ່າ ເໝືອນອາຊີບອື່ນໆ ທີ່ເຮົາຄວນນິຍົມຍ້ອງ.

### ຄຳອະທິບາຍ:

ຊ່າງສີມື = ວິຊາເຮັດດ້ວຍມື.

ສາມາດ = ເຮັດໄດ້.

## ຂໍ້ໃຫຍ່ໃຈຄວາມ:

໑. ຊ່າງສີມືປະເພດຕ່າງ ໆ ຢູ່ໃນບ້ານເຮົາ.
໒. ຜົນທີ່ໄດ້ມາຈາກພວກຊ່າງ.
໓. ຄຸນຄ່າຂອງຊ່າງສີມື

## ຄຳຖາມ:

ຢູ່ໃນບ້ານເຈົ້າມີຊ່າງສີມືແບບໃດແດ່?
ເຂົາເຈົ້າເຮັດສິ່ງໃດແດ່?
ເວລາໃຫຍ່ມາເຈົ້າຈະມັກເປັນຊ່າງຫຍັງ?
ເປັນຫຍັງເຈົ້າຈຶ່ງມັກ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນັ້ນໝົດທຸກຂໍ້:





# ໕໑. ເຕົາເຜົາຖ່ານ

ໃນບ້ານເຮົາມີບາງຄົນ ໄດ້ຕັ້ງເຕົາເຜົາຖ່ານ ຢູ່ຕາມແຄມດົງນ່ຽງບ້ານການເຜົາຖ່ານນີ້ ເພິ່ນໄດ້ຕັ້ງຕົ້ນເຮັດມາໄດ້ສິບກວ່າປີແລ້ວ ທຳອິດ ບໍ່ສູ້ມີຄົນສົນໃຈ ເຮັດປານໃດ ມາບັດນີ້ ຈຳນວນເຕົາຖ່ານ ໄດ້ຕື່ມຂຶ້ນຫຼາຍກວ່າເກົ່າ.

ແຕ່ກ່ອນຢູ່ບ້ານເຮົາ ບໍ່ມີຜູ້ໃດເຮັດເຕົາເຜົາຖ່ານ ເພາະວ່າເຂົາເຈົ້າ ບໍ່ຮູ້ຈັກວິທີເຮັດແລະຜູ້ຕ້ອງການໃຊ້

ຖານ ກໍ່ບໍ່ມີຫຼາຍ ເມື່ອຕໍ່ມາ ມີຫຼາຍຄົນໄດ້ໄປແອບນຳພວກເຜົາຖ່ານ ຈຶ່ງຮູ້ຈັກເຮັດ.

ໃນຂັ້ນຕົ້ນ ເຂົາເຈົ້າພາກັນຂຸດ ກ້ອງໃພບຈູມປວກເພື່ອເຮັດເຕົາ ການເຮັດເຕົາແບບນີ້ ຫາບ່ອນຍາກ ທັງເປັນອັນຕະລາຍ ສະນັ້ນ ຈຶ່ງໄດ້ປ່ຽນແປງ ເຮັດເຕົາກໍ່ດ້ວຍດິນໜຽວ ເຊິ່ງເຫັນວ່າເປັນ ການສະດວກດີກວ່າກັນທຸກມື້ນີ້ ຖ່ານເຜົາໄດ້ໃນທຸກແຫ່ງ ມີທີ່ໃດກໍ່ໄດ້ຂາຍໝົດ ຈົນເຜົານຳບໍ່ທັນ ຖ່ານນີ້ຈະຂາຍຍົກ ຢູ່ກັບທີ່ກໍ່ໄດ້ເພາະວ່າ ມີພໍ່ຄ້າມາຮັບຊື້ ເອົາຢູ່ສເມີ ແຕ່ເຮົາຕ້ອງຂາຍລາຄາຜ່ອນ ຍ້ອນບໍ່ໄດ້ຄິດຄ່າຂົນສົ່ງ ແລະຄ່າອື່ນໆ.

ພວກເຈົ້າຂອງຖ່ານ ມັກເອົາຖ່ານໄປຂາຍ ດ້ວຍຕົນເອງ ເຂົາເຈົ້າຍັດຖ່ານໃສ່ຖົງ ຫຼືກະທໍ່າ ແລ້ວເອົາກວຽນ ຫຼືຣົດແກ່ໄປທ່ຽວຂາຍຕາມຮ້ານຄ້າໃນເມືອງນອກຈາກນີ້ ພໍ່ຄ້າຜູ້ໃດຕ້ອງການຈະຊື້ຖ່ານ ເປັນປະຈຳຫຼືຊື້ຍ່ອຍ ເຂົາເຈົ້າກໍ່ໝັ່ນ ເອົາມາຂາຍໃຫ້.

ການເຜົາຖ່ານ ເປັນອາຊີບດີຢ່າງນຶ່ງ ທີ່ຈະພາໃຫ້ເຮົາ ມີລາຍໄດ້ຢ່າງງົດງາມ.



## ຄຳອະທິບາຍ:

ບໍ່ສົນໃຈ = ບໍ່ເອົາໃຈໃສ່.

ຂາຍຍົກ = ຂາຍໝົດບາດດຽວ.

ລາຄາຜ່ອນ = ລາຄາຖືກ.

ຊື້ຍ່ອຍ = ຊື້ເທື່ອລະໜ້ອຍ.

## ຂໍ້ໃຫຍ່ໃຈຄວາມ:

໑. ວິທີເຜົາຖ່ານຂອງຊາວບ້ານເຮົາ.

໒. ລາຍໄດ້ມາຈາກຖ່ານ.

໓. ຄຸນຄ່າຂອງອາຊີບເຜົາຖ່ານ.

## ຄຳຖາມ :

ໃນບ້ານເຈົ້າມີຄົນເຜົາຖ່ານບໍ່!
ເຕົາເຜົາຖ່ານທີ່ເຈົ້າໄດ້ເຫັນເປັນຢ່າງໃດແດ່!
ເພື່ອເອົາຖ່ານໄປຂາຍເພິ່ນເຮັດຢ່າງໃດ!
ອາຊີບເຜົາຖ່ານດີບໍ່!

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນັ້ນໝົດທຸກຂໍ້





# ໕໖. ການເອົາໄມ້ໄຜ່ມາໃຊ້ໃຫ້ເປັນປໂຍດ

ໄມ້ໄຜ່ມີຫຼາຍແນວ ແລະແຜ່ຫຼາຍ ຢູ່ໃນປະເທດເຮົາ ແຕ່ລະແນວ ເກີດຢູ່ບ່ອນຕ່າງໆ ກັນ ຢູ່ຕາມບ້ານເພິ່ນປູກໄມ້ສ້າງໄພ ໄມ້ຮວກ ໄມ້ບົງຫວານ ໄມ້ສ້າງຄຳ ແລະໄມ້ໄຜ່ບ້ານ. ຢູ່ແຄມນ້ຳ ມີໄມ້ໄຜ່ປ່າ ແລະໄມ້ກະຊະ. ຢູ່ຕາມຖິ່ນພູແລະດົງມີໄມ້ເຮ້ຍ ໄມ້ພາງ ໄມ້ຫົກ ໄມ້ຊາງ ໄມ້ບົງ ໄມ້ໄລ່ ໄມ້ຊອດ ໄມ້ເຂົ້າຫຼາມ ໄມ້ແຮ້.

ໄມ້ໄຜ່ທຸກຊະນິດ ໃຊ້ການໄດ້ຫຼາຍຢ່າງແມ່ນຈະເອົາເຮັດເຮືອນຢ້າວ ຕູບ ຮົ້ວ ຮາວ ແລະຖຽງໄຮ່ຖຽງນາກໍ່ໄດ້ ເພິ່ນຍັງໃຊ້ໄມ້ໄຜ່ ເຮັດຟາກປູ ຝາແອ້ມ ແຕະ ແລະຝ້ານຸງເຮືອນອີກ.

ໂດຍມາກສະເພາະ ໄມ້ເຮັ້ຽໄມ້ຊາງ ເພິ່ນໃຊ້ເຮັດແພ ບັນທຸກເຄື່ອງຂອງ ລ່ອງໄປຕາມແມ່ນ້ຳ ບາງທີເພິ່ນກໍໃຊ້ໄມ້ໄຜ່ ເຮັດຂົວຂ້າມຫ້ວຍຫຼືເຊ ເພື່ອໃຫ້ລົດກວຽນແລະຄົນ ທຽວໄປມາໄດ້ສະດວກ.

ຕາມບ້ານເຮືອນ ເພິ່ນຍັງເອົາໄມ້ໄຜ່ ເຮັດເຄື່ອງໃຊ້ຫຼາຍຢ່າງ ເຊັ່ນກະບຸງ ກະຕ່າ ຫວດ ດັ້ງ ຈ່ ໝວກກຸບ ຄຸ ປ່ອມ ແລະເຮັດເຄື່ອງຫາປາ ເຊັ່ນລອບ ໄຊ ເອີ້ງ ສຸ່ມ ດຸ້ມ ໂທງ ຈັ່ນ ເຄື່ອງເຫຼົ່ານີ້ລ້ວນແຕ່ ເຮັດດ້ວຍໄມ້ໄຜ່ທັງນັ້ນ.

ນອກຈາກນີ້ ໄມ້ໄຜ່ຍັງໃຊ້ເຮັດກະດາດ ແລະເຄື່ອງເອ້ເຮືອນອັນສວຍງາມ ແລະທັງມີລາຄາແພງອີກດ້ວຍ.

ເຮົາຄວນປັບປຸງ ການເຮັດເຄື່ອງໃຊ້ ດ້ວຍໄມ້ໄຜ່ໃຫ້ດີຂຶ້ນ ແລະບໍ່ຄວນທຳລາຍໄມ້ໄຜ່ ຢ່າງໄຮ້ປໂຍດ.



## ຄຳອະທິບາຍ:

ແຜ່ຫຼາຍ = ປາຍປຸ່ທຸກແຫ່ງ.
ແພ = ໄມ້ດາດຕິດກັນໃຊ້ຂີ່ຕ່າງເຮືອ.
ບັນທຸກ = ໃສ່ລົງ.
ໄຮ້ປໂຍດ = ບໍ່ເປັນປໂຍດ.

## ຂໍ້ໃຫຍ່ໃຈຄວາມ :

໑. ເຊື້ອໄມ້ໄຜ່ແລະບ່ອນມັນມັກເກີດ,
໒. ສິ່ງຂອງທີ່ເຮົາເຮັດດ້ວຍໄມ້ໄຜ່.
໓. ການປັບປຸງເຄື່ອງທີ່ເຮັດດ້ວຍໄມ້ໄຜ່.

## ຄຳຖາມ :

ໄມ້ໄຜ່ມີຈັກແນວແລະມັກເກີດຢູ່ບ່ອນໃດ?
ແຕ່ໃດມາຊາວບ້ານເຮົາໃຊ້ໄມ້ໄຜ່ເຮັດຫັຍງແດ່?
ສມັຍນີ້ເພິ່ນເອົາໄມ້ໄຜ່ເຮັດເຄື່ອງເອ້ເຮືອນຢ່າງໃດແດ່?
ເຮົາບໍ່ຄວນທຳລາຍໄມ້ໄຜ່ຢ່າງໄຮ້ປະໂຍດນັ້ນຄືເຮັດຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້:





# ໕໗. ການສືບຕໍ່ວິຊາຊ່າງສືບເດີມ

ພວກຊ່າງທັງຫຼາຍ ທີ່ຫາກິນຕາມບ້ານເຮົາ ທຸກມື້ນີ້ ກໍແມ່ນພວກທີ່ເຄີຍໄດ້ເຮັດ ໄດ້ທຳ ນຳພໍ່ແມ່ພີ່ນ້ອງຜູ້ທີ່ເປັນຊ່າງ ມາແຕ່ດັ້ງເດີມແລ້ວ.

ເມື່ອເຮົາເຂົ້າໄປໃນເຕົາ ຫຼືຕູບຂອງຊ່າງຕີເຫຼັກຕີຄຳ ຊ່າງໄມ້ ຫຼືຊ່າງອື່ນໆ ເຮົາຈະເຫັນພວກຊາຍໜຸ່ມ ບ່ອນລະສາມສີ່ຄົນ ເຮັດວຽກຊ່ອຍພວກຊ່າງ ຊາຍ

ໜຸ່ມທີ່ໄດ້ສມັກ ເຂົ້າມາເຝິກຫັດການຊ່າງນີ້ ສ່ວນຫຼາຍລ້ວນແຕ່ເປັນລູກຫຼານ ຂອງນາຍຊ່າງ.

ຫຼາຍປີຕໍ່ມາ ຊາຍໜຸ່ມພວກນີ້ ກໍຊໍານານເຮັດຂອງທີ່ຕົນເຄີຍເຮັດມາແລ້ວ ທັງຮູ້ປະດິດ ເຄື່ອງຂອງຕ່າງໆ ຕາມຄໍາສັ່ງຂອງຜູ້ຕ້ອງການ ເມື່ອຮູ້ສຶກວ່າ ຕົນເອງມີຄວາມສາມາດ ຈະທໍາມາຫາກິນໄດ້ແລ້ວ ຕ່າງຄົນກໍພາກັນອອກໄປ ຕັ້ງບ່ອນທໍາງານ ເປັນຂອງສ່ວນຕົວ ລາງຄົນກໍສືບຕໍ່ວຽກການ ຂອງພໍ່ ຂອງລຸງ ຫຼືຂອງອາວທີ່ປະໄວ້ໃຫ້

ຖ້າວ່າຊາຍໜຸ່ມເຫຼົ່ານີ້ ຫາກໄດ້ໄປເຝິກຫັດ ໃນໂຮງຮຽນວິຊາຊ່າງ ຢູ່ເມືອງໃຫຍ່ ທັງມີເຄື່ອງມື ອັນທັນສມັຍ ເຫັນວ່າການຊ່າງສີມື ຂອງເຂົາເຈົ້າຄົງຈະດີຂຶ້ນ.

## ຄໍາອະທິບາຍ:

ສືບ = ຕິດຕໍ່ກັນມາ.



ດັ້ງເດີມ = ເກົ່າ.

ຜູ້ສມັກ = ຜູ້ຢາກເຮັດ.

ຊໍານານ = ເຮັດໄດ້ດີ

ປະດິດ = ເຮັດຂຶ້ນໃໝ່.

ສາມາດ = ເຮັດໄດ້.

ທັນສມັຍ = ແບບໃໝ່ໆ.

## ຂໍ້ໃຫຍ່ໃຈຄວາມ:

໑. ວິທີການເຝິກຫັດວິຊາຊ່າງເດີມ.

໒. ວິຊາຊ່າງພາໃຫ້ຫາກິນສະດວກ.

໓. ວິຊາຊ່າງຈະເຈີນຂຶ້ນໄດ້ຍ້ອນການເຝິກຫັດ

## ຄຳຖາມ:

ພວກຊ່າງສີມືທີ່ຫາກິນຢູ່ຕາມບ້ານເຮົາໄດ້ຮຽນວິຊາມາແຕ່ໃສ?
ເພິ່ນເຝິກຫັດວິຊາຊ່າງໃຫ້ກັນຢ່າງໃດ?
ເພື່ອຢາກຫາກິນສະດວກເນື້ອ ບັງໜຸ່ມເຮົາຄວນເຮັດຢ່າງໃດ?
ເພື່ອຢາກໃຫ້ວິຊາຊ່າງດີຂຶ້ນເຮົາຄວນເຝິກຫັດຢູ່ໃສ?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນີ້ໝົດທຸກຂໍ້:





## ໕໔. ການອຸດສາຫະກັມແລະວິຊາຊ່າງສີມືພາຍໃນປະເທດ

ຢູ່ຕາມໝູ່ບ້ານ ໃນເຂດແຂວງຕ່າງໆ ການອຸດສາຫະກັມຄອບຄົວ ໄດ້ທຳກັນຢູ່ທົ່ວ ພຣະຣາຊອານາຈັກ ພວກຜູ້ຍິງທຸກຄົນ ຮູ້ຈັກເຂັນຝ້າຍ ລ້ຽງໄໝ ເຮັດຫູກສິ້ນ ຜ້າບຸ່ງ ແລະແຜ່ນແພ ພວກຜູ້ຊາຍ ຮູ້ຈັກວິຊາສານ ເຮັດເຄື່ອງໄມ້ ປັ້ນດິນ ຕີເຫຼັກ ຕີເງິນ ຕີຄຳ ເປັນຕົ້ນ.

ຕາມບ້ານໃຫຍ່ ແລະຕາມເມືອງຕ່າງໆ ການອຸດ

ສາຫະກັມຂອງຄອບຄົວ ໄດ້ຂຍາຍອອກຢ່າງກວ້າງຂວາງ. ແມ່ເຮືອນຫຼາຍຄົນ ໄດ້ລົງທຶນຕໍ່າຜ້າຊິ່ນ ແລະແພດອກ ໃຫ້ເງິນ ໃຫ້ຄຳ ແລ້ວສົ່ງອອກໄປຂາຍ ຕາມທ້ອງຕລາດ ພາຍໃນແລະນອກປະເທດ ການອຸດສາຫະກັມຕໍ່າແພນີ້ມີແພ່ຫຼາຍ ເກືອບທົ່ວທຸກແຂວງ ເທົ່າທີ່ໄດ້ສັງເກດຢູ່ຕລາດນັດທົ່ວທຸກແຫ່ງ ເປັນຕົ້ນໃນປາງບຸນທາດຫຼວງ. ໝົດທຸກແຂວງໄດ້ນຳ ເອົາເຄື່ອງສິລປະກັມທຸກຢ່າງມາສະແດງ ປະເທດເພື່ອນບ້ານ ຫຼືປະເທດທີ່ຢູ່ຫ່າງໄກ ກໍຍັງມີການອຸດສາຫະກັມ ຂອງຄອບຄົວເໝືອນກັນ ກັບປະເທດເຮົາ ແຕ່ວ່າການກະທຳຂອງເຂົາເຈົ້າໄດ້ໃຊ້ເຄື່ອງຈັກ ຫຼືກົນຢ່າງທັນສມັຍ.

ຢູ່ບ້ານເຮົາ ມີຊັບທັມມະຊາດຫຼາຍຢ່າງ ແຕ່ວ່າການຜລິດເອົາຜົນ ຈາກສິ່ງເຫຼົ່ານີ້ ຍັງບໍ່ທັນພຽງພໍ ຈຳເປັນເຮົາຈຶ່ງໄດ້ສັ່ງຊື້ ເຄື່ອງທີ່ຜລິດແລ້ວ ຢ່າງຫຼວງຫຼາຍຈາກຕ່າງປະເທດ ເຂົ້າມາບ້ານເຮົາ ສ່ວນຄ່າພາສີ ແລະຄ່າຂົນສົ່ງ ສິນຄ້ານີ້ໄດ້ທະວີຂຶ້ນ ຫຼາຍກວ່າລາຄາຊື້ ຢູ່ນອກປະເທດ.



## ຄຳອະທິບາຍ:

ການອຸດສາຫະກັມ = ການເຮັດສິ່ງຂອງໃຫ້ເປັນສິນຄ້າ.

ລົງທຶນ = ອອກເງິນເຮັດການຄ້າ.

ຕລາດນັດ = ຕລາດລົງເປັນຄັ້ງຄາວເພື່ອສະແດງຂອງສິນຄ້າ

ເຄື່ອງສິລປະກັມ = ເຄື່ອງທີ່ເຮັດດ້ວຍສີມື.

ຊັບທັມມະຊາດ = ສິ່ງຂອງທີ່ເກີດມີມາເອງຕົວຢ່າງໄມ້ຫີນໂລຫະ.

ເຄື່ອງຜລິດ = ເຄື່ອງທີ່ໄດ້ເຮັດເປັນຮູບແລ້ວ.

## ຂໍ້ໃຫ່ຍໃຈຄວາມ:

໑. ການອຸດສະຫະກັມ ແລະວິຊາຊ່າງພາຍໃນປະເທດເຮົາ.

໖. ການຂຍາຍການອຸດສາຫະກັມຂອງຄອບຄົວ.

໗. ການແລກປ່ຽນຜົນທີ່ຜລິດແລ້ວຈາກຕ່າງປະເທດ.

## ຄຳຖາມ:

ການອຸດສາຫະກັມທົ່ວພຣະຣາຊອານາຈັກມີອັນໃດແດ່?
ຊາວລາວເຮົາຂຍາຍການອຸດສາຫະກັມຄອບຄົວປ່າງໃດ?
ເປັນຫຍັງ ພວກຕ່າງປະເທດຈຶ່ງຜລິດເຄື່ອງໄດ້ຫຼາຍກວ່າເຮົາ?
ຊັບທັມມະຊາດຢູ່ປະເທດເຮົາມີອັນໃດແດ່?

## ຫັດແຕ່ງເລື່ອງ:

ໃຫ້ຂຽນຕອບຕາມຄຳຖາມຢູ່ເທິງນັ້ນໝົດທຸກຂໍ້





# ໕໕. ການຄະມະນາຄົມທາງບົກ

ບ້ານຂອງເຮົາ ຕັ້ງຢູ່ເກ້ອງຖິ່ນແຫ່ງນຶ່ງ ມີຖນົນໃຫ່ຍຜ່ານໄປໃກ້ໆ ແຕ່ກ່ອນຢູ່ບ້ານເຮົາ ມີແຕ່ທາງນ້ອຍ ຫຼື ທາງກວຽນ ທາງເຫຼົ່ານັ້ນຄົດໂງ້ງ ໄປຕາມຕີນທົ່ງ ຫຼື ຕີນດົງ ຊາວບ້ານຈະໄປມາຫາສູ່ພີ່ນ້ອງບ້ານໃກ້ຄຽງ ມັກໄດ້ນອນແຮມຄືນ ຍ້ອນຫົນທາງເວີ້ງ.

ມາບັດນີ້ ຣັຖບານໄດ້ສ້າງ ຖນົນໃຫ່ຍຫຼາຍເສັ້ນ ຈາກແຂວງຕ່າງໆ ຕິດຕໍ່ໃສ່ກັນ ແລະເລີຍໃສ່ຕ່າງປະ

ເທດ ການສ້າງຖນົນໃນສມັຍນີ້ ແລ້ວໄວຫຼາຍ ເພິ່ນໃຊ້ຣົດດຸດ ດຸດເປັນທາງ ແລະແປງຮ່ອງໄປພ້ອມໂລດ ປູ່ບາງທ້ອງຖິ່ນ ພວກຊາວບ້ານກໍໄດ້ພ້ອມພຽງກັນ ເຮັດທາງຖນົນນ້ອຍ ແຕ່ບ້ານຂອງຕົນ ໄປຕໍ່ໃສ່ຖນົນໃຫຍ່ ແລະຈາກບ້ານນີ້ ໄປຫາບ້ານນັ້ນ.

ປູ່ປະເທດທີ່ຈະເຣີນອື່ນໆ ເພິ່ນໄດ້ສ້າງທາງ ຣົດໄຟຫຼາຍສາຍ ໄປສູ່ເມືອງທ່າກຳປັ່ນ ຫຼືໄປສູ່ພາກຕ່າງໆ ແລະຕິດຕໍ່ໃສ່ປະເທດນອກ ປູ່ກາງນະຄອນຫຼວງ ຫຼືຕາມຫົວເມືອງສຳຄັນ ຖນົນຫຼາກເສັ້ນ ລ້ວນແຕ່ປູຊີມັງ ຫຼືລາດປາງ ນອກຈາກນີ້ ຍັງມີທາງຣົດຣາງໃຕ້ດິນ ແລະເຫົາງຫຼັງຄາ ແນ່ງໄປຕາມຖນົນ ສາຍສຳຄັນຕ່າງໆ.

ຖນົນຫົນທາງແມ່ນສ່ວນນຶ່ງ ແຫ່ງຄວາມຈະເຣີນຂອງປະເທດ.

## ຄຳອະທິບາຍ:

ການຄະມະນາຄົມ = ການໄປແລະການມາ.



ແຮມຄືນ = ຄ້າງຄືນ.

ລາດປາງ = ປູປາງ.

ຈະເຣີນ = ຮຸ່ງເຮືອງ.

## ຂໍ້ໃຫຍ່ໃຈຄວາມ:

໑. ທາງກວຽນແຕ່ກ່ອນ.

໒. ຖນົນຫົນທາງໃນສມັຍນີ້.

໓. ປໂຍດຂອງຖນົນຫົນທາງ.

## ຄຳຖາມ:

ທາງບ້ານເຮົາແຕ່ເກົ່າກ່ອນກັບດຽວນີ້ຕ່າງກັນປ່າງໃດ?

ປັດຈຸບັນນີ້ການສ້າງທາງຂອງຣັຖບານເປັນຢ່າງໃດ?
ການສ້າງທາງທຸກວັນນີ້ເພິ່ນໃຊ້ຫັຍງ?
ປູ່ປະເທດທີ່ຈະເຮັດຖນົນຫົນທາງເປັນຢ່າງໃດ?
ນອກຈາກຖນົນຫົນທາງຕາມທັມມະດາແລ້ວ
ເພິ່ນໄດ້ສ້າງທາງຢ່າງໃດອີກແດ່?
ທາງຖນົນທາງມີປໂຍດຢ່າງໃດ?

## ຫັດແຕ່ງເລື່ອງ:

ໃຫ້ຫາເນື້ອຄວາມຕື່ມໃສ່ບ່ອນຍະໄວ້ໃຫ້ຖືກຕ້ອງ:
ຖນົນຫົນທາງ.
ແຕ່ກ່ອນທາງບ້ານເຮົາ... ໄປຕາມ ... ໃນສມັຍນີ້
....ແລ້ວໄວເພາະເພິ່ນໃຊ້.... ນອກຈາກຖນົນ
ຫົນທາງປະເທດສິວິໄລຍັງມີ......
ຖນົນຫົນທາງພາໃຫ້ເຮົາ....





# ໕໖. ການຄະມະນາຄົມທາງນ້ຳ

ໃນແຂວງເຮົາ ມີຫຼາຍໝູ່ບ້ານ ແລະຫຼາຍເມືອງ ຕັ້ງຢູ່ຕາມແຄມນ້ຳຂອງ ຄືກັນກັບບ້ານເຮົາ. ພວກຣາສດອນໃນແຖບນີ້ ອາສັຍນ້ຳຂອງ ເປັນທາງທຽວ ໄປມາ ຫາສູ່ກັນ.

ແຕ່ກ່ອນ ການທ່ອງທ່ຽວໄປມາ ຕາມນ້ຳຂອງ ແລະລຳນ້ຳຕ່າງໆ ຊັກຊ້າບ້ອນມີແຕ່ແກ້ງ ແຕ່ຮ່ອມອັນ

ກັບການ

ຕໍ່ມາ ນ້ຳຂອງແລະສາຂາຂອງມັນ ກໍໄດ້ຖືກດັດແປງ ເພິ່ນໄດ້ຂະເບີດຫີນຕາມແກ້ງ ສ້າງປ້ອມແລະປາຍປ່ອມ ໝາຍແລວນ້ຳໄວ້ ດັ່ງນັ້ນ ການທ່ຽວເຮືອຈຶ່ງດີຂຶ້ນ ກວ່າແຕ່ເກົ່າ.

ໃນປັດຈຸບັນນີ້ ເພິ່ນມີອົງການ ປັບປຸງລຳນ້ຳຂອງ ແລະນ້ຳອື່ນໆໄວ້ແລ້ວ ເພິ່ນຈະໄດ້ສ້າງເຂື່ອນກັ້ນນ້ຳ ເພື່ອປໂຍດອັນຍິ່ງໃຫ່ຍຂອງປະເທດ ໃນການສ້າງກຳລັງໄຟຟ້າ ການປູກຝັງ ແລະການເດີນເຮືອ.

ປູປະເທດໃກ້ຄຽງເຮົາ ແລະປະເທດອື່ນໆ ເພິ່ນໄດ້ຂຸດຄອງ ເພື່ອໃຫ້ລຳນ້ຳ ຫຼືທະເລລ່ວງໃສ່ກັນ ຄອງໃຫ່ຍທີ່ສຸດ ໃນໂລກຄື ຄອງຊູເອດ ແລະຄອງປານາມາ.

ລຳນ້ຳ ທະເລ ແລະມະຫາສມຸດ ພາໃຫ້ການໂດຍສານ ແລະການຂົນສົ່ງສິນຄ້າ ໄປທາງນ້ຳ ໄດ້ປ່າງຫຼວງຫຼາຍ.



## ຄຳອະທິບາຍ:

ສາຂາ = ລຳນ້ຳນ້ອຍໄຫຼຕົກໃສ່ນ້ຳໃຫ່ຍ.
ປ້ອມ = ຫຼັກໝາຍນ້ຳ
ແລວນ້ຳ = ຮ່ອມນ້ຳທີ່ເຮືອທ່ຽວໄດ້.
ອົງການ = ກິຈການທີ່ໂຮມກັນຕັ້ງຂຶ້ນເປັນໝູ່.
ຄອງ = ຮ່ອງໃຫ່ຍທີ່ຄົນຂຸດ.
ໂດຍສານ = ອາສັຍໄປນຳ.

## ຂໍ້ໃຫ່ຍໃຈຄວາມ :

໑. ການທ່ຽວທາງນ້ຳແຕ່ເກົ່າກ່ອນ.
໒. ການທ່ຽວທາງນ້ຳສມັຍນີ້.
໓. ການປັບປຸງແລະຂຍາຍການເດີນທາງທາງເຮືອ.
໔. ປໂຍດຂອງການຄມະນາຄົມທາງນ້ຳ.

## ຄຳຖາມ :

ການທ່ຽວທາງນ້ຳແຕ່ເກົ່າກ່ອນກັບດຽວນີ້ຕ່າງກັນຢ່າງໃດ?
ເພິ່ນໄດ້ດັດແປງລຳນ້ຳຂອງແລະລຳນ້ຳຕ່າງໆຢ່າງໃດແດ່?
ເພິ່ນຈະສ້າງເຂື່ອນກັ້ນນ້ຳຂອງເພື່ອປໂຍດອັນໃດ?
ການຂຸດຄອງໃຫ້ລຳນ້ຳຫຼືທະເລລ່ວງໃສ່ກັນມີປໂຍດຢ່າງໃດ!
ການຂົນສົ່ງທາງທະເລດີກວ່າທາງນ້ຳຂອງບ້ານເຮົາບໍ? ເປັນຫຍັງ?

## ຫັດແຕ່ງເລື່ອງ :

ໃຫ້ຫາເນື້ອຄວາມຕື່ມໃສ່ບ່ອນຍະໄວ້ ໃຫ້ຖືກຕ້ອງ :

- ການເດີນທາງນ້ຳ-

ການເດີນທາງນ້ຳແຕ່ກ່ອນ ... ຍ້ອນນີ້ ....
ເພິ່ນ... ເພື່ອໃຫ້ເຮືອແລະກຳປັ່ນເດີນໄດ້ຖືກປ່ອງທາງ .... ແລະ .... ເປັນຄອງໃຫຍ່ທີ່ສຸດໃນໂລກ. ການເດີນທາງ ທາງນ້ຳ.





## ໕໗. ການຄະມະນາຄົມທາງອາກາດ

ແຕ່ກ່ອນ ຢູ່ໃນປະເທດເຮົາ ມີແຕ່ການເດີນທາງ ທາງນ້ຳແລະທາງບົກ.

ໃນສມັຍນີ້ ຍ້ອນຄວາມກ້າວໜ້າ ຂອງນັກວິທຍາສາດ ຄົນເຮົາສາມາດເດີນທາງ ທາງອາກາດໄດ້ ດ້ວຍການໃຊ້ຍົນເຫາະ ເປັນຍານພາຫນະ.

ສະນັ້ນ ປະເທດເຮົາຈຶ່ງມີ ເດີ່ນເຮືອບິນຢູ່ຫຼາຍແຫ່ງ ຕາມບ້ານ ຫຼືຕາມເມືອງ ບ່ອນສຳຄັນ ແຕ່ວ່າ ການສ້າງເດີ່ນເຮືອບິນ ຍັງນັບມື້ທະວີຂຶ້ນ ດ້ວຍຄວາມເອົາໃຈໃສ່ ຂອງຣາຊການ ແລະປະຊາຊົນ.

ສ່ວນສາຍການບິນ ພາຍໃນປະເທດນັ້ນ ຄືຈາກນະຄອນຫຼວງວຽງຈັນ ໄປຕິດຕໍ່ໃສ່ແຂວງຕ່າງໆ ນອກຈາກນັ້ນ ປະເທດເຮົາຍັງໄດ້ຕິດຕໍ່ ກັບສາຍການບິນ ຂອງທຸກປະເທດໃນໂລກ ໂດຍຜ່ານທາງບາງກອກ ໄຊ່ງ່ອນ ພົນມເປັນ... ໃນທຳນອງດຽວກັນນີ້ ປະເທດຕ່າງໆ ກໍມີສາຍການບິນ ຂອງແຕ່ລະປະເທດ ຕິດຕໍ່ໃສ່ກັນ.

ການເດີນທາງ ທາງອາກາດນັ້ນ ຍົນເຫາະບິນໄປໄດ້ທຸກເວລາ ນັກບິນອາໄສແຜນທີ່ ເຂັມຊີ້ທິດ ເຄື່ອງສົ່ງ ແລະຮັບວິທະຍຸ ພາໃຫ້ຮູ້ຈັກ ການເດີນໄປມາ. ຢູ່ຕາມເດີ່ນເຮືອບິນໃຫຍ່ທຸກແຫ່ງ ມີຫໍກວດການບິນ ເພື່ອຕິດຕໍ່ ແລະແນະນຳ ຍົນທຸກລຳທີ່ບິນຢູ່ ເທິງອາກາດໃຫ້ລົງ ຫຼືຂຶ້ນໄດ້ ທັງກາງເວັນແລະກາງຄືນ.

ການຄະມະນາຄົມທາງອາກາດ ພາໃຫ້ການເດີນທາງ ໄດ້ຮັບຄວາມສະດວກ ແລະໄວທັນໃຈ.

## ຄຳອະທິບາຍ:

ສມັຍນີ້ = ດຽວນີ້
ນັກວິທະຍາສາດ = ຜູ້ມີຄວາມຮູ້ຫຼາຍໃນການຄົ້ນຄວ້າດ້ານຕ່າງໆ.



ສາມາດ = ເຮັດໄດ້.
ຍານພາຫະນະ = ເຄື່ອງຈັກໃຊ້ຂີ່ແລະຂົນຂອງ.
ທຳນອງດຽວ = ດັ່ງດຽວ ຢ່າງດຽວ.

## ຂໍ້ໃຫຍ່ໃຈຄວາມ:

໑. ກຳເນີດຂອງການເດີນທາງ ທາງອາກາດ.
໒. ການຄະມະນາຄົມທາງອາກາດພາຍໃນແລະນອກປະເທດ.
໓. ວິທີທາງຊ່ອຍເຫຼືອ ການບິນ.
໔. ຜົນສຳຄັນຂອງການເດີນທາງ ທາງອາກາດ

## ຄຳຖາມ:

ແຕ່ກ່ອນມີການເດີນທາງ ທາງອາກາດບໍ?
ດຽວນີ້ເພິ່ນເດີນທາງ ທາງອາກາດດ້ວຍຫຍັງ?

ໃນປະເທດເຮົາສາຍການບິນຈາກນະຄອນວຽງຈັນ
ໄປຕິດຕໍ່ໃສ່ແຂວງໃດແດ່?
ແລະປະເທດນອກເດ?
ນັກບິນອາສັຍຫຍັງແດ່ເພື່ອຄວາມສະດວກໃນ
ການບິນ?
ການເດີນທາງ ທາງອາກາດດີຢ່າງໃດແດ່?

## <u>ຫັດແຕ່ງເລື່ອງ:</u>

ໃຫ້ຫາເນື້ອຄວາມຕື່ມໃສ່ບ່ອນຍະໄວ້ໃຫ້ຖືກຕ້ອງ:

ການເດີນທາງ ທາງອາກາດ

ທຸກວັນນີ້ຄົນເຮົາເດີນທາງ.... ໂດຍອາສັຍຂີ່.. ເດີນເຮືອບິນມີຢູ່ເກືອບທຸກແຫ່ງໃນ...ສາຍການ ບິນ....ຕິດຕໍ່ໃສ່ແຂວງຂອງເຮົາແລະທຸກ.... ໃນໂລກ.ການເດີນທາງ.... ສະດວກແລະໄວ ກັນໃຈ.





# ໕໗. ການຂົນສົ່ງທາງບົກ

ແຕ່ກ່ອນ ຊາວບ້ານເຮົາຈະເດີນທາງ ຫຼືຂົນສົ່ງ ຂອງ ຕ້ອງໃຊ້ແຕ່ແຮງຄົນ ຫຼືແຮງສັດ ຫາບ ຫາມ ເປ້ ຕ່າງ ແກ່ ຫຼືຂີ່ ພາຫະນະທີ່ໃຊ້ໂດຍສານ ແລະ ຂົນສົ່ງ ມີຄົນເຊີດ ລໍ້ ແລະກວຽນ ການຂົນສົ່ງວິທີນີ້ໄດ້ ໜ້ອຍ ແລະຊັກຊ້າ ທັງເປືອງແຮງ.

ມາບັດນີ້ ຄົນເຮົາໄດ້ຫາວິທີ ຂົນສົ່ງທາງດິນ ທາງ ນ້ຳ ແລະທາງອາກາດຂຶ້ນອີກ ທາງບົກເພິ່ນໃຊ້ລົດຖີບ ລົດຈັກ ລົດໂດຍສານແລະລົດຂົນສົ່ງ.

ປູ່ຕ່າງປະເທດ ເພິ່ນຍັງມີລົດລາງ ແລະລົດໄຟ ລົດໄຟກະບວນນຶ່ງບັນທຸກ ໄດ້ຫຼາຍຮ້ອຍຄົນ ແລະສິນຄ້າໄດ້ຫຼາຍພັນໂຕນ.

ການໂດຍສານ ແລະຂົນສົ່ງທາງບົກ ໃນສມັຍນີ້ ໄດ້ພາໃຫ້ ປະຊາຊົນທົ່ວໂລກ ມີຄວາມພໍໃຈ.

## ຄຳອະທິບາຍ:

ຕ່າງ = ມັດເຄື່ອງໃສ່ຫຼັງສັດເພື່ອໃຫ້ມັນຕ່າງໄປ.
ພາຫນະ = ເຄື່ອງແລະສັດທີ່ໃຊ້ຂີ່ແລະຂົນສົ່ງ.
ລົດລາງ = ລົດທີ່ແລ່ນດ້ວຍໄຟຟ້າເທິງລາງເຫຼັກ
ກະບວນ = ໝວດນຶ່ງໝູ່ນຶ່ງ.
ໂຕນ = ນ້ຳໜັກພັນກິໂລ.

## ຂໍ້ໃຫຍ່ໃຈຄວາມ:

໑. ການຂົນສົ່ງແຕ່ກ່ອນແລະດຽວນີ້.
໒. ການຂົນສົ່ງທີ່ຍັງບໍ່ທັນມີຢູ່ໃນປະເທດເຮົາ.
໓. ຄຸນຄ່າຂອງເຄື່ອງໃຊ້ສຳລັບບັນທຸກຄົນໂດຍສານແລະຂົນສົ່ງສິນຄ້າທາງບົກ.



## ຄຳຖາມ:

ເຄື່ອງທີ່ໃຊ້ຂົນສົ່ງແລະໂດຍສານທາງດິນຢູ່ບ້ານເຮົາມີອັນໃດແດ່?
ຢູ່ໃນເມືອງເດ?
ການຂົນສົ່ງທາງລົດໄຟມີດີຢ່າງໃດ?
ເປັນຫຍັງຄົນເຮົາຈຶ່ງພໍໃຈນຳການເດີນທາງທາງບົກເວລານີ້?

## ຫັດແຕ່ງເລື່ອງ:

ໃຫ້ຫາເນື້ອຄວາມຕື່ມໃສ່ບ່ອນຍະໄວ້ໃຫ້ຖືກຕ້ອງ

ການຂົນສົ່ງແຕ່ເກົ່າກ່ອນ

ເພື່ອຂົນສົ່ງສິ່ງຂອງດີເຂົ້າເປືອກແລະເຂົ້າສານພໍ່ຂ້ອຍໃຊ້.... ເມື່ອລາວໄປຄ້າຕ່າງເມືອງລາວຂີ່.... ຈົນເຖິງບາງກອກ. ເວລາກັບມາລາວໄດ້ເວົ້າວ່າການເດີນທາງສມັຍນີ້....



## ໕໙. ຄວາມລະມັດລະວັງ ໃນການເດີນຕາມຖນົນ

ຕາມທ້ອງຖນົນ ມີຄົນແລະຣົດ ເດີນສັບສົນໄປມາ ຢູ່ບໍ່ຂາດ ແລະມັກມີອັນຕະລາຍ ເກີດຂຶ້ນຢູ່ເລື້ອຍໆ. ລາງເທື່ອ ແມ່ນຣົດຕຳກັນ ລາງເທື່ອ ກໍແມ່ນຣົດຢຽບຄົນ ຈົນບາດເຈັບ ແລະເຖິງແກ່ຄວາມຕາຍກໍມີ.

ເພື່ອຫຼີກເວັ້ນເຫດຮ້າຍ ໃນທ້ອງຖນົນຫຼວງ ເຮົາຕ້ອງມີຄວາມລະມັດລະວັງຢູ່ສເມີ. ສນັ້ນເມື່ອເຮົາຍ່າງ ຂີ່ຣົດ ຫຼື ຈູງສັດ ຕ້ອງເດີນຕາມແຄມທາງ ເບື້ອງຂວາມື ຂອງຕົນເລື້ອຍໆ ເຮົາບໍ່ຄວນຢຸດຢູ່ກາງທາງ ໃນເມື່ອບໍ່ມີ



ການຈຳເປັນ. ກ່ອນຈະຂ້າມທາງ ເຮົາຕ້ອງຫຼຽວຊ້າຍ ຫຼຽວຂວາ ຖ້າເຫັນວ່າ ບໍ່ມີຣົດແລ່ນມາ ກໍຣີບຂ້າມ. ຢູ່ຕາມຖນົນໃນເມືອງ ເຮົາຕ້ອງຂ້າມ ບ່ອນເພິ່ນໝາຍໄວ້ ສ່ວນມາກ ຢູ່ໃກ້ທາງຄົນ ເມື່ອເຮົາຢາກໄປກ່ອນຄົນອື່ນ ເຮົາຕ້ອງຫຼີກໄປ ຂ້າງຊ້າຍມື ຂອງເຂົາເຈົ້າ. ຖ້າແມ່ນເຮົາຂີ່ຣົດ ກໍຕ້ອງເຕືອນ ໃຫ້ເຂົາເຈົ້າຊາບ ດ້ວຍສັນຍານຕ່າງໆ. ທາງເສັ້ນໃດ ຫາກມີຂອບກວ້າງ ເຮົາຕ້ອງຍ່າງເທິງຂອບນັ້ນສເມີ. ເວລາໄປຮອດທາງຄົນ ເຮົາຕ້ອງລະວັງ ກ່ອນຈະໄປໜ້າ ຈະລ້ຽວຊ້າຍຫຼືລ້ຽວຂວາ. ເມື່ອເຮົາເຫັນວ່າ ມີຄວາມປອດພັຍແລ້ວຈຶ່ງໄປ. ບ່ອນໃດມີສັນຍານໄຟ ເມື່ອເຮົາເຫັນໄຟແດງ ເຮົາຕ້ອງຢຸດກ່ອນ ເມື່ອໄຟເຫຼືອງຮຸ່ງ ໃຫ້ຫ້າງທ່າໄວ້ ແລະເມື່ອໄຟຂຽວແຈ້ງແລ້ວ ຈຶ່ງເດີນຕໍ່ໄປ. ສ່ວນໄຟຂຽວນ້ອຍ ທີ່ຢູ່ຂ້າງໄຟແດງນັ້ນ ຊີ້ບອກໃຫ້ລ້ຽວ ໄປທາງຂວາໄດ້. ຢູ່ໃນເມືອງໃຫຍ່ ມັກມີທາງໄລ່ງດຽວ ສຳລັບໃຫ້ແຕ່ຂຶ້ນ ຫຼືລ່ອງ ຈະເດີນສວນກັນນັ້ນແມ່ນບໍ່ໄດ້.

ເວລາຍ່າງ ຫຼືຂີ່ຣົດ ເຮົາຢ່າໄດ້ປມາດ ກົດລະບຽບ ຂອງການເດີນຕາມຖນົນ.

## ຄຳອະທິບາຍ:

ທາງຄົບ = ບ່ອນທາງຈຸໃສ່ກັນ.
ຂັ້ນໜ້າ = ໄປກ່ອນ.
ສັນຍານ = ເຄື່ອງໝາຍເຄື່ອງຊີ້ບອກເຄື່ອງເຕືອນ.
ລ້ຽວຊ້າຍ = ໄປທາງຊ້າຍ.
ປອດພັຍ = ບໍ່ມີອັນຕລາຍ.
ທາງໂລ່ງດຽວ = ໄປໄດ້ແຕ່ລ່ອງດຽວ.
ປມາດ = ບໍ່ເຮັດຕາມ.
ກົດລະບຽບ = ຂໍ້ບັງຄັບ.

## ຂໍ້ໃຫ່ຍໃຈຄວາມ:

໑. ອັນຕະລາຍເກີດຈາກການເດີນຖນົນ.
໒. ລະບຽບການເດີນທາງຕາມຖນົນ.



໓. ຄຳເຕືອນໃນການເດີນຖນົນ.

## ຄຳຖາມ:

ການເດີນຕາມຖນົນມັກມີອັນຕະລາຍຢ່າງໃດແດ່?
ເວລາໄປຕາມທາງຕ້ອງເຮັດຢ່າງໃດ?
ຕາມຖນົນໃນເມືອງໃຫ່ຍເຄື່ອງສັນຍານມີຢ່າງໃດແດ່?
ໃຫ້ອະທິບາຍຄວາມໝາຍຂອງໄຟແດງໄຟເຫຼືອງໄຟຂຽວໄຟຂຽວນ້ອຍ?
ເປັນຫຍັງຈຶ່ງຄວນນັບຖືກົດລະບຽບຂອງການເດີນຖນົນ?

## ຫັດແຕ່ງເລື່ອງ:

ໃຫ້ແຕ່ງເລື່ອງທາງເສັ້ນນຶ່ງຂອງບ້ານເຈົ້າ:



# ໔໐ . ການຂົນສົ່ງທາງນ້ຳ

ໃນປະເທດເຮົາ ແຕ່ເກົ່າກ່ອນມີແຕ່ເຮືອຄູ່ ເຮືອພາຍ ແລະແພໄມ້ເຮັ່ງ ເປັນພາຫະນະ ຂົນສົ່ງທາງນ້ຳ. ເພື່ອບັນທຸກຄົນໂດຍສານ ແລະສິນຄ້າ ເພິ່ນໃຊ້ເຮືອກະແຊງ ແລະເຮືອກົນໃຫຍ່ ສຳລັບການໄປມາຫາສູ່ ຫຼືຫາກິນ ເພິ່ນໃຊ້ເຮືອກົນນ້ອຍ ເຮືອການ ແລະເຮືອອຶໄນ.

ມາບັດນີ້ ເພິ່ນໃຊ້ເຮືອຈັກ ແລະກຳປັ່ນ ເພື່ອຂົນສົ່ງຕາມລຳນ້ຳຂອງ ແລະຕາມສາຂາຂອງມັນ.



ຢູ່ປະເທດສິວິໄລອື່ນໆ ນອກຈາກຂົນສົ່ງ ທາງເຮືອຈັກ ຕາມລຳນ້ຳ ແລະຄອງນ້ຳແລ້ວ ເພິ່ນຍັງມີເຮືອໃບລົມ ກຳປັ່ນນ້ອຍຫຼາຍຊະນິດ ທ່ຽວຕາມຝັ່ງທະເລ ແລະເກາະດອນ ການຂົນສົ່ງສິນຄ້າ ຄົນໂດຍສານ ແລະສັດເປັນຈຳນວນຫຼວງຫຼາຍ ໄປສູ່ປະເທດ ຫຼື ທະວີບອື່ນໆ ເພິ່ນໃຊ້ກຳປັ່ນໃຫຍ່ ເປັນພາຫະນະ. ນອກຈາກນີ້ ເພິ່ນຍັງໃຊ້ກຳປັ່ນ ຂະໜາດໃຫຍ່ ເພື່ອບັນທຸກເຮືອບິນ ລົດຍົນ ເຄື່ອງໃຊ້ ທີ່ມີນ້ຳໜັກຕ່າງໆ ກຳປັ່ນຂະໜາດໃຫຍ່ ບາງລຳຍັງໃຊ້ເປັນບ່ອນ ເຮືອບິນຂຶ້ນແລະລົງ ຕາມມະຫາສະມຸດ.

ການຂົນສົ່ງທາງນ້ຳ ແລະທາງອາກາດ ພາໃຫ້ຄົນໂດຍສານ ແລະສິນຄ້າ ໄປທົ່ວເຖິງກັນ ທຸກມຸມໂລກ.

## ຄຳອະທິບາຍ:

ບັນທຸກ = ເອົາໃສ່.
ເຮືອກະແຊງ = ເຮືອຄູ່ຂະໜາດໃຫຍ່.

ເຮືອກູບ : ເຈາະລຳໄມ້ໃຫ້ເປັນເຮືອ.
ເຮືອກາບ : ເຮືອເຮັດດ້ວຍແປ້ນ.
ທົ່ວມຸມໂລກ : ທຸກແຫ່ງຂອງໂລກ.

## ຂໍ້ໃຫຍ່ໃຈຄວາມ:

໑. ພາຫນະຂົນສົ່ງຊະນິດຕ່າງໆ ຂອງລາວເຮົາແຕ່ກ່ອນແລະປັດຈຸບັນນີ້.
໒. ພາຫນະຂົນສົ່ງຂອງປະເທດຈະເລີນອື່ນໆ.
໓. ການຂົນສົ່ງຄົນແລະສິນຄ້າຂອງໂລກ.

## ຄຳຖາມ:

ການຂົນສົ່ງທາງບ້ານແຕ່ເກົ່າກ່ອນເພິ່ນໃຊ້ຫັຍງ?



ແລະປັດຈຸບັນເດ?
ຢູ່ປະເທດສີວິໄລການຂົນສົ່ງທາງທະເລເພິ່ນໃຊ້ຫັຍງ?
ການຂົນສົ່ງທາງທະເລແລະທາງອາກາດໄດ້ຜົນຕ່າງກັນປານໃດ?

## ຫັດແຕ່ງເລື່ອງ:

ໃຫ້ເຈົ້າແຕ່ງເລື່ອງເຮືອຫຼືແພລຳນຶ່ງ:

## ແຜນແຕ່ງເລື່ອງ:

ກ ຕັ້ງຕົ້ນເລື່ອງ.
ຂ. ຮູບປະພັນແລະສິ່ງປະກອບ.
ຄ. ການໃຊ້ເຮືອຫຼືແພ.
ງ. ນ້ວນທ້າຍເລື່ອງ.



# ໖໑. ການຂົນສົ່ງທາງອາກາດ

ແຕ່ສມັຍກ່ອນ ການທ່ອງທ່ຽວ ທາງອາກາດ ບໍ່ເຄີຍມີ ໃນບ້ານເມືອງຂອງເຮົາ ການໂດຍສານ ແລະຂົນສົ່ງ ມີແຕ່ທາງບົກແລະທາງນໍ້າ.

ມາບັດນີ້ ໃນປະເທດເຮົາ ເພິ່ນໄດ້ໃຊ້ເຮືອບິນ ເປັນຍານພາຫນະ ໂດຍສານແລະຂົນສົ່ງ ທາງອາກາດ ຂຶ້ນຕື່ມອີກ. ເຮືອບິນໄດ້ຈາກນະຄອນວຽງຈັນ ໄປຕິດຕໍ່ໃສ່ ຫົວເມືອງສຳຄັນ ໃນແຂວງຕ່າງໆ.

ການໂດຍສານ ແລະຂົນສົ່ງ ທາງອາກາດ ຂອງ



ປະເທດສີວິໄລ ມີເຮືອບິນຫລາຍແບບ ຫລາຍຊະນິດ. ເຮືອບິນບາງຊະນິດ ເດີນດ້ວຍຫມາກປີ້ນ ແລະບາງຊະນິດກໍເດີນດ້ວຍອາຍພົ່ນ. ສ່ວນເຮືອບິນຂນາດໃຫ່ຍ ໃຊ້ບັນທຸກສິ່ງຂອງ ໄດ້ຫລາຍໂຕນ ແລະຄົນໂດຍສານ ໄດ້ເປັນຈຳນວນ ບໍ່ຕ່ຳກວ່າຮ້ອຍ ນອກຈາກນັ້ນ ຍັງມີຍານອະວະກາດເດີນຮອບໂລກ ຢ່າງໄວທີ່ສຸດ ຈົນແນມບໍ່ທັນ.

ການໂດຍສານ ແລະຂົນສົ່ງ ທາງອາກາດ ພາໃຫ້ຄົນເຮົາ ໄດ້ຮັບຄວາມສະດວກ ແລະວ່ອງໄວ ກວ່າທາງນໍ້າ ແລະທາງບົກຫລາຍເທົ່າ.

## ຄຳອະທິບາຍ:

ສມັຍ = ປາງ ເວລາ ຍາມ ຄາວ.
ຍານພາຫນະ = ເຄື່ອງພາໄປ
ຍານອະວະກາດ = ຍານທີ່ເດີນດ້ວຍຈຣວດ.

## ຂໍ້ໃຫ່ຍໃຈຄວາມ :

໑. ຍານພາຫນະຂົນສົ່ງທາງອາກາດ ຂອງປະເທດເຮົາໃນສມັຍນີ້.

໔. ຍານພາຫນະຂົນສົ່ງທາງອາກາດ ຂອງ ປະເທດສີວິໄລ.

໕. ຄຸນຄ່າຂອງການຂົນສົ່ງທາງອາກາດ.

## ຄຳຖາມ :

ແຕ່ກ່ອນການຂົນສົ່ງ ແລະໂດຍສານໃນປະເທດເຮົາມີທາງໃດແດ່?
ການໂດຍສານແລະຂົນສົ່ງທາງບົກ ແລະທາງອາກາດເຈົ້າມັກໄປທາງໃດ.
ເປັນຫຍັງຈຶ່ງມັກທາງນັ້ນ?
ຢູ່ປະເທດສີວິໄລມີເຮືອບິນແບບໃດແລະຂນາດໃດແດ່?
ການໂດຍສານແລະຂົນສົ່ງແມ່ນທາງໃດໄວກວ່າກັນ?

## ຫັດແຕ່ງເລື່ອງ:

ໃຫ້ແຕ່ງເລື່ອງເຮືອບິນລຳນຶ່ງທີ່ເຈົ້າໄດ້ເຫັນ





# ໓໑. ບ້ານຂອງເພື່ອນນັກຮຽນດ້ວຍກັນ

ນັກຮຽນທີ່ມາຮຽນ ຢູ່ໂຮງຮຽນບ້ານເຮົາ ບໍ່ແມ່ນເກີດຢູ່ ກັບບ້ານເຮົາ ໝົດທຸກຄົນ ມີຫຼາຍຄົນທີ່ມາ ຈາກບ້ານ ອ້ອມແອ້ມບ້ານເຮົາ ບ້ານເຫຼົ່ານັ້ນ ມີໜ້ອຍຫຼັງເຮືອນ ຖ້າຈະຕັ້ງໂຮງຮຽນ ຂຶ້ນໃສ່ບ້ານໃຜລາວ ກໍບໍ່ມີນັກຮຽນພຽງພໍ ດັ່ງນັ້ນ ພໍ່ແມ່ຂອງເຂົາ ຈຶ່ງໄດ້ສົ່ງລູກເຂົ້າມາຮຽນ ໃນໂຮງຮຽນບ້ານເຮົາ ນັກຮຽນໝູ່ນີ້ ສ່ວນຫຼາຍເປັນຍາດພີ່ນ້ອງ ເຊື້ອສາຍຂອງເຮົາ ແຕ່ກ່ອນ ພໍ່ແມ່ຂອງເຂົາເຈົ້າ ກໍຢູ່ຮ່ວມບ້ານ ດຽວກັນກັບເຮົາ ເມື່ອ

ຕໍ່ມາ ຊາວບ້ານ ມີຈຳນວນຫຼາຍຂຶ້ນ ພວກພີ່ນ້ອງເຫຼົ່ານີ້ ຈຶ່ງໄດ້ແຍກກັນອອກ ໄປຕັ້ງບ້ານນ້ອຍ ຈຸ້ມກັນຢູ່ ຕາມໄຮ່ແລະຕາມນາ.

ທຸກວັນນີ້ ເຂົາເຈົ້າມີການທຳມາຫາກິນ ຢ່າງສະດວກສະບາຍ ນອກຈາກເຮັດໄຮ່ ເຮັດນາແລ້ວ ເຂົາເຈົ້າບັງສ້າງຮົ້ວສວນ ແລະລ້ຽງສັດຕື່ມອີກ ຊາວບ້ານເຮົາ ກໍໄດ້ໄປຢ້ຽມຢາມ ແລະແລກປ່ຽນ ສິນຄ້າຢູ່ບໍ່ຂາດ.

ເວລາພັກໂຮງຮຽນ ໝູ່ເຮົາກໍໄດ້ໄປທ່ຽວຫຼີ້ນ ບ້ານເພື່ອນນັກຮຽນດ້ວຍກັນ ຢູ່ໃນບ້ານເຫຼົ່ານັ້ນ ການໄປຢ້ຽມຢາມທຸກເທື່ອ ເຮົາມີຄວາມດີໃຈ ເພາະໄດ້ເຫັນພີ່ນ້ອງ ແລະທັງໄດ້ຊົມ ເຄື່ອງປູກຂອງຝັງຕ່າງໆ ເຊັ່ນໝາກມີ້ ໝາກມ່ວງ ໝາກນັດ ແລະອື່ນໆອີກ.

ເຮົາມີຄວາມດີໃຈຫຼາຍ ທີ່ໄດ້ຮ່ຳຮຽນ ຮ່ວມກັບກັບພວກເພື່ອນ ທີ່ຢູ່ບ້ານໃກ້ຄຽງ.

## ຄຳອະທິບາຍ:

ຊົມ = ຊື່ນໃຈໃນສິ່ງທີ່ໄດ້ເຫັນ.



## ຂໍ້ໃຫ່ຽໃຈຄວາມ:

໑. ບ້ານເພື່ອນຂອງເຮົາບໍ່ມີໂຮງຮຽນ.
໒. ຄວາມອອນຊອນເວລາໄປຢ້ຽມຢາມບ້ານຂອງເພື່ອນ.
໓. ຄວາມດີໃຈເວລາເຫັນເພື່ອນພີ່ນ້ອງມາຮຽນຢູ່ໂຮງຮຽນດຽວກັນ.

## ຄຳຖາມ:

ໃນໂຮງຮຽນເຮົາມີເພື່ອນບ້ານອື່ນມາຮຽນບໍ?
ຢູ່ບ້ານໃກ້ຄຽງບ້ານເຮົາເພິ່ນປູກຝັງຫັຽງແດ່?
ໃຫ້ເຈົ້າເລົ່າເຣື່ອງການໄປທ່ຽວຫຼິ້ນຢູ່ຕາມບ້ານເພື່ອນຂອງເຈົ້າເມື່ອເຈົ້າ ໄດ້ອ່ານເຣື່ອງນີ້ເຈົ້າຄິດວ່າຢ່າງໃດ?

## ຫັດແຕ່ງເຣື່ອງ:

ໃຫ້ແຕ່ງເຣື່ອງບ້ານຂອງເຈົ້າ.


ພຣະຣາຊອານາຈັກລາວ
ແຜນທີ່ປົກຄອງ
ປະເທດຈີນ
ປະເທດພະມ້າ
ປະເທດໄທ
ປະເທດກຳພູຊາ
ບາງກອກ